ໝວດວິຊາວິຊາສະເພາະ ສາຍອະນຸບານ

# ວິຊາ: ວິທີສອນຄະນິດສາດສຳລັບເດັກກ່ອນໄວຮຽນ



ວິທະຍາໄລຄູສາລະວັນ

ສົກ 2024

# ວິຊາ:ວິທີສອນຄະນິດສາດສໍາລັບເດັກກ່ອນໄວຮຽນ

**ສາຍອະນຸບານ ປີທີ 4 ພາກຮຽນ IV**


ຮຽບຮຽງໂດຍ:

1. ທ່ານ ນາງ ຄໍາມະລີ ແສງໂສພາ

ກວດແກ້ໂດຍ:

1. ທ່ານ ອຈ ນາງ ລິດສະໄໝ ສີທິຈັກ
2. ທ່ານ ປທ ນາງ ຫວານໃຈ ບົວກາສີ
3. ທ່ານ ນາງ ອ່ອນສາ ວິລາວັນ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

໑໑໑໑໑໑໑໑໑

ວິທະຍາໄລຄູສາລະວັນ

ສະພາວິທະຍາສາດ

ເລກທີ 55 ສພ.ວສ

# ໃບຮັບຮອງ

## ອະນຸມັດຜ່ານການຮັບຮອງການຮຽບຮຽງເອກະສານ ປະກອບການສອນພາກວິຊາສຶກສາເດັກກ່ອນໄວຮຽນ

- **ອີງຕາມ:** ວິໄສທັດຮອດປີ 2030 ຍຸດທະສາດຮອດປີ 2025 ແລະແຜນພັດທະນາຂະແໜງການສຶກສາ ແລະ ກິລາ 5 ປີ.
- **ອີງຕາມ:** ແຜນປັບປຸງຄຸນນະພາບ QA ຂອງກະຊວງສຶກສາທິການ ແລະ ກິລາ, ໃນມາດຕະຖານທີ 10 ຕົວຊີ້ວັດທີ 48-50 ການຄົ້ນຄວ້າວິທະຍາສາດ ແລະ ການບໍລິການ.
- **ອີງຕາມ:** ຂໍ້ຕົກລົງວ່າດ້ວຍພາລະບົດບາດ, ສິດ ແລະ ໜ້າທີ່ ສະພາວິທະຍາສາດຂອງວິທະຍາໄລຄູສາລະວັນ ສະບັບເລກທີ 05/ສພ.ວສ, ລົງວັນທີ 7 ມີນາ 2024.

ຈາກຜົນການກວດສອບ, ກວດກາທາງດ້ານເນື້ອໃນ, ຫຼັກການຂອງບັນດາອະນຸກຳມະການເຫັນວ່າ ບົດຮຽບຮຽງເອກະສານປະກອບການສອນ ວິຊາ: ວິທີສອນຄະນິດສາດສຳລັບເດັກກ່ອນໄວຮຽນ ມີຄວາມຖືກຕ້ອງຕາມເນື້ອໃນຫຼັກສູດທີ່ໄດ້ກຳນົດ ແລະ ສະພາວິທະຍາສາດຈິ່ງໄດ້ຮັບຮອງເອົາປຶ້ມເຫຼັ້ມນີ້ເປັນສ່ວນໜຶ່ງໃນການສິດສອນ ແລະ ຖືກນຳໃຊ້ເຂົ້າໃນກິດຈະກຳການຮຽນ - ການສອນໃນວິທະຍາໄລຄູສາລະວັນ.

| **ຄະນະກຳມະການກວດສອບ** | **ລາຍເຊັນ** |
|---|---|
| ທ່ານ ຊອ ປອ ໄພທອງ ພົງສົງຄາມ | ............................ |
| ທ່ານ ອຈ ປທ ແສນຮັກ ບຸນມີ | ............................ |
| ທ່ານ ອຈ ນາງ ລິດສະໄໝ ສິດທິຈັກ | ............................ |

**ທີ່, ສາລະວັນ, ວັນທີ ........................**

**ປະທານສະພາວິທະຍາສາດ**

ອຈ. ນ ສົມປອງ ແສນທະວີສຸກ

CS ສແກນດ້ວຍ CamScanner

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ
໙໙໙໙໙໙໙໙໙໙

ວິທະຍາໄລຄູສາລະວັນ
ສະພາວິທະຍາສາດ
ພາກວິຊາສຶກສາເດັກກ່ອນໄວຮຽນ

# ໃບຮັບຮອງ
# ການກວດແກ້ບົດຮຽບຮຽງເອກະສານປະກອບການສອນ
# ວິຊາ: ວິທີສອນຄະນິດສາດສຳລັບເດັກກ່ອນໄວຮຽນ

**ພາກວິຊາ**: ສຶກສາເດັກກ່ອນໄວຮຽນ

**ຜູ້ຮຽບຮຽງເອກະສານປະກອບການສອນ**

ທ່ານ ນາງ ຄຳມະລີ ແສງໄສພາ

**ຄະນະກຳມະການກວດແກ້ບົດ** **ລາຍເຊັນ**

ທ່ານ ປທ ນາງ ທອງໃຈ ບົວກາສີ ............................................

ທ່ານ ນາງ ອ່ອນສາ ວິລະວັນ ............................................

ວິທະຍາໄລຄູສາລະວັນ

**ທີ່, ສາລະວັນ, ວັນທີ .........................**

**ພາກວິຊາ..............................**

ລິດສະໄໝ ສິດທິຈັກ

CS ສແກນດ້ວຍ CamScanner

# ຄຳນຳ

ເພື່ອເປັນການປັບປຸງຄຸນນະພາບ ແລະ ປະສິດທິພາບຂອງການສ້າງຄູໃຫ້ສູງ ແນ່ໃສເພີ່ມສະມັດຕະພາບຂອງຄູ ແລະ ພັດທະນາອາຊີບຄູໃຫ້ດີຂຶ້ນເທື່ອລະກ້າວ. ຂ້າພະເຈົ້າໄດ້ຮຽບຮຽງປຶ້ມເຫຼັ້ມນີ້ຂຶ້ນມາເພື່ອຮັບໃຊ້ການຈັດການຮຽນ ການສອນສາຍຄູອະນຸບານໂດຍເນັ້ນການປູກອຸດົມການ, ຄຸນນະທຳ ແລະ ຈິດວິນຍານຂອງຄວາມເປັນຄູໃຫ້ແກ່ນັກຮຽນ ເຮັດໃຫ້ເຂົາເຈົ້າມີທັກສະວິຊາຊີບຄູທີ່ໜັກແໜ້ນ, ເຂົ້າໃຈພັດທະນາການຂອງເດັກນ້ອຍ, ມີຄວາມຮູ້ທົ່ວໄປ ແລະ ຄວາມຮູ້ວິຊາສະເພາະທີ່ແທດເໝາະກັບວິຊາສະເພາະທີ່ຕົນເອງ

ປຶ້ມເຫຼັ້ມນີ້ໄດ້ຮຽບຮຽງຂຶ້ນມາ ເພື່ອນຳໃຊ້ເຂົ້າໃນການຄົ້ນຄ້ວາຮ່ຳຮຽນຂອງຄູ ແລະ ນັກຮຽນໃນວິທະຍາໄລຄູວັນ ໂດຍຜ່ານການກວດແກ້ຈາກວິຊາການຂອງຫ້ອງການ, ຄູສອນໃນສາຍອະນຸບານເພື່ອນຳໃຊ້ເຂົ້າໃນການສິດສອນໃນຂັ້ນຕໍ່ໄປ.

ຫວັງຢ່າງຍິ່ງວ່າ ຄູ-ອາຈານ,ນັກຮຽນ, ນັກສຶກສາ ແລະ ພາກສ່ວນອື່ນໆ ຫາກຍັງພົບເຫັນບັນຫາໃດໜຶ່ງທີ່ບໍ່ເໝາະສົມ, ບໍ່ສອດຄ່ອງ ແລະ ບໍ່ທັນສະພາບ, ກະລຸນາປະກອບຄຳຄິດຄຳເຫັນຂອງຕົນເພື່ອຊ່ວຍປັບປຸງເຮັດໃຫ້ປຶ້ມເຫຼັ້ມນີ້ສົມບູນ ແລະ ມີປະສິດທິຜົນຍິ່ງຂຶ້ນໃນອະນາຄົດ.

ນາງ ຄຳມະລີ ແສງໂສພາ

## ສາລະບານ


**ບົດທີ 1** ແນວຄວາມຄິດກ່ຽວກັບຄະນິດສາດ ........ 1

1. ຄວາມໝາຍຂອງຄະນິດສາດສຳລັບເດັກກ່ອນໄວຮຽນ ........ 1
2. ຄວາມສຳຄັນຂອງຄະນິດສາດສຳລັບເດັກກ່ອນໄວຮຽນ ........ 2
3. ຈຸດປະສົງຂອງການສອນຄະນິດສາດສຳລັບເດັກກ່ອນໄວຮຽນ ........ 3
4. ຫຼັກການສອນຄະນິດສາດສຳລັບເດັກກ່ອນໄວຮຽນ ........ 3
5. ຂອບເຂດເນື້ອໃນຫຼັກສູດຄະນິດສາດສຳລັບເດັກອະນຸບານ ........ 4
6. ອຸປະກອນຄະນິດສາດໃນການຫຼິ້ນເພື່ອຄວາມມ່ວນຊື່ນ ........ 8
   - ➢ ຄວາມໝາຍຂອງສື່ ແລະ ອຸປະກອນການສອນ ........ 12
   - ➢ ຂັ້ນຕອນການດຳເນີນການຜະລິດສື່ສຳລັບເດັກ ........ 13
   - ➢ ຕົວເລກຝາກະຕຸກ ຫຼື ຕົວອັກສອນດ້ວຍຝາກະຕຸກ ........ 17

ໃຈຄວາມ ........ 18

ຄຳຖາມ: ........ 18

**ບົດທີ 2** ການຄຳນວນເບື້ອງຕົ້ນ ........ 19

1. ການສອນຈຳນວນເບື້ອງຕົ້ນ ........ 19
2. ການນັບໄປໜ້າ-ກັບຫຼັງ ........ 21
3. ການນັບຂ້າມ ຫຼື ນັບຕົວເລກທີ່ຂາດຫາຍໄປ ........ 22
4. ການສະແດງຈຳນວນດຽວກັນ ........ 23
5. ຈຳນວນຫຼາຍກ່ວາໜຶ່ງຫົວໜ່ວຍ-ໜ້ອຍກ່ວາໜຶ່ງຫົວໜ່ວຍ ........ 24
6. ເກມມາດຕະການ( ການບວກການລົບ)........ 24
7. ຈຳນວນໃນຮູບແບບປະສົມ ........ 24

**ບົດທີ 3** ວິທີສອນການຽບທຽບ ........ 26

1. ວິທີສອນການປຽບທຽບ ........ 26
2. ການຈັດກິດຈະກຳການຮຽນ-ການສອນການປຽບທຽບ ........ 27
   - 2.1 ວິທີສອນການປຽບທຽບໃຫ່ຍກ່ວາ-ນ້ອຍກ່ວາ ........ 27
   - 2.2 ວິທີສອນການປຽບທຽບຫຼາຍກ່ວາ-ໜ້ອຍກ່ວາ ........ 28
   - 2.3 ວິທີສອນການປຽບທຽບສັ້ນ-ຍາວ, ສູງກ່ວາ-ຕ່ຳກ່ວາ ........ 28
3. ການແຕ່ງບົດສອນ ແລະ ຜະລິດອຸປະກອນ ........ 31
4. ການເຝິກສອນຕົວຈິງ ........ 31

**ບົດທີ 4** ວິທີສອນການລຽງລຳດັບ........ 42

1. ຄວາມໝາຍຂອງການລຽງລຳດັບ ........ 42
2. ການຈັດກິດຈະກຳການຮຽນ-ການສອນການລຽງລຳດັບ ........ 42
   - 2.1 ວິທີສອນການລຽງລຳດັບແຕ່ຕ່ຳຫາສູງ ແລະ ສູງຫາຕ່ຳ ........ 42
   - 2.2 ວິທີສອນການລຽງລຳດັບສັ້ນຫາຍາວ ແລະ ຍາວຫາສັ້ນ ........ 43

2.3 ວິທີສອນການລຽງລຳດັບຕາມຄວາມໝາຍຂອງຈຳນວນ........................................................43
3. ການແຕ່ງບົດສອນ ແລະ ຜະລິດອຸປະກອນ ........................................................................45
4. ການເຝິກສອນຕົວຈິງ ...............................................................................................46
**ບົດທີ 5** ວິທີສອນກ່ຽວກັບການຈຳແນກ..........................................................................56
1 . ຄວາມໝາຍຂອງການຈຳແນກ...................................................................................56
1.1 ການຈັດກິດຈະກຳການຮຽນ-ການສອນການລວມກຸ່ມ...........................................................57
1.2 ການຈັດກິດຈະກຳການຮຽນ-ການສອນການຈັດກຸ່ມ ...........................................................57
2. ການແຕ່ງບົດສອນ ແລະ ຜະລິດອຸປະກອນ ........................................................................60
3. ການເຝິກສອນຕົວຈິງ...............................................................................................60
**ບົດທີ 6** ວິທີສອນການນັບ ..........................................................................................68
1. ວິທີສອນການນັບ ...................................................................................................68
2. ການຈັດກິດຈະກຳການຮຽນ-ການສອນການນັບ…………………………………………….
70
**3**. ການແຕ່ງບົດສອນ ແລະ ຜະລິດອຸປະກອນ…………………………………………..……73
**ບົດທີ 7** ວິທີສອນກ່ຽວກັບຕຳແໜ່ງ.................................................................................88
1. ຄວາມໝາຍຂອງການສອນກ່ຽວກັບຕຳແໜ່ງ…………………..…………………………….
88
2. ກິດຈະກຳການຮຽນ-ການສອນ ແລະ ວິທີສອນກ່ຽວກັບຕຳແໜ່ງ.............................................90
2.1 ວິທີສອນກ່ຽວກັບຕຳແໜ່ງຊ້າຍ- ຂວາ........................................................................90
2.2 ວິທີສອນກ່ຽວກັບໜ້າ- ຫຼັງ ....................................................................................90
2.3 ວິທີສອນກ່ຽວກັບເທິງ-ລຸ່ມ ....................................................................................91
2.4 ວິທີສອນກ່ຽວກັບນອກ-ໃນ......................................................................................92
2.5 ວິທີສອນກ່ຽວໃກ-ໄກ ...........................................................................................93
2.6 ວິທີສອນກ່ຽວກັບຜຸ້ນ-ພີ້.........................................................................................93
3. ການແຕ່ງບົດສອນ ແລະ ຜະລິດອຸປະກອນ.........................................................................94
ໂຄງຮ່າງລາຍວິຊາ……………………………………………………………........……
103

# ບົດທີ 1

# ແນວຄວາມຄິດກ່ຽວກັບຄະນິດສາດ

ເວລາ 10 ຊົ່ວໂມງ

- **ຈຸດປະສົງໃຫ້ນັກຮຽນຄູສາມາດ:**

1. **ອະທິບາຍຄວາມໝາຍຂອງຄະນິດສາດສຳລັບເດັກກ່ອນໄວຮຽນໄດ້**
2. **ບອກຈຸດປະສົງຂອງການສອນຄະນິດສາດສຳລັບເດັກກ່ອນໄວຮຽນໄດ້.**
3. **ບອກຫຼັກການສອນຄະນິດສາດສຳລັບເດັກກ່ອນໄວຮຽນໄດ້**
4. **ບອກ ຂອບເຂດເນື້ອໃນຫຼັກສູດຄະນິດສາດສຳລັບເດັກອະນຸບານໄດ້**
5. **ເຂົ້າໃຈອຸປະກອນຄະນິດສາດໃນການຫຼິ້ນເພື່ອຄວາມມ່ວນຊື່ນ**

## 1. ຄວາມໝາຍຂອງຄະນິດສາດສຳລັບເດັກກ່ອນໄວຮຽນ

ຄະນິດສາດ ໝາຍເຖິງ ວິຊາຮຽນທີ່ເປັນພື້ນຖານໃນການສຶກສາ ທີ່ໃຊ້ໃນການຄິດໄລ່ຂອງຄົນໃນສັງຄົມ,ທຸກຄົນທີ່ເກີດມາແນ່ນອນວ່າຕ້ອງຮູ້ ຈັກຄ່າຈຳນວນ ເພື່ອຈະນຳໃຊ້ໃຫ້ຖືກຕ້ອງໃນການຮຽນຮູ້ເດັກຈະຕ້ອງຮຽນຮູ້ກ່ຽວກັບຄ່າຈຳນວນຕ່າງໆເປັນສິ່ງສຳຄັນໃນການສອນວິຊາຄະນິດສາດ ສຳລັບເດັກກ່ອນໄວຮຽນນີ້,ເປັນການກະກຽມຄວາມພ້ອມພື້ນຖານ ວິຊາຄະນິດສາດ ໄດ້ຢ່າງວ່ອງໄວເພາະວ່າການຮຽນຮູ້ຄ່າຈຳນວນເປັນການພັດທະນາ ຄວາມຮູ້ຄວາມສາມາດ ແລະ ມີຄວາມຄ່ອງແຄ້ວຂອງເດັກອະນຸບານຄວນເລີ່ມເຮັດເປັນກຸ່ມນ້ອຍໆ, ຫຼືເປັນການສ້າງປະສົບການຈາກຄວາມສຳພັນກັບບຸກຄົນອື່ນໆ ສິ່ງທີ່ຈະຊ່ວຍແມ່ນເລີ່ມຈາກຄວາມສາມາດຄ່ອງແຄ້ວໃນການຮູ້ຄ່າຈຳນວນ ແລະ ໃຫ້ເດັກໄດ້ເຝິກແອບແທນຄ່າຈຳນວນເຝິກແອບປຽບທຽບ,ເຝິກແອບຈຳແນກສີ,ສິ່ງຂອງຕ່າງໆ.

ຄະນິດສາດແມ່ນວິຊາໜຶ່ງທີ່ເປັນເລື່ອງນາມມະທຳເປັນຄວາມຄິດທີ່ບໍ່ມີຕົວຕົນທີ່ຈະໃຫ້ເຮົາສາມາດສຳຜັດໄດ້ດ້ວຍອິນຊີທັງຫ້າໃນຊີວິດປະຈຳວັນຂອງພວກເຮົາລ້ວນແຕ່ກ່ຽວພັນກັບຄະນິດສາດເຊັ່ນ:ການປຽບທຽບ, ການລຽງລຳດັບ, ການຈຳແນກວັດຕ່າງໆ, ການຄິດໄລ່ວັດຖຸ,ການແທນວັດຖຸກັບຕົວເລກ, ການຄິດໄລ່ຫາຄ່າຕ່າງໆ... ລ້ວນແຕ່ເປັນຄວາມໝາຍຂອງຄະນິດສາດ, ສະນັ້ນເພື່ອໃຫ້ມະນຸດເຮົາເຂົ້າໃຈງ່າຍໆ ແລະ ສື່ສານກັນໄດ້ສະດວກເພິ່ນຈຶ່ງກຳນົດເປັນສັນຍາລັກດ້ວຍຕົວເລກ ແລະ ເຄື່ອງໝາຍຕ່າງໆທີ່ເປັນຕົວກາງໃນຄະນິດສາດ.

ຄະນິດສາດມີຄວາມໝາຍຢ່າງກວ້າງຂວາງ ແລະ ແຕກຕ່າງກັນເຊິ່ງຂຶ້ນຢູ່ກັບພື້ນຖານຂອງຜູ້ຕອບວ່າຈະເບິ່ງຄະນິດສາດໃນດ້ານໃດ, ແຕ່ຄົນທົ່ວໄປມັກຈະເບິ່ງຄະນິດສາດວ່າເປັນວິຊາທີ່ກ່ຽວຂ້ອງກັບການຄຳນວນເຊັ່ນ ການບວກລົບ, ຄູນ ແລະ ຫານ ເຊິ່ງເປັນຄວາມໝາຍທີ່ແຄບເກີນໄປ. ວິຊາຄະນິດສາດ ເປັນວິຊາໜຶ່ງທີ່ມີລັກສະນະເປັນນາມມະທຳທີ່ກ່ຽວຂ້ອງກັບຄວາມຄິດ, ຂະບວນການ ແລະ ເຫດຜົນ, ມີບົດບາດສຳຄັນທີ່ຊ່ວຍໃຫ້ຂະແໜງການຕ່າງໆ ຈະເລີນກ້າວໜ້າ ແລະ ມີການພົວພັນກັບການດຳລົງຊີວິດປະຈຳວັນຂອງມວນມະນຸດ ເປັນຕົ້ນແມ່ນຄວາມກ້າວໜ້າຂະຫຍາຍຕົວຢ່າງວ່ອງໄວດ້ານເຕັກໂນໂລຍີ, ຜະລິດຕະພັນອຸດສາຫະກຳຄົມມະນາຄົມ, ສື່ສານອັນທັນສະໄໝ ແລະ ອື່ນໆ (ສົມທະວີ ສີສຸມັງ, 1998: 2).

## 2. ຄວາມສຳຄັນຂອງຄະນິດສາດສຳລັບເດັກກ່ອນໄວຮຽນ

ຄະນິດສາດມີຄວາມສຳຄັນຕໍ່ການດຳລົງຊີວິດຂອງຄົນ ເພາະມັນແມ່ນວິຊາທີ່ຊ່ວຍໃຫ້ຄົນເຮົາຮູ້ໃຊ້ເຫດຜົນໃນການແກ້ໄຂບັນຫາ. ການສ້າງຄວາມສຳນຶກເບື້ອງຕົ້ນກ່ຽວກັບຄະນິດສາດຈະຕ້ອງສ້າງພື້ນຖານໃຫ້ເດັກມີຄວາມກຽມພ້ອມທີ່ຈະຮຽນຄະນິດສາດໃນຊັ້ນປະຖົມຕໍ່ໄປ. ສະນັ້ນ ຄວາມຮູ້ກ່ຽວກັບຄະນິດສາດເປັນສິ່ງຈຳເປັນ ແລະ ສາມາດໃຊ້ໄດ້ຕະຫຼອດຊີວິດ.

ຄະນິດສາດມີຄວາມສຳຄັນຕໍ່ການດຳລົງຊີວິດຂອງມະນຸດທາງກົງ ແລະ ທາງອ້ອມໂດຍສະເພາະໃນສັງຄົມປັດຈຸບັນຄວາມຮູ້ກ່ຽວກັບຄະນິດສາດຍິ່ງເພີ່ມຄວາມສຳຄັນຫຼາຍຂຶ້ນໂດຍສະເພາະກໍ່ແມ່ນສະພາບໃນປັດຈຸບັນແມ່ນມີການປ່ຽນແປງຢ່າງໄວວາ ແລະ ຕໍ່ເນື່ອງ, ຄວາມກ້າວໜ້າທາງດ້ານວິທະຍາສາດ, ເທັກໂນໂລຊີ ແລະ ການສື່ສານຂໍ້ມູນຕ່າງໆ ບໍ່ມີຂໍ້ຈຳກັດ ການພັດທະນາຄຸນນະພາບຂອງມະນຸດໃຫ້ມີຄວາມກ້າວໜ້າທາງດ້ານເທັກໂນໂລຊີລວມໄປເຖິງການກໍ່ສ້າງສິ່ງຕ່າງໆ, ການແກ້ໄຂບັນຫາໃນຊີວິດປະຈຳວັນຕະຫຼອດຈົນກ່ຽວຂ້ອງກັບການພັດທະນາເສດຖະກິດຂອງປະເທດໃນແງ່ຂອງການຮຽນຮູ້ ແລະ ການໝູນໄປນຳໃຊ້ຕ້ອງອາໄສຄະນິດສາດເປັນພື້ນຖານ.

ສົມຊີງ ດອນແກ້ວບົວ (2528:8-12)ໄດ້ສະຫຼຸບຄວາມສຳຄັນຂອງຄະນິດສາດໄວ້ດັ່ງນີ້:

ຄວາມເປັນຜູ້ມີເຫດຜົນໃນການຮຽນ - ການສອນວິຊາຄະນິດສາດ ເຮົາຕ້ອງໃຊ້ເຫດຜົນມາພິສູດໂດຍໃຊ້ທິດສະດີມາປະກອບການພິສູດຕາມຂັ້ນຕອນຄຸນລັກສະນະນີ້ຈະເຮັດໃຫ້ຜູ້ຮຽນຄະນິດສາດເປັນຜູ້ທີ່ມີເຫດຜົນ.

ເປັນຜູ້ທີ່ມີນິໄສລະອຽດຖີ່ຖ້ວນ, ສຸຂຸມຮອບຄອບ ການຮຽນຄະນິດສາດຈະມີການເຮັດແບບເຝິກຫັດ ຈະເຮັດໃຫ້ໄດ້ເຝິກຝົນຄວາມລະອຽດຖີ່ຖ້ວນ ແລະ ຮອບຄອບຈາກການຕ້ອງໃຊ້ເຫດຜົນ.

ເປັນຜູ້ທີ່ມີໄຫວພິບ ແລະ ແນວຄິດທີ່ດີຂຶ້ນການເຮັດໂຈດແບບເຝິກຫັດໃນວິຊາຄະນິດສາດຈຳເປັນຕ້ອງອາໄສເທັກນິກຕ່າງໆຫຼາຍຢ່າງທີ່ຈະນຳມາພິສູດຫາຄຳຕອບ.

ເປັນການເຝິກການເວົ້າ ແລະ ຂຽນ ເມື່ອຜູ້ຮຽນຄະນິດສາດໄດ້ຄິດແກ້ບັນຫາຕາມຂັ້ນຕອນ ວິທີການທາງຄະນິດສາດ ແລ້ວກໍຈະໄດ້ເວົ້າ, ຂຽນ, ສະເໜີເຫດຜົນທີ່ຕົນໄດ້ລອງຜິດລອງຖືກຈົນຫາຄຳຕອບໄດ້.

ເປັນການເຝິກໃຊ້ລະບົບ ແລະ ວິທີການ ການຮຽນຄະນິດສາດຮຽນໂດຍເຝິກຄວາມລະອຽດຮອບຄອບຕາມລະບຽບແບບແຜນ ແລະ ວິທີການ ເຊິ່ງເປັນລະບົບ ແລະ ວິທີການທີ່ນຳມາໃຊ້ໃນຊີວິດປະຈຳວັນ.

ຄະນິດສາດມີບົດບາດສຳຄັນຫຼາຍຕໍ່ພັດທະນາການຄວາມຄິດຂອງມະນຸດເຮັດໃຫ້ມະນຸດມີຄວາມຄິດສ້າງສັນ, ຄິດຢ່າງມີເຫດຜົນເປັນລະບຽບ ມີແບບແຜນ, ສາມາດວິເຄາະບັນຫາ ແລະ ສະຖານະການໄດ້ຢ່າງຖີ່ຖ້ວນຮອບຄອບ, ເຮັດໃຫ້ສາມາດຄາດເດົາ, ວາງແຜນ, ຕັດສິນໃຈ ແລະ ແກ້ບັນຫາໄດ້ຢ່າງຖືກຕ້ອງ ແລະ ເໝາະສົມ ຄະນິດສາດເປັນເຄື່ອງມືໃນການສຶກສາວິທະຍາສາດ ແລະ ເທັກໂນໂລຢີຕະຫຼອດຈົນວິຊາອື່ນໆທີ່ກ່ຽວຂ້ອງຄະນິດສາດຈຶ່ງມີປະໂຫຍດຕໍ່ການດຳລົງຊີວິດ ແລະ ຊ່ວຍພັດທະນາຄຸນນະພາບຊີວິດໃຫ້ດີຂຶ້ນນອກຈາກນີ້ຄະນິດສາດຍັງຊ່ວຍພັດທະນາຄົນໃຫ້ເປັນມະນຸດທີ່ສົມບູນ, ມີຄວາມສົມດຸນທາງດ້ານຮ່າງກາຍ, ຈິດໃຈ, ສະຕິປັນຍາ ແລະ ອາລົມ ສາມາດຄິດເປັນເຮັດເປັນ ແກ້ໄຂບັນຫາເປັນ ແລະ ສາມາດຢູ່ຮ່ວມກັບຜູ້ອື່ນຢ່າງມີຄວາມສຸກ.

ຈາກຄວາມສຳຄັນຂອງຄະນິດສາດທີ່ກ່າວມາຂ້າງເທິງນັ້ນສະຫຼຸບໄດ້ວ່າ: ຄະນິດສາດເປັນທັງວິທະຍາສາດ ແລະ ສິລະປະ ເປັນວິຊາທີ່ກ່ຽວກັບການຄິດທີ່ມີເຫດຜົນສາມາດພິສູດໄດ້

## 3. ຈຸດປະສົງຂອງການສອນຄະນິດສາດສໍາລັບເດັກກ່ອນໄວຮຽນ

ການສອນຄະນິດສາດນັ້ນມີຈຸດປະສົງທີ່ແຕກຕ່າງກັນ, ການອອກແບບການສອນຂອງຄູແຕ່ລະຄົນກໍມີຄວາມແຕກຕ່າງກັນໃນພື້ນຖານຂອງແຕ່ລະໄວອາຍຸຂອງເດັກ.

ການສອນຄະນິດສາດໂດຍທົ່ວໄປມີຈຸດປະສົງດັ່ງນີ້:

1. ໃຫ້ມີຄວາມເຂົ້າໃຈແນວຄິດທາງຄະນິດສາດ.
2. ສາມາດແກ້ໂຈດເລກໄດ້.
3. ມີວິທີການ ແລະ ທັກສະໃນການຄິດໄລ່.
4. ສ້າງບັນຍາກາດທີ່ສົ່ງເສີມຄວາມຄິດສ້າງສັນ.

ຢ່າງໃດກໍຕາມສໍາລັບເດັກກ່ອນໄວຮຽນແລ້ວ ການໃຫ້ເດັກໄດ້ຮັບປະສົບການທາງດ້ານຄະນິດສາດຈະຊ່ວຍໃຫ້ເດັກໄດ້ຮູ້ຈັກໃຊ້ເຫດຜົນ ພູນຄໍາສັບທີ່ຄວນຮູ້ຈັກ ແລະ ຄວນເຂົ້າໃຈ ໂດຍສະເພາະຈະຊ່ວຍໃຫ້ເດັກເຂົ້າໃຈຄວາມໝາຍຈາກການຄົ້ນຄວ້າ ແລະ ການຖົກຖຽງເພື່ອຫາຄໍາຕອບທີ່ຖືກຕ້ອງຕະຫຼອດຈົນມີຄວາມເຂົ້າໃຈທີ່ສາມາດເຊື່ອມໂຍງໄປສູ່ຄວາມເຂົ້າໃຈເລື່ອງອື່ນໆດ້ວຍຕົນເອງໄດ້. ເຮົາຈະເຫັນໄດ້ວ່າໃນບາງຄັ້ງເດັກກໍມີຄວາມຕ້ອງທີ່ຈະຢູ່ຄົນດຽວເພື່ອທີ່ຈະມີເວລາຄິດງຽບໆ ແຕ່ບາງຄັ້ງເດັກກໍຕ້ອງການຄວາມຊ່ວຍເຫຼືອຈາກຄູ ຫຼື ຜູ້ໃຫຍ່, ດັ່ງນັ້ນຈຸດໝາຍຂອງການສອນຄະນິດສາດໃນລະດັບເດັກກ່ອນໄວຮຽນມີດັ່ງນີ້:

1. ເພື່ອໃຫ້ເດັກມີຄວາມເຂົ້າໃຈພື້ນຖານກ່ຽວກັບຄະນິດສາດເຊັ່ນ: ຮູ້ຈັກຄໍາສັບ ແລະ ສັນຍະລັກທາງຄະນິດສາດຂັ້ນພື້ນຖານ.
2. ເພື່ອພັດທະນາມະໂນພາບກ່ຽວກບຄະນິດສາດເຊັ່ນ: ການບວກ ຫຼື ການເພີ່ມ, ການລົບ ຫຼື ການລົບ ແລະ ອື່ນໆ.
3. ເພື່ອໃຫ້ເດັກຮູ້ຈັກ ແລະ ໃຊ້ຂະບວນການໃນການຫາຄໍາຕອບເຊັ່ນ: ການຈົດ, ການບັນທຶກ, ການຊັ່ງນໍ້າໜັກ ໆລໆ.
4. ເພື່ອໃຫ້ເດັກເຝິກຝົນຄະນິດສາດຂັ້ນພື້ນຖານເຊັ່ນ: ການນັບ, ການວັດແທກ, ການຈັບຄູ່, ການຈັດປະເພດການປຽບທຽບ, ການລຽງລໍາດັບ ໆລໆ.
5. ເພື່ອສົ່ງເສີມໃຫ້ເດັກມີຄວາມຮູ້ຄວາມເຂົ້າໃຈ, ຄວາມຢາກຮູ້ ແລະ ຢາກຄົ້ໜຄວ້າເພີ່ມເຕີ່ມ.
6. ເພື່ອສົ່ງເສີມໃຫ້ເດັກຄົ້ນຄວ້າຫາຄໍາຕອບດ້ວຍຕົວເອງ.

## 4. ຫຼັກການສອນຄະນິດສາດສໍາລັບເດັກກ່ອນໄວຮຽນ

ກ. ຄວນມີການວາງແຜນໂດຍຄໍານຶງເຖິງຄວາມສອດຄ່ອງລະຫວ່າງເນື້ອໃນກັບໄລຍະຄວາມສົນໃຈ ແລະ ຄວາມສາມາດສໍາອາຍຸເດັກ

ຂ. ກໍານົດກິດຈະກໍາໃຫ້ສອດຄ່ອງກັບຈຸດປະສົງ ແລະ ເນື້ອໃນຂອງປະສົບການ

ຄ. ສາວຄູຕ້ອງເຂົ້າໃຈພື້ນຖານຄວາມຕ້ອງການ, ຄວາມສົນໃຈ ແລະ ຄວາມສາມາດຂອງເດັກ ເພື່ອເລືອກກິດຈະກໍາສໍາລັບເດັກໃຫ້ເໝາະສົມ

ເພີບເຈດ1969(Piaget)ໄດ້ກ່າວ່ພື້ນຖານຄະນິດສາດສໍາລັບເດັກກ່ອນໄວຮຽນດັ່ງນີ້:

- ການຫຼິ້ນເກມຈັບຄູ່ເປັນການເຝິກຝົນໃຫ້ເດັກຮູ້ຈັກສັງເກດລັກສະນະຕ່າງໆ

- ການປຽບທຽບເດັກຕ້ອງມີການສືບຫາ ແລະ ອາໃສຄວາມສຳພັນລະຫ່ວາງສອງສິ່ງ ຫຼື ຫຼາຍກ່ວາຮູ້ຈັກຄຳສັບ ໜັກກ່ວາ ເບົາກ່ວາເປັນຕົ້ນ
- ການລຽງລຳດັບເປັນການເຝິກຄວາມຈຳຂອງເດັກ, ລຽງລຳດັບຕາມຂະຕໍ່າ-ສູງ, ນ້ອຍ-ໃຫ່ຍ ແລະ ອື່ນໆ

ຄິມຂ້ອນ ອອ່ນບີງຜ້າວ(2550:17) ໄດ້ກ່າວວ່າຄະນິດສາດເດັກກ່ອນໄວຮຽນຕ້ອງເນັ້ນເດັກເປັນຄຳສັບ ຄູຕ້ອງຄຳນຶງເຖິງຈຸດປະສົງໃນການຈັດກິດຈະກຳການຮຽນ ການສອນຄະນິດສາດເພື່ອໃຫ້ເດັກເກີດຄວາມເຂົ້າໃຈຢ່າງແທ້ຈິງ ແລະ ສາມາດບູລະນະການໃຫ້ເຂົ້າກັບກິດຈະກຳອື່ນທໄດ້ຮຽນຮູ້ຢ່າງມີຄວາມສຸກ.

ດັ່ງນັ້ນ ຈິ່ງສະຫຼູບໄດ້ວ່າຫຼັກການຈັດກິດຈະກຳການຮຽນຮູ້ທັກສະພື້ນຖານຄະນິດສາດສຳລັບເດັກກ່ອນໄວຮຽນຄວນສົ່ງເສີໃຫ້ເດັກຮຽນຮູ້ຈາກປະສົບການໂດຍກົງ ຈາກຮູບປະທຳ ໄປຫານາມມະທຳເປີດໂອກາດໃຫ້ເດັກໄດ້ສັງເກດໄດ້ສຳຜັດ ໄດ້ທົດລອງສຳຫຼວດໄດ້ຄົ້ນຄ້ວາ ແລະ ແກ້ໄຂບັນຫາ ສະພາບແວດລ້ອມທັງໃນຫ້ອງຮຽນ ແລະ ນອກຫ້ອງຮຽນໂດຍແມ່ນຄູເປັນຜູ້ຈັດກິດຈະກຳ ແລະ ຄອຍສັງເກດດູແລໃຫ້ຄວາມຊ່ວຍເຫຼືອເດັກ, ຈັດກິດຈະກຳໃຫ້ເໝາະສົມກັບໄວຄວາມສາມາດ ແລະ ຄວາມແຕກຕ່າງງລະຫວ່າງເດັກແຕ່ລະຄົນເຊິ່ງຫາກເດັກໃນໄວນີ້ໄດ້ຮັບການສົ່ງເສີມທັກສະພືນຖານທາງຄະນິດສາດເປັນຢ່າງດີຍ່ອມເປັນຮາກຖານຂອງການຮຽນຮູ້ ແລະ ເຂົ້າໃຈທີ່ດີຕໍ່ຄະນິດສາດໃນລະດັບຂັ້ນສູງຕໍ່ໄປໄດ້.

## 5. ຂອບເຂດເນື້ອໃນຫຼັກສູດຄະນິດສາດສຳລັບເດັກອະນຸບານ

**ຫຼັກສູດການສຶກສາເດັກກ່ອນໄວຮຽນ**

ການສຶກສາຊັ້ນອະນຸບານສຶກສາໝາຍເຖິງການລ້ຽງດູ, ການຮຽນ ແລະ ການສອນເດັກຢູ່ໂຮງຮຽນອະນຸບານເຊິ່ງຮັບເດັກແຕ່ອາຍຸ 3 ຫາ 6 ປີ. ການພັດທະນາເດັກຊັ້ນອະນຸບານສຶກສາແມ່ນບາດກ້າວເບື້ອງຕົ້ນທີ່ສຳຄັນໃນການພັດທະນາຊັບພະຍາກອນມະນຸດໃຫ້ມີການຂະຫຍາຍຕົວທາງດ້ານຮ່າງກາຍ, ອະນາໄມ, ຄວາມປອດໄພ, ດ້ານພາສາ, ດ້ານສະຕິປັນຍາ ແລະ ຄວາມຮູ້ທົ່ວໄປ, ດ້ານອາລົມ-ຈິດໃຈ ແລະ ດ້ານສັງຄົມ ເຊິ່ງເປັນພື້ນຖານສຳລັບການຮຽນຢູ່ໃນຊັ້ນປະຖົມສຶກສາ ແລະ ໃນຂັ້ນຕໍ່ໄປ.ການສຶກສາຊັ້ນອະນຸບານແບ່ງອອກເປັນ 3 ຂັ້ນຮຽນຄື: ອະນຸບານ 1 ຮັບເດັກອາຍຸ 3-4 ປີ, ອະນຸບານ 2 ຮັບເດັກອາຍຸ 4-5 ປີ, ອະນຸບານ 3 ຮັບເດັກອາຍຸ 5-6 ປີ.

- **ຄວາມໝາຍ ແລະ ຄວາມມສຳຄັນ**

ການສຶກສາຊັ້ນອະນຸບານສຶກສາໝາຍເຖິງການລ້ຽງດູ, ການຮຽນ ແລະ ການສອນເດັກຢູ່ໂຮງຮຽນອະນຸບານເຊິ່ງຮັບເດັກແຕ່ອາຍຸ 3 ຫາ 6 ປີ. ການພັດທະນາເດັກຊັ້ນອະນຸບານສຶກສາແມ່ນບາດກ້າວເບື້ອງຕົ້ນທີ່ມີຄວາມສຳຄັນໃນການພັດທະນາຊັບພະຍາກອນມະນຸດໃຫ້ມີການຂະຫຍາຍຕົວທາງດ້ານຮ່າງກາຍ, ອະນາໄມ, ຄວາມປອດໄພ, ດ້ານພາສາ, ດ້ານສະຕິປັນຍາ ແລະ ຄວາມຮູ້ທົ່ວໄປ, ດ້ານອາລົມຈິດໃຈ ແລະ ດ້ານສັງຄົມ ເຊິ່ງເປັນພື້ນຖານໃນການຮຽນໃນຊັ້ນປະຖົມສຶກສາ ແລະ ໃນຂັ້ນຕໍ່ໄປ.

- ການສຶກສາຊັ້ນອະນຸບານແບ່ງອອກເປັນ 3 ຂັ້ນຮຽນຄື:
    - ອະນຸບານ 1 ຮັບເດັກອາຍຸ 3-4 ປີ
    - ອະນຸບານ 2 ຮັບເດັກອາຍຸ 4-5 ປີ
    - ອະນຸບານ 3 ຮັບເດັກອາຍຸ 5-6 ປີ

### 1.1 ຫຼັກການຂອງຫຼັກສູດຊັ້ນອະນຸບານສຶກສາ

ຫຼັກສູດຊັ້ນອະນຸບານສຶກສາແມ່ນອີງໃສ່ຫຼັກການພັດທະນາເດັກແບບຮອບດ້ານໃນການກຽມຄວາມພ້ອມທາງດ້ານຮ່າງກາຍ, ການອະນາໄມ ແລະ ຄວາມປອດໄພ, ດ້ານພາສາ, ດ້ານສະຕິປັນຍາ ແລະຄວາມຮູ້ທົ່ວໄປ, ດ້ານອາລົມ-ຈິດໃຈ ແລະດ້ານສັງຄົມເພື່ອໃຫ້ເດັກມີຄວາມຮູ້ພື້ນຖານທີ່ຈະໄປຮຽນຕໍ່ໃນຂັ້ນປະຖົມສຶກສາປີທີ 1 ຢ່າງມີຄຸນນະພາບ.

ຫຼັກການຂອງຫຼັກສູດຊັ້ນອະນຸບານສຶກສາປະກອບດ້ວຍ 6 ຫຼັກການດັ່ງລຸ່ມນີ້:

1. ສົ່ງເສີມຂະບວນການກຽມມຄວາມພ້ອມໃນການຮຽນຮູ້ ແລະພັດທະນາການຂອງເດັກອາຍຸ 3 ຫາ 6 ປີ.
2. ເບິ່ງແຍງ, ລ້ຽງດູເດັກໃຫ້ເຕີບໃຫຍ່ຕາມໄວອາຍຸ ແລະສຶກສາອົບຮົມໃນການຮຽນໂດຍຄຳນຶງເຖິງພັດທະນາການຂອງເດັກແຕ່ລະຄົນ, ແບບແຜນການດຳລົງຊີວິດໃນສັງຄົມ, ວັດທະນະທຳຂອງຊາດ ແລະທ້ອງຖິ່ນ.
3. ພັດທະນາການຮຽນຮູ້ເດັກໂດຍຜ່ານການຫຼິ້ນ ແລະປະຕິບັດກິດຈະກຳດ້ວຍຫຼາຍຮູບແບບທີ່ເໝາະສົມກັບໄວອາຍຸ, ເພດ, ເຜົ່າ ແລະຕາມສະພາບຄວາມຕົວຈິງໃນແຕ່ລະທ້ອງຖິ່ນ.
4. ຈັດປະສົບການໃຫ້ເດັກໄດ້ຮຽນຮູ້ ແລະນຳໃຊ້ເຂົ້າໃນຊີວິດປະຈຳວັນໄດ້ຢ່າງມີຄວາມສຸກ ແລະມີຄຸນນະພາບ.
5. ຈັດການຮຽນການສອນແບບບູລະນາການດ້ວຍກິດຈະກຳການຫຼິ້ນ ແລະຮຽນ ເຊິ່ງປະກອບມີກິດຈະກຳການເຄື່ອນໄຫວ ແລະຈັ່ງຫວະ,ກິດຈະກຳວົງມົນ,ກິດຈະກຳສ້າງສັນ, ກິດຈະກຳກາງແຈ້ງ, ກິດຈະກຳຫຼິ້ນຕາມມູມ ແລະກິດຈະກຳເກມການສຶກສາ.
6. ພັດທທະນາການແບບຮອບດ້ານເພື່ອເຊື່ອມຕໍ່ການຮຽນລະຫວ່າງຊັ້ນອະນຸບານສຶກສາ ແລະຂັ້ນປະຖົມສຶກສາປີທີ 1 ໂດຍມີການຮ່ວມມື ແລະປະສານງານລະຫວ່າງໂຮງຮຽນ, ຄອບຄົວ ແລະຊຸມມຊົນ.

**1.2 ຈຸດປະສົງຂອງຫຼັກສູດຊັ້ນອະນຸບານສຶກສາ**

**1. ຈຸດປະສົງລວມ**

ຫຼັກສູດຊັ້ນອະນຸບານສຶກສາແນ່ໃສ່ສ້າງພື້ນຖານພັດທະນາຄຸນນະພາບເດັກແບບຮອບດ້ານໂດຍສະເພາະແມ່ນການກຽມຄວາມພ້ອມໃນການຮຽນຮູ້, ທັກສະ ແລະຄຸນສົມບັດໃຫ້ເດັກອາຍຸ 3 ຫາ 6 ປີທັງພາກລັດ ແລະເອກະຊົນ.

**a. ພັດທະນາດ້ານຄະນິດສາດ**

- **ຂັ້ນອະນຸບານ1**

| ຂອບເຂດ | ເນື້ອໃນ |
| --- | --- |
| | ອະນຸບານ 1 |

| | |
|---|---|
| 1.ຈຳນວນ | - ນັບປາກເປົ່າ 1-30<br>- ຮູ້ຄ່າຈຳນວນ 1 -3<br>- ຮູ້ນັບລຽງລຳດັບ 1-3<br>-ຮູ້ບາງຄຳສັບທີ່ພົວພັນກັບຄະນິດສາດ: ໜ້ອຍ-ຫຼາຍ, ມີ-ບໍ່ມີ,ຮູ້ຄຳວ່າຕື່ມໃສ່,ເອົາອອກ.<br>-ຮູ້ຈັກປະເພດໝວດໝູ່.ທີ່ຄືກັນ-ຕ່າງກັນແລະວັດຖຸທີ່ມີການພົວພັນກັນ. |
| 2.ຮູບຮ່າງຮູ້ ແລະ ຈຳແນກຮູບ |  |
| 3.ຕຳແໜ່ງ ຫຼື ທິດໃນກາງຫາວ | -ລຸ່ມ-ເທິງ, ໜ້າ-ຫຼັງ, ນອກ-ໃນ |
| 4.ເວລາ | - ກາງເວັນ-ກາງຄືນ,ຕອນເຊົ້າ-ຕອນຄ່ຳ,ຮູ້ອາຍຸຂອງຕົນເອງ. |
| 5.ຂະໜາດ | - ໃຫ່ຍ-ນ້ອຍ, ສັ້ນ-ຍາວ, ຕ່ຳສູງ, ຊ້າ-ໄວ. |
| 5.ປະສາດສຳພັດດ້ວຍອິນຊີທັງຫ້າ. | - ຄ່ອຍ-ແຮງ, ຫອມ-ເໝັນ, ສົ້ມ-ຫວານ, ແດງ-ຟ້າ, ເຫຼືອງ, ອອນ-ແຂງ, ຮ້ອນ-ເຢັນ. |

- **ຂັ້ນອະນຸບານ 2**

| ຂອບເຂດ | ເນື້ອໃນ |
|---|---|
| | ອະນຸບານ2 |
| 1.ຈຳນວນ | ນັບປາກເປົ່າ 1-20<br>- ຮູ້ຄ່າຈຳນວນ 1 -5<br>- ຮູ້ນັບລຽງລຳດັບ 1-5<br>-ຄຳສັບຄະນິດສາດ:ໜ້ອຍ-ຫຼາຍ,ເທົ່າກັນ,ແບ່ງປັນເທົ່າກັນ. |

| | |
|---|---|
| 2.ຮູບຮ່າງຮູ້ ແລະ ຈຳແນກຮູບ |  |
| 3.ຕຳແໜ່ງ ຫຼື ທິດໃນ ກາງຫາວ | -ລຸ່ມ-ເທິງ,ໜ້າ-ຫຼັງ,ນອກ-ໃນ,ຊ້າຍ-ຂວາ |
| 4.ເວລາ | -ເຊົ້າ-ສວຍ-ແລງ,ວັນຕ່າງໆໃນອາທິດໜຶ່ງ,ຮູ້ອາຍຸຕົນເອງ. |
| 5.ຂະໜາດ | ໃຫ່ຍກ່ວາ-ນ້ອຍກວ່າ, ສັ້ນກວ່າ-ຍາວກວ່າ, ໜັກ-ເບົາ, ກວ້າງ-ແຄບ, ຊ້າກ່ວາ-ໄວກວ່າ. |
| 5.ປະສາດສຳພັດດ້ວຍ ອິນຊີທັງຫ້າ. | -ຂົວ-ຂົມ,ສີສົ້ມ-ສີຂຽວ-ຂາວ,ຊາ-ກ້ຽງ-ອຸ່ນ. |

- **ຂັ້ນອະນຸບານ3**

| ຂອບເຂດ | ເນື້ອໃນ |
|---|---|
| | ອະນຸບານ3 |
| 1.ຈຳນວນ | - ນັບປາກເປົ່າ 1-30<br>- ຮູ້ຄ່າຈຳນວນ 1 -5<br>- ຮູ້ນັບລຽງລຳດັບ 1-7<br>-ຄຳສັບຄະນິດສາດ:<br>ໜ້ອຍທີ່ສຸດ-ຫຼາຍທີ່ສຸດ<br>-ຮູ້ແບ່ງປັນວັດຖຸ,ສິ່ງຂອງຕາມຄຳສັ່ງ ຂອບເຂດຈຳນວນ 1-10 |

| | |
|---|---|
| 2.ຮູບຮ່າງຮູ້ ແລະ ຈຳແນກຮູບ |  |
| 3.ຕຳແໜ່ງ ຫຼື ທິດໃນ ກາງຫາວ | -ລຸ່ມ-ເທິງ,ໜ້າ-ຫຼັງ, ນອກ-ໃນ, ຊ້າຍ-ຂວາ, ໃກ້-ໄກ, ພື້-ພຸ້ນ, ຫັ້ນ-ນີ້, ເດືອນ-ປີ. |
| 4.ເວລາ | -ເດືອນ ແລະ ປີ, ແຈ້ງ-ມືດ, ຮູ້ອາຍຸຕົນເອງ. |
| 5.ຂະໜາດ | ໃຫ່ຍທີ່ສຸດ-ນ້ອຍທີ່ສຸດ, ສັ້ນທີ່ສຸດ-ຍາວທີ່ສຸດ, ຕ່ຳທີ່ສຸດ-ສູງທີ່ສຸດ, ກວາງກວ່າ-ແຄບ ກວ່າ-ແຄບທີ່ສຸດ, ໄວກວ່າ-ຊ້າທີ່ສຸດ, ໜາ-ບາງ, ເລິກ-ຕື້ນ. |
| 5.ປະສາດສຳພັດດ້ວຍ ອິນຊີທັງຫ້າ. | -ຂົວ-ຂົມ,ສີສົ້ມ-ສີຂຽວ-ຂາວ,ຊາ-ກ້ຽງ-ອຸ່ນ.ນ-ເຜັດ,ສີບົວ-ອິດ ຊາ-ກ້ຽງ-ມື່ນ. |

## 6. ອຸປະກອນຄະນິດສາດໃນການຫຼິ້ນເພື່ອຄວາມມ່ວນຊື່ນ

ສ່ວນໃຫ່ຍອຸປະກອນທີ່ນຳມາຮັບໃຊ້ເຂົ້າໃນການຜະລິດສື່ການຮຽນ-ການສອນສຳລັບເດັກກ່ອນໄວຮຽນຈະມີ ຫຼາກຫຼາຍ ແຕ່ຂຶ້ນຢູ່ກັບວ່າຄູຈະຜິດສື່ການສອນປະເພດໃດ ແລະ ຈະນຳໃຊ້ອຸປະກອນໃດແດ່. ແຕ່ໂດຍສ່ວນໃຫ່ຍ ແລ້ວຈະມັກນຳໃຊ້ອຸປະກອນເຫຼົ່ານີ້: ເຈ້ຍລາມ, ເຈ້ຍສີແດງ, ສີເຫຼືອງ, ສີຟ້າ ,ກາວ, ມີດຕັດ, ເຂັມ, ກໍ້ດ້າຍ, ສະກ໋ອດ, ຄັດເຕີ້, ປືນກາວ ແລະ ອື່ນໆ









## 2.1 ຄະນິດສາດຫຼິ້ນເພື່ອຄວາມມ່ວນຊື່ນ

ຕົວຢ່າງ : ການຈຳແນກສີ

**ສີແດງ**



**ສີເຫຼືອງ**



**ສີ ຟ້າ**



ຕົວຢ່າງ: ການນັບ






ຕົວຢ່າງ : ການຕໍ່ຮູບເລຂາຄະນິດເປັນຮູບຕ່າງໆ











**b. ຄວາມໝາຍຂອງສື່ ແລະ ອຸປະກອນການສອນ**

ຄວາມຫມາຍຂອງຄໍາວ່າ "ສື່" ຕາມພົດນານຸກົມ ພຸທົດສັກຣາດ 2542 ມີຫຼາກຫຼາຍຄວາມຫມາຍ ແຕ່ຄວາມໝາຍທີ່ກ່ຽວຂ້ອງກັບການຮຽນການສອນ ໝາຍເຖິງ ຕິດຕໍ່ໃຫ້ເຖິງກັນ ເຊັ່ນ ສື່ຄວາມໝາຍ (ຣາດ ບັນຖິດສະຖານ, 2546:1200) ສະນັ້ນ ສື່ການສອນກໍໝາຍເຖິງ ສິ່ງທີ່ເຮັດໃຫ້ຜູ້ກ່ຽວຂ້ອງກັບການສອນ ຊຶ່ງກໍຄືຄູ ແລະນັກຮຽນຕິດຕໍ່ເຖິງກັນ ເພື່ອສື່ຄວາມໝາຍຂອງສິ່ງທີ່ຕ້ອງການຈະສອນຫຼືໃຫ້ນັກຮຽນເກີດການຮຽນຮູ້

ກິດານັນ ລິທອງ (2544: 1) ກ່າວເຖິງ ຄໍາວ່າ "ສື່" ແລະ "ສື່ການສອນແລະການຝຶກອົບຮົມ" ວ່າ ສື່ມາຈາກຄໍາພາສາລາຕິນ "medium" ແປລວ່າ "ລະຫວ່າງ" ໝາຍເຖິງ ສິ່ງໃດກໍຕາມທີ່ບັນຈຸຂໍ້ມູນເພື່ອໃຫ້ຜູ້ສົ່ງແລະຜູ້ຮັບສາມາດສື່ສານກັນໄດ້ກົງຕາມວັດຖຸປະສົງ "ສື່ການສອນແລະການຝຶກອົບຮົມ" ເປັນສື່ທີ່ບັນຈຸເນື້ອໃນກ່ຽວກັບການຮຽນການສອນແລະຝຶກອົບຮົມໃນຮູບແບບວັດຖຸ ອຸປະກອນ ແລະ ເທັກນິກວິທີການ ໂດຍອາດເປັນໜັງສື ແຜນ ຮູບພາບ ສໄລດ ແຖບວີດີໂອ ແຜ່ນໂປ່ງໃສ ເຄື່ອງສາຍພາບຂ້າມຫົວ ເຄື່ອງວິຊວນໄລເຊອຣ ເຄື່ອງຫຼິ້ນວີຊີດີ ລໍາໂພງ ໄມໂຄຣໂຟນ ໂປຣແກຣມຄອມພິວເຕີ ຄອມພິວເຕີ ການສາທິດ ການສຶກສານອກສະຖານທີ່ ແລະ ອື່ນ ໆ ທັງໝົດເຖິງການນໍາເທັກໂນໂລຢີປະສານສົມທົບໃນຮູບແບບເຄືອຂ່າຍມາໃຊ້ຮ່ວມໃນການສອນແລະຝຶກອົບຮົມໃຫ້ມີປະສິດທິພາບສູງສຸດ ແລະ ໄດ້ປະສິດທິຜົນເພີ່ມພູນຍິ່ງຂຶ້ນດ້ວຍ

ສື່ອຸປະກອນ ໝາຍເຖິງ ສິ່ງທີ່ເປັນຕົວກາງຫຼືຕົວຜ່ານ ເຮັດໃຫ້ຂໍ້ມູນ ຫຼື ຄວາມຮູ້ທີ່ບັນທຶກໃນວັດຖຸສາມາດຖ່າຍທອດຍົກມາໃຫ້ເຫັນ ຫຼື ໄດ້ຍິນ ເຊັ່ນ ເຄື່ອງສາຍແຜ່ນໂປ່ງໃສ ເຄື່ອງສາຍສໄລດ໌ ເຄື່ອງສາຍພາບເຄື່ອງຄອມພິວເຕີ ເຄື່ອງບັນທຶກສຽງ ເປັນຕົ້ນ.

- ອຸປະກອນການສອນຈະຊ່ວຍໃຫ້ນັກຮຽນມີຄວາມຮູ້ຫລາຍຂຶ້ນ ເພາະອຸປະກອນການສອນຈະເປັນຈຸດທັງຫມົດຄວາມສົນໃຈ ສາມາດເພີ່ມຄວາມເປັນຮູບປະທຳ ແລະ ຄວາມເປັນຈິງຕໍ່ການຮຽນຮູ້ຫຼາຍຂຶ້ນອຸປະກອນການສອນຈະເປັນເລື່ອງກະຕຸ້ນຂຶ້ນ ໃຫ້ຜູ້ຮຽນເກີດຄວາມຄິດ ເບິ່ງເຫັນຄວາມສຳຄັນຂອງເລື່ອງລາວ ຊຶ່ງອຸປະກອນການສອນ ຈະປະສົບຜົນຕາມຈຸດມຸ້ງໝາຍຂອງ ການຮຽນ ການສອນ ໄດ້ຫລາຍນ້ອຍເພີງໃດນັ້ນ ຂຶ້ນຢູ່ກັບ ການເລືອກການຕຽມ ການໃຊ້ອຸປະກອນການສອນ
- ປະໂຫຍດຂອງອຸປະກອນການສອນ

- ກະຕຸ້ນໃຫ້ຜູ້ຮຽນສົນໃຈໃນການຮຽນຫລາຍຍິ່ງຂຶ້ນ
- ໃຫ້ໂອກາດແກ່ຜູ້ຮຽນໄດ້ມີສ່ວນຮ່ວມໃນກິດຈະກຳຫລາຍຂຶ້ນ
- ເຮັດ ໃຫ້ຜູ້ຮຽນເກີດແນວຄິດ ແລະເຂົ້າໃຈ ຢ່າ ຖືກກຕ້ອງ
- ເຮັດໃຫ້ນັກຮຽນເກີດທັກສະໃນການຄົ້ນຫາຄວາມຮູ້
- ເຮັດໃຫ້ຜູ້ຮຽນຈົດຈຳ ເລື່ອງຣາວຕ່າງໆໆໄດ້ແມ່ນຢຳ
- ຊ່ວຍເພີ່ມພູນປະສົບການເດີມຂອງຜູ້ຮຽນ

- ການຕຽມອຸປະກອນ

- ກ່ອນທີ່ຈະໃຊ້ອຸປະກອນການສອນ ຄວນມີກາວາງແຜນການສອນ
- ຄວນຈັດເຮັດອຸປະກອນການສອນທີ່ຈັດເຮັດໄດ້ດ້ວຍຕົນເອງ
- ຄວນມີການສຳຣວດອຸປະກອນເສຍກ່ອນວ່າມີຄວາມພຣ້ອມຫລືບໍ່
- ການທົດລອງໃຊ້ອຸປະກອນທີ່ໃຊ້ກ່ອນທີ່ຈະນຳໄປໃຊ້ຈິງ
- ສຳຫຼວດຈັດຕຽມສະຖານທີ່ສອນ

- **ຂໍ້ຄວນພິຈາລະນາໃນການເລືອກອຸປະກອນ**

1. ເລືອກອຸປະກອນທີ່ເໝາະສົມກັບໄວເດັກ
2. ອຸປະກອນຕ້ອງມີຄວາມປອດໄໄພ
3. ຂະໜາດອຸປະກອນຄວນເໝາະສົມເພື່ອໃຫ້ເຫັນທົ່ວກັນ
4. ຄວນເລືອກອຸປະກອນທີ່ແປກ ແລະ ໃໝ່
5. ບໍ່ຄວນໃຊ້ອຸປະກອນທີ່ຊຸດໂຊມ ຫລືເກົ່າເກີນໄປ
6. ພິຈາລະນາເລືອກອຸປະກອນໃນປະລິມານທີ່ເໝາະສົມ
7. ເລືອກອຸປະກອນທີ່ມີຄວາມສຳສຳພັນກັບບົດຮຽນ

- **ຂັ້ນຕອນການໃຊ້ສື່ການສອນ**

ການໃຊ້ສື່ການສອນນັ້ນອາດຈະໃຊ້ສະເພາະຂັ້ນຕອນໃດຂັ້ນຕອນໜຶ່ງຂອງການສອນ ຫລື ຈະໃຊ້ທຸກຂັ້ນຕອນກໍໄດ້ ດັ່ງນີ້

- ຂັ້ນນຳເຂົ້າສູ່ບົດຮຽນ ເພື່ອກະຕຸ້ນໃຫ້ຜູ້ຮຽນເກີດຄວາມສົນໃຈໃນຊິ້ນຫາທີ່ກຳລັງຈະຮຽນນັ້ນ ສື່ທີ່ໃຊ້ໃນຂັ້ນນີ້ຈຶ່ງເປັນສື່ທີ່ສະແດງຊິ້ນຫາກວ້າງໆ ຫລືຊິ້ນຫາທີ່ກ່ຽວຂ້ອງກັບການຮຽນໃນເທື່ອກ່ອນ ຍັງບໍ່ແມ່ນສື່ທີ່ເນັ້ນຊິ້ນຫາເຈາະເລິກຢ່າງແທ້ຈິງ ແລະຄວນເປັນສື່ທີ່ງ່າຍຕໍ່ການນຳສະເໜີ
- ຂັ້ນດຳເນີນການສອນຫລືປະກອບກິດຈະກຳການຮຽນ ເປັນຂັ້ນທີ່ຈະໃຫ້ຄວາມຮູ້ ຊິ້ນຫາຢ່າງລະອຽດເພື່ອລອງວັດຖຸປະສົງທີ່ຕັ້ງໄວ້ ຜູ້ສອນຄວນເລືອກສື່ໃຫ້ກົງກັບຊິ້ນຫາ ແລະວິທີການສອນ ຕ້ອງມີການຈັດລຳດັບຂັ້ນຕອນການໃຊ້ສື່ໃຫ້ເໝາະແລະສອດຄລ້ອງກັບກິດຈະກຳການຮຽນ ການໃຊ້ສື່ໃນຂັ້ນນີ້ ຈະຕ້ອງເປັນສື່ທີ່ສະເໜີຄວາມຮູ້ຢ່າງລະອຽດຖືກຕ້ອງແລະຊັດເຈນແກ່ຜູ້ຮຽນ ເຊັ່ນ ສໄລດ ແຜນພູມິ ວິດີອ ເປັນຕົ້ນ
- ຂັ້ນວິເຄາະແລະຝຶກປະຕິບັດ ເປັນການເພີ່ມພູນປະສົບການກົງແກ່ ຜູ້ຮຽນ ເພື່ອໃຫ້ຜູ້ຮຽນໄດ້ທົດລອງນຳຄວາມຮູ້ທີ່ຮຽນມາແລ້ວໄປໃຊ້ແກ້ບັນຫາໃນຂັ້ນຝຶກຫັດ ໂດຍການລົງມື ຝຶກປະຕິບັດເອງ ສື່ໃນຂັ້ນນີ້ຈຶ່ງເປັນສື່ທີ່ເປັນປະເດັນບັນຫາໃຫ້ຜູ້ຮຽນໄດ້ຂົບຄິດ ໂດຍຜູ້ຮຽນເປັນຜູ້ໃຊ້ສື່ເອງຫລາຍທີ່ສຸດ ເຊັ່ນ ພາບ ບັດບັນຫາ ສມຸດແບບຝຶກຫັດ ເປັນຕົ້ນ
- ຂັ້ນສະຫລຸບບົດຮຽນ ເປັນການຢ້ຳຊິ້ນຫາບົດຮຽນໃຫ້ຜູ້ຮຽນມີຄວາມເຂົ້າໃຈ ທີ່ຖືກຕ້ອງ ແລະກົງຕາມວັດຖຸປະສົງທີ່ຕັ້ງໄວ້ ຂັ້ນສະຫລຸບຄວນໃຊ້ເວລາພຽງສັ້ນໆ ສື່ທີ່ສະຫລຸບຈຶ່ງຄວນ ຄອບຄຸມຊິ້ນຫາສຳຄັນທັງໝົດ ເຊັ່ນ ແຜນພູມິ ແຜ່ນໂປ່ງໃສ ເປັນຕົ້ນ
- ຂັ້ນປະເມີນຜູ້ຮຽນ ເປັນການທົດສອບວ່າຜູ້ຮຽນເຂົ້າໃຈໃນສິ່ງທີ່ຮຽນໄປຖືກຕ້ອງຫລາຍນ້ອຍພຽງໃດ ແລະບັນລຸຕາມວັດຖຸປະສົງທີ່ຕັ້ງໄວ້ຫລືບໍ່ ສື່ໃນຂັ້ນການປະເມີນນີ້ມັກຈະເປັນຄຳຖາມຈາກຊິ້ນຫາບທຮຽນໂດຍອາດມີພາບປະກອບດ້ວຍກໍໄດ້

  ➢ **ຂັ້ນຕອນການດຳເນີນການຜະລິດສື່ສຳລັບເດັກ**

  ຕົວຢ່າງ: ຂັ້ນຕອນຂອງການຜະລິດຮູບຊົງເລຂາແບບຕ່າງໆ

  ➢ ກະກຽມ: ແຜ່ນບອດ ( ແດງ, ຫຼືອງ, ຟ້າ, ສົ້ມ, ຂຽວ, ຂາວ, ບົວ, ດຳ), ມີດຕັດ, ບັນທັດ

  ➢ ວິທີຜະລິດ

  - ຂັ້ນຕອນທີ 1: ນຳແຜນບອດມາຕັດເປັນແບບຮູບ 3ແຈສະເໝີ, 4ແຈສະເໝີ, ຮູບ 4ຂ້າງຂະໜານກັນ.....
  - ຂັ້ນຕອນທີ 2: ເອົາແບບທີຕັດໄປແທກໃສ່ແຜນບອດທຸກສີ ແລ້ວຕັດໃຫ້ໄດ້ຮູບລະ 5ແຜ່ນ ໃນແຕ່ລະສີ
  - ຂັ້ນຕອນທີ 3: ຕັດແຕ່ລະສິ້ນທີ່ມີຫຼ່ຽມຄົມອອກ ເພາະອາດຈະເປັນອັນຕະລາຍຕໍ່ເດັກໄດ້
  - ຂັ້ນຕອນທີ 4: ແກ໋ດເຈ້ຍ A4 ຕັດລວງສູງອອກໃຫ້ເປັນກອງຕຳລົງ, ຈາກນັ້ນເຈາະຮູ້ລັກສະນະຍາວພໍຫຼືມແຜ່ນບອດທີ່ຕັດເປັນຮູບເລາຂາຕ່າງໆຈາກນັ້ໜແຕ້ມຮູບສີດຳເປັນຮູບເລຂາຄະນິດຕ່າງໆ



*ຮູບຊົງເລຂາແບບຕ່າງໆ*

- **ການນຳໃຊ້**

ຮູບຊົງເລຂາແບບຕ່າງໆໂດຍສ່ວນໃຫ່ຍແລ້ວ ແມ່ນຈະນຳໃຊ້ໃນກິດຈະກຳວົງມົນ ການຮຽນຮູ້ກ່ຽວກັບພື້ນຖານຄະນິດສາດສຳລັບເດັກ ແລະ ຈັດເຂົ້າໃນມຸມຫ້ອງຮຽນສຳລັບເດັກ. ໃຫ້ເດັກປ່ອນຮູບເລຂາຄະນິດຕ່າງໆໃສ່ກ່ອງຕາມສັນຍາລັກຮູບນັ້ນ ຫຼື ຫຼິ້ນຮຽນຮູ້ຕາມເນື້ອໃນກິດຈະກຳທີ່ຄູອອກແບບຂຶ້ນ.

- **ຮູບກ້ອນປະກອບສັນຍາລັກ**
  - ກະກຽມ: ເຈ້ຍສີ A4 ໜາ 160 ແກລມ-200 ແກລມ, ກາວລາເຕັກ, ບັນທັດ, ສໍດຳ
- ວິທີຜະລິດ
  - ຂັ້ນຕອນທີ 1: ເລືອກຮູບກ້ອນທີ່ຈະຜະລິດເຊັ່ນ: ຮູບກ້ອນ 4ແຈສາກ, 3ແຈສາກ, ທໍ່ກົມ ........
  - ຂັ້ນຕອນທີ 2: ໃຊ້ບັນທັດແທກຂະໜາດຕາມທີ່ຕ້ອງການ ຕົວຢ່າງຮູບກ້ອນ 4ແຈສາກ ກໍ່ແທກເອົາ 6ດ້ານມີຂະໜາດສະເໝີກັນແທັກຕໍ່ກັນເຊິ່ງແຕ່ລະຂ້າງເທົ່າ 8ຊມ X 8ຊມ. ແລ້ວຈິ່ງປາຍຕິດອອກມາ 1ຊມ
  - ຂັ້ນຕອນທີ 3: ພັບເຂົ້າຫາກັນເປັນຮູບກ້ອນແລ້ວເອົາກາວຕິດສົ້ນໃຫ້ແໜ້ນ ຖືວ່າສຳເລັດ.



## ຮູບທີ ຮູບກ້ອນເລຂາຄະນິດ

➢ **ການນຳໃຊ້**

ໃຊ້ໃນການຮຽນຮູ້ຄະນິດສາດ, ການສຳຜັດ, ຈັດມຸມຫ້ອງຮຽນ ໂດຍເນັ້ນໃຫ້ເດັກໄດ້ຮຽນກ່ຽວກັບຂະໜາດ, ຈຳນວນ,ລັກສະນະຂອງຮູບກ້ອນເລຂາຄະນິດ.

➢ **ບັດເລກແທນຄ່າຈຳນວນ**

- ກະກຽມ: ຖົງຢາງໃສ, ສະກ໋ອດແພ, ແຜ່ນໃສ, ເຝີດດຳ, ສີອາຄີລິກ ຫຼື ສີນ້ຳ ແລະ ຟອຍທາສີ, ຄັດເຕີ້, ມີດຕັດ, ສໍ ແລະ ບັນທັດ.
- ວິທີຜະລິດ
- ຂັ້ນຕອນທີ 1: ແທກບລອກຮູບ ໃຫ້ໄດ້ 2/3 ຂອງເຈ້ຍ A4 ແຕ້ມ ແລະ ລະບາຍຮູບສີຮູບໃສ່
- ຂັ້ນຕອນທີ 2: ແທກຂອບຕົວໜັງສື ໃຫ້ໄດ້ 1/3 A4 ຂຽນຕົວໜັງສືໃສ່ດ້ວຍເຝີດດຳ
- ຂັ້ນຕອນທີ 3: ນຳເອົາຖົງຢາງໃສຕິດໃສ່ໜ້າບັດຮູບພາບປະກອບຕົວເລກດ້ວຍການເອົາສະກ໋ອດ
- ໃສຕິດອ້ອມດ້ານຂ້າງ ແລະ ຂັ້ນລະຫວ່າງຮູບພາບ ແລະ ຕົວເລກ ຖືວ່າສຳເລັດ







*ຮູບທີ15 ບັດເລກແທນຄ່າຈຳນວນ*

- **ຕົວເລກຝາກະຕຸກ ຫຼື ຕົວອັກສອນດ້ວຍຝາກະຕຸກ**
  - ກະກຽມ: ຝາຕຸກນ້ຳຫົວເສືອ ຫຼື ຝາຕຸກແປັບຊີ, ແຜ່ນບອດ, ເຈ້ຍ, ສີ, ຟອຍທາສີ ຫຼື ສີທຽນ
- ວິທີຜະລິດ
  - ຂັ້ນຕອນທີ 1: ຕັດແຜ່ນບອດຂະໜາດ 1ມ x 1ມ ຫຼື ເອົາຂະໜານຕາມທີ່ເຮົາຕ້ອງການ, ແບ່ງເປັນບອດອອກເປັນ 3ແຖວ ແຖວລະ 4ບ່ອກ ແລ້ວຂຽນຕົວເລກໃສ່
  - ຂັ້ນຕອນທີ 2: ຕັດຫົວກະຕຸກນ້ຳຫົວເສື້ອອອກແລ້ວ ໃຫ້ໄດ້ຕາມຈຳນວນທີ່ຕ້ອງການ 1-12 ເປັນຕົ້ນ ແລ້ວຕິດສ່ວນເບື້ອງຕັດໃສ່ແຜ່ນບອດ
  - ຂັ້ນຕອນທີ 3: ແຕ້ມຮູບໃສ່ເຈ້ຍໃຫ້ມີຂະໜາດເທົ່າຝາຕຸກນ້ຳ ແລ້ວຂຽນ ຫຼື ພິມ ຕົວເລກໃສ່ ຈາກນັ້ນຕິດໃສ່ຝາ
  - ຂັ້ນຕອນທີ 4: ເອົາຝາທີ່ຕິດຕົວເລກໃສ່ ຫັນເຂົ້າໃສ່ປາກຕຸກນ້ຳທີ່ຕິດໃນແຜ່ນບອດຕາມຕົວເລກທີ່ແຕ້ມໃສ່ໃນແຜ່ນບອດ ຖືກວ່າສຳເລັດ ດັ່ງຮູບລຸ່ມນີ້:




**ຮູບທີ ຕົວເລກຝາກະຕຸກ**

- **ການນຳໃຊ້**

ໃຫ້ເດັກໄດ້ຮຽນຮູ້ໃນການນັບ, ການແທນຄ່າຈຳນວນ ແລະ ຈັດໃນການຫຼິ້ນຕາມມຸມຂອງຫ້ອງຮຽນອີກດ້ວຍ.

**ໃຈຄວາມ** ວິຊາຄະນິດສາດ ເປັນພື້ນຖານໃນການສຶກສາ ທີ່ໃຊ້ໃນການຄິດໄລ່ຂອງຄົນໃນສັງຄົມ,ທຸກຄົນທີ່ເກີດມາແນ່ນອນວ່າຕ້ອງຮູ້ ຈັກຄ່າຈຳນວນ ເພື່ອຈະນຳໃຊ້ໃຫ້ຖືກຕ້ອງໃນການຮຽນຮູ້ເດັກຈະຕ້ອງຮຽນຮູ້ກ່ຽວກັບຄ່າຈຳນວນຕ່າງໆເປັນສິ່ງສຳຄັນໃນການສອນວິຊາຄະນິດສາດ ສຳລັບເດັກກ່ອນໄວຮຽນນີ້,ເປັນການກະກຽມຄວາມພ້ອມພື້ນຖານ ວິຊາຄະນິດສາດ ໄດ້ຢ່າງວ່ອງໄວເພາະວ່າການຮຽນຮູ້ຄ່າຈຳນວນເປັນການພັດທະນາ ຄວາມຮູ້ຄວາມສາມາດ ແລະ ມີຄວາມຄ່ອງແຄ້ວຂອງເດັກອະນຸບານຄວນເລີ່ມເຮັດເປັນກຸ່ມນ້ອຍໆ, ຫຼືເປັນການສ້າງປະສົບການຈາກຄວາມສຳພັນກັບບຸກຄົນອື່ນໆ ສິ່ງທີ່ຈະຊ່ວຍແມ່ນເລີ່ມຈາກຄວາມສາມາດຄ່ອງແຄ້ວໃນການຮູ້ຄ່າຈຳນວນ ແລະ ໃຫ້ເດັກໄດ້ເຝິກແອບແທນຄ່າຈຳນວນເຝິກແອບປຽບທຽບ,ເຝິກແອບຈຳແນກສີ,ສິ່ງຂອງຕ່າງໆ.

**ຄຳຖາມ:**

1. ຄວາມໝາຍ, ຄວາມສຳຄັນຂອງຄະນິດສາດສຳລັບເດັກມີຄືແນວໃດ ?
2. ຈຸດປະສົງຂອງການສອນຄະນິດສາດສຳລັບເດັກກ່ອນໄວຮຽນມີຫຍັງແດ່ ?
3. ຫຼັກການສອນຄະນິດສາດສຳລັບເດັກກ່ອນໄວຮຽນມີຄແນວໃດ ?
4. ຂອບເຂດເນື້ອໃນຫຼັກສູດຄະນິດສາດສຳລັບເດັກອະນຸບານມີຫຍັງແດ່ ?

**ມອບວຽກບ້ານ:** ໃຫ້ນັກສຶກສາແຕ່ລະຄົນຂຽນບົດລາຍງານໂດຍຫຍໍ້

# ບົດທີ 2
# ການຄຳນວນເບື້ອງຕົ້ນ

ເວລາ 10 ຊົ່ວໂມງ

- **ຈຸດປະສົງໃຫ້ນັກຮຽນຄູສາມາດ:**
  1. ບອກການສອນຈຳນວນເບື້ອງຕົ້ນໄດ້
  2. ເຂົ້າໃຈການນັບໄປໜ້າ-ກັບຫຼັງໄດ້
  3. ເຂົ້າໃຈການນັບຕົວເລກທີ່ຂາດຫາຍໄປໄດ້
  4. ເຂົ້າໃຈຈຳນວນຫຼາຍກ່ວາໜຶ່ງຫົວໜ່ວຍ-ໜ້ອຍກ່ວາໜຶ່ງຫົວໜ່ວຍ

## 1. ການສອນຈຳນວນເບື້ອງຕົ້ນ

ກ່ອນເລີ່ມໄປໂຮງຮຽນເດັກນ້ອຍຈຳນວນນຶ່ງໄດ້ເລີ່ມພັດທະນາຄວາມຮູ້ກ່ຽວກັບເລກຈຳນວນແລ້ວ. ພວກເຂົາຮູ້ວ່າອາຍຸເຂົາເທົ່າໃດ, ເຂົາເຈົ້າຮູ້ວ່າມີອ້າຍ ແລະ ເອື້ອຍຈັກຄົນ. ພວກເຂົາອາດຮູ້ຈັກຊື້ອັນໃດນຶ່ງຫຼາຍກວ່າ 5000 ກີບ ແລະ 1000ກີບ. ເພື່ອພັດທະນາຄວາມຮູ້ຈາກນີ້ ແລະ ເພື່ອພັດທະນາເດັກໃຫ້ມີຄວາມຮັບຮູ້ກ່ຽວກັບຈຳນວນ, ມັນມີຄວາມສຳຄັນທີ່ຕ້ອງສະໜອງກິດຈະກຳທີ່ຈະແຈ້ງຫຼາຍໆອັນໃຫ້ແກ່ນັກຮຽນຊຶ່ງໃຫ້ຮູ້ຂະບວນການຂອງການສອນ:

- ການແຍກປະເພດ/ໝວດໝູ່
- ຮູບແບບ

➢ ການແຍກປະເພດ



ສາມາດແຍກປະເພດຂອງວັດຖຸໃຫ້ເປັນກຸ່ມຊຶ່ງມັນແມ່ນຄວາມຕ້ອງການສຳລັບການພັດທະນາຄວາມຮູ້ສຶກກ່ຽວກັບຈຳນວນ. ຖ້າພວກເຮົາຕ້ອງການໃຫ້ນັກຮຽນສາມາດນັບຈຳນວນຂອງວັດຖຸໄດ້, ຄວາມຄິດທຳອິດຄືນັກຮຽນຕ້ອງສາມາດຈຳແນກວັດຖຸໄດ້. ຕົວຢ່າງ ຖ້າທ່ານຕ້ອງການໃຫ້ນັກຮຽນສາມາດນັບໝາກມ່ວງວ່າມີຈັກໜ່ວຍໃນໝາກໄມ້ທີ່ຮວມກັນໄວ້. ອັນທຳອິດ ນັກຮຽນຕ້ອງສາມາດບອກໄດ້ຄວາມແຕກຕ່າງລະຫວ່າງໝາກມ່ວງ ແລະ

ໝາກໄມ້ຊະນິດອື່ນໆ(ໃຫ້ເບິ່ງຮູບພາບ).

ເພື່ອພັດທະນາໃຫ້ນັກຮຽນມີຄວາມຮັບຮູ້ຕໍ່ກັບເລກຈຳນວນໃນຕອນຕົ້ນຕ້ອງສະໜອງກິດຈະກຳທີ່ຫຼາກຫຼາຍໃຫ້ແກ່ນັກຮຽນເພາະວ່າກິດຈະກຳຈະຊ່ວຍນັກຮຽນໃນການຈັດໝວດໝູ່ຂອງວັດຖຸ. ນັກຮຽນສາມາດຈັດໝ

ວດໝູ່ວັດຖຸໃນຫ້ອງຮຽນ, ເດີ່ນໂຮງຮຽນ, ຈາກເຮືອນຢູ່ ຫຼື ຈາກສະພາບແວດລ້ອມໃນທ້ອງຖິ່ນໄດ້. ການສະສົມວັດຖຸສາມາດຈັດສັນໃຫ້ເຂົ້າກັບໝວດໝູ່ໂດຍອີງໃສ່ຄຸນລັກສະນະທີ່ແຕກຕ່າງຂອງວັດຖຸເຊັ່ນ:

- ສີ (ຕົວຢ່າງ. ສີແດງ, ສີຟ້າ, ສີຂຽວ, ສີດຳ)
- ຮູບຮ່າງ(ຕົວຢ່າງ. ຮູບມົນ, ຮູບສີ່ຫຼ່ຽມ)
- ຂະໜາດ(ຕົວຢ່າງ. ໃຫຍ່, ນ້ອຍ, ຍາວ, ສັ້ນ)
- ພື້ນຜິວນອກ texture (ຕົວຢ່າງ. ຫຍາບ, ໜຸ້ມ)
- ຈຸດປະສົງ(ຕົວຢ່າງ. ສິ່ງຂອງທີ່ໃຊ້ສຳລັບແຕ່ງກິນ, ສິ່ງຂອງທີ່ໃຊ້ສຳລັບຕໍ່າຜ້າ)
- ປະເພດ(ຕົວຢ່າງ. ປະເພດຂອງອຸປະກອນໃນການຜະລິດວັດຖຸເຊັ່ນ- ເຈັ້ຍ, ຢາງ, ແກ້ວ, ໄມ້)
- ຈຳນວນຂອງ(ຕົວຢ່າງ. ສັດມີ 2 ຂາ, ສັດມີ 4 ຂາ ຫຼື ສັດມີຫຼາຍຂາ)

ຊຸກຍູ້ນັກຮຽນໃຫ້ມີຫົວຄິດປະດິດສ້າງໃນການຈັດໝວດໝູ່ ແລະ ຄົ້ນຄິດກັບວິທີການຂອງຕົນເອງໃນການຈັດໝວດໝູ່ຂອງວັດຖຸ.

- ຮູບແບບ

ຮູບແບບຈະຊ່ວຍນັກຮຽນໃນການຈຳແນກສາຍພົວພັນ ແລະ ເຫັນໄດ້ຮູບແບບສະພາບຂອງບັນຫາ. ມັນແມ່ນລັກສະນະທີ່ສຳຄັນຂອງຄະນິດສາດ ແລະ ຮູບແບບຈະຊ່ວຍນັກຮຽນໃຫ້ມີຄວາມສາມາດໃນການວາງຫຼັກເກນ ແລະ  ນຳໄປສູ່ການຄົ້ນຄິດພຶດຊະຄະນິດຍ້ອນຄວາມເຂົ້າໃຈການພັດທະນາຈຳນວນຂອງເຂົາເຈົ້າ.

- ທັກສະຈື່ຈຳນວນໄດ້ໄວໂດຍບໍ່ນັບ:(Subitising) ການຮູ້ຄຸນຄ່າຂອງກຸ່ມ

ທັກສະຈື່ຈຳນວນໄດ້ໄວໂດຍບໍ່ນັບ(Subitising) ມີຄວາມໝາຍວ່າສາມາດຈື່ຈຳຈຳນວນຂອງວັດຖຸໃນກຸ່ມໂດຍບໍ່ມີການນັບ, ໂດຍສະເພາະ, ໃນກຸ່ມທີ່ມີວັດຖຸລະຫວ່າງ 1 ແລະ 5. ທັກສະນີ້ໄດ້ຖືກຕັດສິນວ່າແມ່ນທັກສະນຶ່ງດຽວທີ່ສຳຄັນສຳລັບນັກຮຽນໃນການພັດທະນາຄວາມເຂົ້າໃຈຂອງຈຳນວນຂອງເຂົາເຈົ້າ. ເມື່ອເວລານັກຮຽນຮູ້ທັກສະມັນກໍເປັນການປະຫຍັດເວລາໃນການນັບເລກ. ໃນຕໍ່ມາມັນກໍຊ່ວຍໃນການຄິດໄລ່ເລກໃນໃຈສຳລັບການບວກ ແລະ ການລົບ ແລະ ສ້າງຄວາມເຂົ້າໃຈຂະໜາດຂອງເລກຈຳນວນເຊັ່ນ: 3 ຫຼາຍກວ່າ 2; 4 ຫຼາຍກວ່າ 3;  ແລະ 5 ຫຼາຍກວ່າ 4.

ດ້ວຍທັກສະຈື່ຈຳນວນໄດ້ໄວໂດຍບໍ່ນັບແມ່ນມີຄວາມສຳຄັນໂດຍອີງໃສ່ການຈື່ຈຳຈຳນວນຂອງວັດຖຸຢ່າງວ່ອງໄວຂອງນັກຮຽນໃນການຈັດໝວດໝູ່ໂດຍປັດສະຈາກການນັບດ້ວຍນີ້ງ. ມັນຊ່ວຍໃຫ້ນັກຮຽນຄິດກ່ຽວກັບເລກຈຳນວນໃນວິທີທາງແບບໃໝ່ ແລະ ມີຄວາມຮັບຮູ້ຕໍ່ກັບການປະກອບຈຳນວນທີ່ແຕກຕ່າງກັນ, ຊຶ່ງມັນເຮັດໃຫ້ການຄົ້ນຄິດຂອງນັກຮຽນມີອິດສະລະ ແລະ ນັກຮຽນຈະບໍ່ຕ້ອງນັບ, ນັກຮຽນຈະຈື່ຈຳນວນໄດ້ຢ່າງອັດຕະໂນມັດ ແລະ ຈາກນັ້ນນັກຮຽນກໍສາມາດຄິດໄລ່ເລກໄດ້ທຸກກໍລະນີ. ຕົວຢ່າງ ເມື່ອນັກຮຽນເຫັນໄດ້ວ່ານຶ່ງການຮອບຮວມຂອງສອງວັດຖຸ ແລະ ການຮອບຮວມອັນອື່ນໆຂອງສາມວັດຖຸ ແລະ ຈະຖືກຖາມວ່າ' ມີຫຼາຍປານໃດ' ໂດຍຜ່ານທັກສະຈື່ຈຳນວນໄດ້ໄວໂດຍບໍ່ນັບ, ນັກຮຽນສາມາດຈື່ໄດ້ຢ່າງອັດຕະໂນມັດຂອງການຮອບຮວມວັດຖຸ 2 ອັນ ແລະ 3 ອັນ ບວກເຂົ້າກັນທັງໝົດເປັນເທົ່າໃດໂດຍການຄິດໄລ່ໃນໃຈ.

ເມື່ອເວລາສອນທັກສະຈື່ຈຳນວນໄດ້ໄວໂດຍບໍ່ນັບ(ການຄິດໄລ່ໃນໃຈແບບໄວໆ)ສະແດງໃຫ້ນັກຮຽນເຫັນການຮອບຮອມ/ເຕົ້າໂຮມເອົາວັດຖຸເຂົ້າກັນ ແລະ ໃຫ້ນັກຮຽນບອກວ່າວັດຖຸທີ່ເຂົາເຈົ້າເຫັນມີຫຼາຍປານໃດ(ສະແດງວັດຖຸໃຫ້ນັກຮຽນເບິ່ງດົນເຕີບເພື່ອໃຫ້ເຂົາເຈົ້າສາມາດຈື່ວັດຖຸໄດ້ແຕ່ບໍ່ແມ່ນໃຫ້ນັກຮຽນເບິ່ງດົນໂພດຈົນສາມາດນັບໄດ້). ຈາກນັ້ນກວດສອບເບິ່ງນຳກັນດ້ວຍການນັບຈົນກວ່ານັກຮຽນມີຄວາມໝັ້ນໃຈຂຶ້ນໃນການຄິດໄລ່ໃນໃຈແບບໄວໆ. ອີກວິທີນຶ່ງທີ່ເຮັດໄດ້ຄືການໃຊ້ບັດຄຳທີ່ສະແດງໃຫ້ເຫັນການເປັນຕົວແທນຂອງເລກຈຳນວນ. ຄິດວ່າທ່ານຈະຈັດສັນວັດຖຸແບບໃດເພື່ອຊ່ວຍໃຫ້ນັກຮຽນຈື່ໄດ້



ເຮັດກິດຈະກຳສະແດງບັດຄຳໄວໆໂດຍການສຸ່ມລຳດັບ ແລະ ໃຫ້ນັກຮຽນບອກວ່າໃນແຕ່ລະບັດຄຳມີຫຼາຍປານໃດ. ຫຼິ້ນເກມສະແດງບັດຄຳໃຫ້ນັກຮຽນເບິ່ງ ແລະ ນັກຮຽນຕ້ອງເຮັດຂຶ້ນເອງ ແລະ ໂຈດບັນຫາການເຮັດເລກບວກ ແລະ ເລກລົບໂດຍນຳໃຊ້ເລກຈຳນວນທີ່ສະແດງໃນບັດຄຳນັ້ນ.

ຕົວຢ່າງ ຍົກບັດຄຳສອງອັນຂຶ້ນໄວໆ, ນຶ່ງບັດຄຳສະແດງໃຫ້ເຫັນວ່າມີການຮອບຮອມວັດຖຸຢູ່ ສີ່ອັນ ແລະ ອີກບັດນຶ່ງສະແດງໃຫ້ເຫັນວ່າມີ ສາມ ອັນ. ໃຫ້ນັກຮຽນບອກກ່ຽວກັບຕົວເລກທີ່ເຂົາເຈົ້າເຫັນ. ສິ່ງນຶ່ງທີ່ນັກຮຽນເຫັນອາດບອກວ່າ' ສີ່ ຫຼາຍກວ່າ ສາມ' ອີກເລື່ອງນຶ່ງນັກຮຽນອາດບອກວ່າ' ຖ້າເຮົາມີເປັດ ສີ່ ໂຕ ແລ້ວເຮົາມີຕື່ມອີກສາມໂຕທັງໝົດເຮົາຈະມີເປັດຢູ່ເຈັດໂຕ'.



## 2. ການນັບໄປໜ້າ-ກັບຫຼັງ

- ການນັບໄປໜ້າ

ການນັບໄປໜ້າແມ່ນເວລານັກຮຽນເລີ່ມຕົ້ນນັບເລກທີ່ຄູໃຫ້ແລ້ວນັບຕໍ່ໄປ. ຕົວຢ່າງ. ນັກຮຽນເລີ່ມຕົ້ນນັບເລກ 6 ແລະ ນັບຕໍ່ຈົນຮອດເລກ 20 (6,7,8, 9,...........20). ນີ້ກໍໝາຍຄວາມວ່າບໍ່ແມ່ນເຮົາຈະເລີ່ມຕົ້ນນັບແຕ່ເລກ' 1' ສະເໝີໄປ ແລະ ຄິດເຖິງວ່າເລກຕໍ່ໄປແມ່ນເລກຫຍັງ. ນັກຮຽນທີ່ສາມາດ 'ນັບເລກໄປໜ້າໄດ້' ແລະ ສາມາດນັບເລກໃນລະຫວ່າງຄວາມຕໍ່ເນື່ອງຂອງຕົວເລກໄດ້ໃນແຕ່ລະບ່ອນໄດ້ ແລະ ຮູ້ວ່າຕົວເລກໃດມາກ່ອນ ແລະ ຕົວເລກຕໍ່ໄປແມ່ນເລກຫຍັງ ແລະ ສາມາດນັບຕໍ່ໄປໄດ້ອີກ.

ມີຄວາມສາມາດໃນການນັບໄປໜ້າໄດ້ແມ່ນທັກສະທີ່ສຳຄັນເວລານັກຮຽນກຳລັງຮຽນການບວກ. ນັກຮຽນຈຳເປັນຕ້ອງມີຫຼາຍໆປະສົບການທີ່ແຕກຕ່າງກັນທີ່ນັກຮຽນສາມາດນັບ 'ການນັບແຕ່ໜ້ອຍ-ຫາຫຼາຍ'ເວລານັກຮຽນໄດ້ 2 ຕົວເລກ. ນັກຮຽນນັບຕໍ່ຈາກເລກຈຳນວນຫຼາຍໄປຫາເລກຈຳນວນໜ້ອຍ. ຕົວຢ່າງ. ນັກຮຽນໄດ້ເລກ 3 ແລະ ເລກ 6 ນັກຮຽນເລີ່ມນັບຈາກ 6 ແລະ ຈາກນັ້ນນັບຕໍ່ໄປ 3 ເລກ (ເລີ່ມນັບເລກ 6 ແລະ ນັບ ເລກ 7,8,9 ຄຳຕອບກໍຄື 9).

ກິດຈະກຳນັບໄປໜ້າອີກອັນນຶ່ງທີ່ໃຫ້ການສະໜັບສະໜູນການບວກແມ່ນການນັບໄປໜ້າເຖິງ, ໃຫ້ຕົວເລກເລີ່ມຕົ້ນ ແລະ ຕົວເລກສຸດທ້າຍ, ໜ້າວຽກກໍຄືການຊອກຫາຄວາມແຕກຕ່າງດ້ວຍການຄິດໄລ່ວ່າມີຈຳນວນທີ່ຕ້ອງການເທົ່າໃດເພື່ອນັບໄປໜ້າ. ຕົວຢ່າງ. ເຈົ້າເລີ່ມຕົ້ນທີ່ເລກ 7 ແລະ ສິ້ນສຸດດ້ວຍຈຳນວນທັງ ໝົດແມ່ນ 12, ເຮົາຕ້ອງການນັບເພີ່ມໄປອີກ ຫຼື ຕື່ມເຂົ້າ(ຍັງຂາດເຫຼືອໂຈດບັນຫາເພີ່ມເຂົ້າ).

ນັກຮຽນສາມາດນັບໄປໜ້າເລີ່ມຈາກເລກ 7, (8,9,10,11), ໃຫ້ນັກຮຽນຄິດໄວ້ວ່າເຂົາເຈົ້າຕ້ອງນັບ 4 ຈຳນວນ, ສະນັ້ນ ຈຳນວນແມ່ນ 4. ນັກຮຽນຫຼາຍໆຄົນໃຊ້ນີ້ວມືນັບເລກ, ນີ້ກໍແມ່ນຍຸດທະວິທີທີ່ດີອັນນຶ່ງໃນການນັບ.

- ການນັບກັບຫຼັງ

ການນັບກັບຫຼັງງແມ່ນຍຸດທະວິທີກົງກັນຂ້າມກັບການນັບໄປໜ້າ ແລະ ມັນກໍຊ່ວຍນັກຮຽນໃນການພັດທະນາຄວາມເຂົ້າໃຈການເຮັດເລກລົບ. ນັກຮຽນຈຳເປັນຕ້ອງຮູ້ວ່າຕົວເລກໃດມາກ່ອນຕົວເລກໃດ. ຍຸດທະວິທີສຳລັບການພັດທະນາທັກສະຂອງນັກຮຽນໃນການນັບກັບຫຼັງແມ່ນເວລາເອົາສອງຈຳນວນໃຫ້ແກ່ນັກຮຽນ ແລະ ນັກຮຽນເລີ່ມນັບເລກໃຫຍ່ກ່ອນ ແລະ ນັບກັບຫຼັງໄປຫາເລກນ້ອຍສຸດ. ຕົວຢ່າງ ເວລານັກຮຽນໄດ້ເລກ 13 ແລະ 7, ນັກຮຽນເລີ່ມນັບ 13 ແລະ ນັບກັບຫຼັງ ໃຫ້ໄດ້ເຈັດຄັ້ງ(ໃຊ້ນີ້ວມືຂອງເຂົາເຈົ້າ ນັບ ເພື່ອຮັກສາຄວາມຖືກຕ້ອງ) 12,11,10,9,8,7,6, ສະນັ້ນຄຳຕອບແມ່ນ 6.

ອີກຍຸດທະວິທີນຶ່ງເພື່ອພັດທະນາທັກສະການນັບຂອງນັກຮຽນແມ່ນການນັບກັບຫຼັງແມ່ນເວລານັກຮຽນໄດ້ຕົວເລກເລີ່ມຕົ້ນ ແລະ ຕົວເລກສຸດທ້າຍ ແລະ ນັກຮຽນຕ້ອງຊອກຫາວ່າຈະນັບກັບຫຼັງເທົ່າໃດເພື່ອຮອດຕົວເລກສຸດ

ທ້າຍ(missing subtrahend problem). ອີກອັນນຶ່ງນີ້ວມີແມ່ນເຄີຍໄດ້ຖືກນຳໃຊ້ເພື່ອຊ່ວຍນັກຮຽນເມື່ອເວລາໃຊ້ຍຸດທະວິທີໃນການນັບກັບຫຼັງ. ຕົວຢ່າງ. ເວລາເອົາເລກ 13 ແລະ 6 ແລະ ໃຫ້ນັກຮຽນຄິດໄລ່ອອກມາວ່າຈະນັບກັບຫຼັງເທົ່າໃດຈາກຕົວເລກໃຫຍ່(13) ເພື່ອນັບໃຫ້ຮອດເລກນ້ອຍສຸດ(6). ນັກຮຽນຈະນັບ 12,11,10,9,8,7,6 ສະນັ້ນ ,ຄຳຕອບຄື 7.

### 3. ການນັບຂ້າມ ຫຼື ນັບຕົວເລກທີ່ຂາດຫາຍໄປ

ເມື່ອເວລານັບເລກຫຼາຍກວ່າ 1, ແມ່ນເຈົ້າກຳລັງນັບຂ້າມ. ນັບຂ້າມດ້ວຍ ສອງ (2,4,6,8,10,12.....), ນັບຂ້າມດ້ວຍຫ້າ (5,10,15,20,25.......), ນັບຂ້າມດ້ວຍສິບ (10,20,30,40,50........)ແມ່ນຕົວຢ່າງຂອງການນັບຂ້າມເລກ.

ການນັບຂ້າມຊຸກຍູ້ໃຫ້ນັກຮຽນຊອກຫາຮູບແບບ ແລະ ຟັງສຽງຂອງການນັບ. ນັກຮຽນຄວນຝຶກການນັບຂ້າມແບບປາກເປົ່າ ແລະ ຈຳແນກຮູບແບບທີ່ນັກຮຽນໄດ້ຍິນສຽງຂອງການນັບຕົວຢ່າງ. ເມື່ອເວລານັບຂ້າມດ້ວຍສິບ ແລະ ທັງໝົດການນັບແມ່ນລົງທ້າຍດ້ວຍ' ສິບ'.

ການມີແຜນວາດເລກຈຳນວນທີ່ນັກຮຽນສາມາດເຫັນເລກຈຳນວນໄດ້ໃນຂະນະເວລາທີ່ເຂົາເຈົ້ານັບເລກມັນຈະຊ່ວຍເຂົາເຈົ້າໃນການຈຳແນກຮູບແບບຂອງຈຳນວນໄດ້. ນັກຮຽນສາມາດສັງເກດເລກໂຕສຸດທ້າຍ ແລະ ໄດ້ລົ້ມຄືນຮູບແບບຈຳນວນ ຕົວຢ່າງ. ເວລານັບຂ້າມສອງ, ຕົວເລກສຸດທ້າຍໂດຍປົກກະຕິແລ້ວແມ່ນເລກ 2,4,6,8,0. ເວລານັບຂ້າມ ຫ້າ ເລກສຸດທ້າຍແມ່ນ 5 ຫຼື 0.

ການນັບຂ້າມເລີ່ມຕົ້ນດ້ວຍຈຳນວນທີ່ແຕກຕ່າງກັນຈະຊ່ວຍນັກຮຽນໃນການຈຳແນກຮູບແບບຂອງຈຳນວນ. ຕົວຢ່າງ. ເວລານັບຂ້າມດ້ວຍ 5, ເລີ່ມຕົ້ນທີ່ເລກ 3, ນັກຮຽນຈະຊອກຮູ້ວ່າຈຳນວນສຸດທ້າຍໃນ 3 ຫຼື 8. ນີ້ມັນຈະຊ່ວຍນັກຮຽນພັດທະນາຍຸດທະວິທີທາງດ້ານມັນສະໝອງສຳລັບການເຮັດເລກບວກ ແລະ ການເຮັດເລກລົບ.

ການນັບຂ້າມໄປໜ້າ ແລະ ກັບຫຼັງແມ່ນການລິເລີ່ມຂອງການພັດທະນາຄວາມເຂົ້າໃຈຂອງນັກຮຽນກ່ຽວກັບການຄູນ ແລະ ການຫານ. ຕົວຢ່າງ. ກຸ່ມນັກຮຽນ ເປັນສາມກຸ່ມ,ກຸ່ມນຶ່ງ 10 ຄົນ. ນັກຮຽນສາມາດນັບຂ້າມ 10, 20, 30. ໂດຍພົວພັນກັບການຫານແມ່ນເວລານັກຮຽນກຳລັງຄົ້ນຄິດວ່າກຸ່ມນັກຮຽນ 5 ຄົນໃນຈຳນວນນັກຮຽນ 20 ຄົນຈະມີຈັກກຸ່ມ, ນັກຮຽນເລີ່ມນັບທີ່ເລກ 5 ແລະ ນັບຂ້າມໄປຈົນຮອດ 20, ໃຫ້ບັນທຶກໄວ້ວ່າການນັບມີຈັກເທື່ອ.

### 4. ການສະແດງຈຳນວນດຽວກັນ

ການສະແດງຄ່າຈຳນວນດຽວກັນໝາຍເຖິງຈຳນວນວັດຖຸສິ່ງຂອງຕ່າງທີ່ມີຈຳນວນດຽວກັນ ຫຼືຕົວເລກທີ່ເປັນຈຳນວນດຽວກັນ

ຕົວຢ່າງ 1 :

ຕົ





| | | |
|---|---|---|
| 2 | 2 | 2 |

## 5. ຈຳນວນຫຼາຍກ່ວາໜຶ່ງຫົວໜ່ວຍ-ໜ້ອຍກ່ວາໜຶ່ງຫົວໜ່ວຍ

- ຈຳນວນຫຼາຍກ່ວາໜຶ່ງຫົວໜ່ວຍແມ່ນຈຳນວນທີ່ມີຄ່າເທົ່າ 1 ຂຶ້ນເມືອ

ຕົວຢ່າງ:

| ຫົວສິບ | ຫົວໜ່ວຍ |
|---|---|
| 2 | 0 |
| | 2 |

20 ເປັນຈຳນວນ ສອງ ທີ່ມີ 2 ຢູ່ັກສິບ ແລະ 0 ຢູ່ ຫຼັກຫົວໜ່ວຍ

- ຈຳນວນໜ້ອຍກ່ວາໜຶ່ງຫົວໜ່ວຍແມ່ນຈຳນວນທີ່ບໍ່ມີຕົວເລກຫຼືເທົ່າກັບກັບ 0 ຫຼືໜ້ອຍກ່ວາຫົວໜ່ວຍ

## 6. ເກມມາດຕະຖານ(ພື້ນຖານການບວກ-ລົບ)

ການລົບມີຄວາມສຳພັນກັບການບວກດັ່ງກ່າງຄືຜົນບວກຂອງຈຳນວນສອງຈຳນວນໃດໆເມືອລົບດ້ວຍຈຳນວນໃດຈຳນວນໜຶ່ງໃນສອງຈຳນວນນັ້ນຈະໄດ້ຜົນລົບເທົ່າກັບຈຳນວນທີ່ເຫຼືອ

ຕົວຢ່າງ: 8+5 = 13

13 – 5 = 8

13 – 8 = 5

## 7. ຈຳນວນໃນຮູບແບບປະສົມ

+ ການຈັດໝວດໝູ່: ຮູ້ຈັກສັງເກດລັກສະນະຕ່າງໆຄູ່ກັນ ຫຼື ປະເພດດຽວກັນ

+ ຮູບຊົງກ່ຽວກັບຮູບເລຂາຄະນິດຕ່າງໆ ຮູບວົງມົນ, ຮູບສາມລ່ຽມ, ຮູບສີ່ແຈ ຮູບສາມແຈ, ຮູບຈະຕູລັດ ແລະ ອື່ນໆ

+ ການນັບ ແບບຈື່/ທ່ອງຈຳແມ່ນເວລານັກຮຽນສາມາດເວົ້າກ່ຽວກັບຄວາມຕໍ່ເໜື່ອງຕາມລຳດັບຂອງຊື່ຕົວເລກໃນລຳດັບຄືກັນ ແລະ ສາມາດເວົ້າລົ້ມຄືນເລກຕາມລຳດັບຄວາມຕໍ່ເໜື່ອງໄດ້. ຄວາມຕໍ່ເນື່ອງອາດປະກອບດ້ວຍຊື່ຂອງຕົວເລກທັງໝົດຄື ນຶ່ງຈົນຮອດ ສິບ ຫຼື ນັກຮຽນອາດລືມຕົວເລກໃດນຶ່ງໃນຄວາມຕໍ່ ເນື່ອງນັ້ນ ( 1,2,3,4,

6,7,8,9, 10). ໃນຂະນະທີ່ນັກຮຽນກຳລັງນັບຕົວເລກນັ້ນ, ເຂົາເຈົ້າບໍ່ສາມາດບອກເຈົ້າໄດ້ວ່າ' ວັດຖຸມີເທົ່າໃດ'ໃນການຮວມວັດຖຸ, ເຂົາເຈົ້າມີແຕ່ເວົ້າລົ້ມຄືນຊື່ຕົວເລກຕາມຄວາມຕໍ່ເນື່ອງຂອງມັນເທົ່ານັ້ນ.

+ ການວັດແທກໝາຍເຖິງການທຽບວັດຖຸສິ່ງຂອງຕ່າງໆໃສ່ຫົວໜ່ວຍມາດຕະຖານ ເຊັ່ນ: ການວັດແທກຫົວໜ່ວຍແມ່ນ ແມັດ , ເດຊີແມັດ ......, ການວັດແທກບໍລິມາດຫົວໜ່ວຍ ແມ່ນ ລິດ , ເດຊີລິດ ......, ການຊັ່ງຫົວໜ່ວບແມ່ນ ກິໂລກຼາມ ......, ເງິນຫົວໜ່ວຍແມ່ນກີບ, ເວລາຫົວໜ່ວຍແມ່ນຊົ່ວໂມງ ...... ,ຄວາມຄິດຂອງເດັກກຽ່ວກັບເວລາ, ເງິນ , ການຊັ່ງ , ການຜອງ ແລະ ການວັດແທກຍັງບໍ່ທັນມີຫຼາຍ, ແຕ່ເດັກຈະມີປະສົບການໃນດ້ານນີ້ເພີ່ມຂຶ້ນ.

+ ການລວມກຸ່ມ ແມ່ນການເອົາສິ່ງຂອງກອງລວມເຂົ້າກັນເປັນກຸ່ມໃຫຍ່ ຊຶ່ງມີຫຼາຍກໍລະນີຄື:

- ວັດຖຸ ຫຼື ຮູບພາບສະນິດດຽວກັນ, ຂະໜາດເທົ່າກັນ, ຈຳນວນເທົ່າກັນ ຫຼື ບໍ່ເທົ່າກັນ
- ວັດຖຸ ຫຼື ຮູບພາບຊະນິດດຽວກັນ, ຂະໜາດຕ່າງກັນ.
- ວັດຖຸ ຫຼື ພາບຊະນິດຕ່າງກັນ.

+ ການປຽບທຽບຈຳນວນແມ່ນອົງປະກອບຂອງກຸ່ມທີ່ສ້າງຂຶ້ນໂດຍອີງໃສ່ເງື່ອນໄຂບາງຢ່າງ ເຊັ່ນ : ດອກໄມ້, ໝາກບານ, ກີບ, ລົດ ແລະ ອື່ນໆ

+ ການຈັດກຸ່ມແມ່ນການເລືອກສິ່ງຂອງທີ່ຄືກັນ ຫຼື ປະເພດດຽວກັນມາວາງໄວ້ບ່ອນດຽວກັນ ( ຮ່ວມກັນ ) ເຊັ່ນ: ໃຫ້ເດັກເອີ້ນຊື່ສິ່ງຂອງທີ່ແມ່ນເຄື່ອງໃຊ້ປະເພດດຽວກັນ ( ໝວກ, ເກີບ, ຖົງຕີນ ).

**ໃຈຄວາມ:** ການສອນຈຳນວນເບື້ອງຕົ້ນກ່ອນເລີ່ມໄປໂຮງຮຽນເດັກນ້ອຍຈຳນວນນຶ່ງໄດ້ເລີ່ມພັດທະນາຄວາມຮູ້ກ່ຽວກັບເລກຈຳນວນແລ້ວ. ພວກເຂົາຮູ້ວ່າອາຍຸເຂົາເທົ່າໃດ, ເຂົາເຈົ້າຮູ້ວ່າມີອ້າຍ ແລະ ເອື້ອຍຈັກຄົນ. ພວກເຂົາອາດຮູ້ຈັກຊື້ອັນໃດນຶ່ງຫຼາຍກວ່າ 5000 ກີບ ແລະ 1000ກີບ. ເພື່ອພັດທະນາຄວາມຮູ້ຈາກນີ້ ແລະ ເພື່ອພັດທະນາເດັກໃຫ້ມີຄວາມຮັບຮູ້ກ່ຽວກັບຈຳນວນ, ມັນມີຄວາມສຳຄັນທີ່ຕ້ອງສະໜອງກິດຈະກຳທີ່ຈະແຈ້ງຫຼາຍໆອັນໃຫ້ແກ່ນັກຮຽນຊຶ່ງໃຫ້ຮູ້ຂະບວນການຂອງການສອນ:

**ຄຳຖາມ:**

1. ການສອນຈຳນວນເບື້ອງຕົ້ນໝາຍເຖິງຫຍັງ ?
2. ການນັບໄປໜ້າ-ກັບຫຼັງ ໝາຍເຖິງຫຍັງ ?
3. ການນັບຂ້າມ ຫຼື ນັບຕົວເລກທີ່ຂາດຫາຍໄປໝາຍເຖິງຫັຍງ ?
4. ການສະແດງຈຳນວນດຽວກັນມີຄືແນວໃດ ?
5. ຈຳນວນຫຼາຍກ່ວາໜຶ່ງຫົວໜ່ວຍ-ໜ້ອຍກ່ວາໜຶ່ງຫົວໜ່ວຍໝາຍເຖິງຫຍັງ ?

**ມອບວຽກບ້ານ:** ໃຫ້ນັກສຶກສາແຕ່ລະຄົນຂຽນບົດລາຍງານໂດຍຫຍໍ້

# ບົດທີ 3

# ວິທີສອນການປຽບທຽບ

ເວລາ 5 ຊົ່ວໂມງ

- **ຈຸດປະສົງໃຫ້ນັກຮຽນຄູສາມາດ:**

1. ອະທິບາຍຄວາມໝາຍຂອງການປຽບທຽບໄດ້
2. ເຂົ້າໃຈການຈັດກິດຈະກຳການຮຽນ-ການສອນການປຽບທຽບ
3. ແຕ່ງບົດສອນ ແລະສອນຕົວຈິງໄດ້

## 1. ຄວາມໝາຍຂອງການປຽບ

ການປຽບທຽບແມ່ນການປຽບທຽບວັດຖຸສິ່ງຂອງຕ່າງໆທີ່ຄືກັນ ແລະ ແຕກຕ່າງກັນທາງດ້ານສີ, ຈຳນວນ, ຂະໜາດ ( ໃຫຍ່, ນ້ອຍ, ຍາວ - ສັ້ນ, ຕ່ຳ - ສູງ ) ປະລິມານ ( ໜ້ອຍ - ຫຼາຍ ), ຮູບຮ່າງ, ຈຳນວນ ເພື່ອໃຫ້ເດັກມີຄວາມສຳນຶກເບື້ອງຕົ້ນກ່ຽວກັບບັນຫາເຫຼົ່ານັ້ນ

**ຕົວຢ່າງ:** ທາງດ້ານຈຳນວນ.




**ຕົວຢ່າງ:** ດ້ານຂະໜາດ

**ໃຫຍ່** **ນ້ອຍ**



**ສັ້ນ**



**ຍາວ**




**ຕົວຢ່າງ:** ດ້ານປະລິມານ



## 2. ການຈັດກິດຈະກຳການຮຽນ-ການສອນການປຽບທຽບ

### 2.1 ວິທີສອນການປຽບທຽບໃຫ່ຍກ່ວາ-ນ້ອຍກ່ວາ

- ວາງຮູບພາບລົດໃຫ່ຍກ່ວາ ຂຶ້ນໃຫ້ເດັກຖາມເດັກວ່ານີ້ແມ່ນຮູບພາບຫຍັງ ໃຫ່ຍຫຼື ນ້ອຍ
- ວາງຮູບພາບລົດນ້ອຍກ່ວາ ຂຶ້ນໃຫ້ເດັກຖາມເດັກວ່ານີ້ແມ່ນຮູບພາບຫຍັງ ນ້ອຍ ຫຼື ໃຫ່ຍ
- ວາງຮູບພາບທັງສອງອັນໄວ້, ປຽບທຽບຮູບພາບໃຫ່ຍກວ່າ - ນ້ອຍກວ່າ ຈາກຮູບພາບ

**ຕົວຢ່າງ:**

**ລົດຕູ້** **ໃຫ່ຍກວ່າ** **ລົດເກັ່ງ**





### 2.2 ວິທີສອນການປຽບທຽບຫຼາຍກ່ວາ-ໜ້ອຍກ່ວາ

- ວາງຮູບພາບທີ່ມີຈຳນວນຫຼາຍກ່ວາ ແລະ ນັບຈຳນວນ
- ວາງຮູບພາບທີ່ມີຈຳນວນໜ້ອຍກ່ວາ ແລະ ນັບຈຳນວນ
- ປຽບທຽບຈຳນວນຫຼາຍກວ່າ ແລະ ຈຳນວນໜ້ອຍກວ່າ

ຕົວຢ່າງ

**ໝາກແອັບເປີ້ນ 5 ໜ່ວຍ** **ຫຼາຍກ່ວາ** **ໝາກແອັບເປີ້ນ 3 ໜ່ວຍ**







### 2.3 ວິທີສອນການປຽບທຽບສັ້ນ-ຍາວ, ສູງກ່ວາ-ຕ່ຳກ່ວາ

- ວາງສໍດໍາ ຂຶ້ນໃຫ້ເດັກສັງເກເບິ່ງ, ຖາມເດັກວ່ານີ້ແມ່ນຫຍັງ ສັ້ນ ຫຼື ຍາວ
- ວາງ ໄມ້ບັນທັດຍາວ ຂຶ້ນໃຫ້ເດັກສັງເກດເບິ່ງ, ຖາມເດັກວ່ານີ້ແມ່ນຫຍັງ ຍາວ ຫຼື ສັ້ນ
- ຍົກໄມ້ບັນທັດ ກັບ ສໍດໍາ ປຽບທຽບສັ້ນກວ່າ - ຍາວກວ່າ ຈາກໄມ້ບັນທັດ ແລະ ສໍາດໍາ

**ຕົວຢ່າງ:**

**ສໍດໍາ** **ສັ້ນກວ່າ** **ໄມ້ບັນທັດ**





ຕົວຢ່າງ:

**ໂຕະ** **ສູງກ່ວາ** **ຕັ່ງ**





**2.4 ວິທີສອນການປຽບທຽບໜັກກ່ວາ-ເບົາກ່ວາ**

- ວາງຖ້ວຍທີ່ໜັກກ່ວາ ແລະ ບ່ວງທີ່ ເບົາກວ່າ ໄວ້ຕໍ່ໜ້າເດັກແລ້ວໃຫ້ເດັກແຕ່ລະຄົນອອກມາສຳຜັດຫຼື ຍົກ ຖ້ວຍກັບບ່ວງຂຶ້ນສົນທະນາກັບເດັກວ່າລະຫ່ວາງຖ້ວຍ ກັບ ບ່ວງ ອັນໃດ ໜັກກ່ວາ ຫຼື ເບົາກ່ວາ

- ປຽບທຽບຮູບພາບໜັກກວ່າ - ເບົາກວ່າ ຈາກຮູບພາບ

**ຕົວຢ່າງ**

**ຖ້ວຍ** **ໜັກກວ່າ** **ບ່ວງ**





## 2. ການແຕ່ງບົດສອນ ແລະ ຜະລິດອຸປະກອນ

ການແຕ່ງບົດສອນໝາຍເຖິງການທີ່ຄູໄດ້ວາງແຜນກ່ອນການດຳເນີນກິດຈະກຳໃດໜຶ່ງເຊິ່ງປະກອບດ້ວຍການກຳນົດຈຸດປະສົງ, ການວາງເນື້ອໃນ, ຮູບແບບ ແລະ ກິດຈະການການການຮຽນ ການສອນ ແລະ ການກະກຽມສື່ການສອນປະກອບເຂົ້າໃນກິດຈະກຳການສອນຢ່າງລະອຽດ, ການແຕ່ງບົດສອນແຕ່ລະຄັ້ງຄູອະນຸບານຕ້ອງໄດ້ສຶກສາປຶ້ມແຜນຈັດປະສົບການໃນໂຮງຮຽນລ້ຽງເດັກ - ອະນຸບານໃນແຕ່ລະສົກອາຍຸເດັກເປັນຫຼັກໃນການສ້າງແຜນການສອນປະສົມປະສານກັບແນວຄວາມຄິດໃນການອອກແບບການສອນ, ແບບບູລະນະການ, ຄູສະຫຼຸບລວມແລ້ວການແຕ່ງບົດສອນແມ່ນການກະກຽມຄວາມພ້ອມກ່ອນລ່ວງໜ້າຂອງຄູ ເພື່ອໃຫ້ການຮຽນການສອນລະຫວ່າງຄູ ແລະເດັກ ໃຫ້ບັນລຸຕາມຈຸດປະສົງທີ່ວາງໄວ້ ເຊິ່ງລາຍລະອຽດຂອງບົດສອນ

## 3. ການເຝິກສອນຕົວຈິງ

- ຄູແບ່ງນັກສຶກສາຄູອອກເປັນກຸ່ມ
- ໃຫ້ແຕ່ລະກຸ່ມຝຶກປ່ຽນກັນສອນພາຍໃນກຸ່ມ
- ສອນແລ້ວແຕ່ລະກຸ່ມຮ່ວມກັນຖອດຖອນບົດຮຽນເຊິ່ງກັນ ແລະ ກັນພາຍໃນກຸ່ມເພື່ອເປັນການປັບປຸງວິທີສອນໃຫ້ສອດຄ່ອງກັບເດັກແຕ່ລະສົກອາຍຸ
- ສົ່ງຕົວແທນໃນກຸ່ມຕົນເອງມາສອນໃຫ້ກຸ່ມອື່ນເບິ່ງເພື່ອແລກປ່ຽນບົດຮຽນເຊິ່ງກັນ ແລະ ບູລະນາການທີ່ໜ້າສົນໃຈຂອງເດັກໃຫ້ແກ່ເດັກແຕ່ລະສົກອາຍຸ

### 3.1 ເຝິກສອນຕົວຈິງໃນຂັ້ນລ້ຽງເດັກໃຫ່ຍ

### ບົດສອນ

- ໜ່ວຍ: ສິ່ງແວດລ້ອມອ້ອມຕົວເຮົາ — ອາທິດທີ່ 3: ມື້ທີ່3
- ກິດຈະກຳວົງມົນ — ເວລາ 15-20 ນາທີ
- ຫົວຂໍ້: ການສອນຄະນິດສາດ — ຂັ້ນລ້ຽງເດັກໃຫ່ຍ

| ຈຸດປະສົງ | ເນື້ອໃນ | ກິດຈະກຳ | ອຸປະກອນ | ປະເມີນ |
|---|---|---|---|---|
| | | **ຂັ້ນນຳເຂົ້າສູ່ບົດຮຽນ**<br>- ຄູຈັດເດັກເຂົ້າສູ່ລະບຽບ<br>- ຄູສົນທະນາກັບເດັກດ້ວຍການສົນທະນາວ່າເວລາໄປວັດເຮົາຈະປະຕິບັດຕົນຄືແນວໃດ<br>**ຂັ້ນດຳເນີນການສອນ**<br>- ຄູສະເໜີໃຫ້ເດັກຮູ້ກ່ອນວ່າ | | |

| | | | | |
|---|---|---|---|---|
| ເພື່ອໃຫ້ເດັກສາມາດປຽບທຽບ: ໜັກເບົາ ໄດ້ | ການປຽບທຽບກະປ໋ອງຊາຍ: ໜັກ,ເບົາ | ມື້ນີ້ສາວຄູຈະພາພວກຫຼານຮຽນກ່ຽວກັບການປຽບທຽບ: ໜັກເບົາ<br>- ຄູເອົາກະປ໋ອງຊາຍທີ່ກຽມໄວ້ມາວາງໄວ້ຕໍ່ໜ້າເດັກແລ້ວຖາມເດັກວ່ານີ້ແມ່ນຫຍັງ ແລ້ວບອກໃຫ້ເດັກສັງເກດເບິ່ງ ( ໃຫ້ເດັກຕອບຕາມຄວາມເຂົ້າໃຈ )<br>- ສາວຄູໃຫ້ເດັກອອກມາຈັບກະປ໋ອງຊາຍແລ້ວຍໍຂຶ້ນພ້ອມທັງໃຫ້ບອກວ່າກະປ໋ອງໃດໜັກ ແລະ ກະປ໋ອງໃດເບົາກ່ວາກັນ<br>- ສາວຄູໃຫ້ເດັກອາສາສະໝັກອອກມາຍໍກະປ໋ອງພ້ອມທັງບອກໝູ່ວ່າອັນໃດໜັກ ອັນໃດເບົາ 1-2 ຄົນ<br>- ຄູຕິດຕາມຊ່ວຍເຫຼືອເດັກຜູ້ທີ່ເຮັດບໍ່ທັນໄດ້ດີ ( ຍ້ອງຍໍຊົມເຊີຍເດັກ )<br>**ຂັ້ນສະຫຼຸບບົດຮຽນ**<br>- ມື້ນີ້ສາວຄູໃຫ້ພວກຫຼານເຮັດຫຍັງ ( ໃຫ້ເດັກຕອບ )<br>- ສາວຄູໃຫ້ເດັກອອກມາປຽບທຽບໜັກ-ເບົາຄືນອີກ.<br>• **ສຶກສາອົບຮົມເດັກ**<br>- ພວກຫຼານເວລາກິນເຂົ້າໜົມແລ້ວບໍ່ຕ້ອງຖິ້ມສະຊາຍເດີມັນຈະເຮັດເປີເປື້ອນ... | ກະປ໋ອງຊາຍ2 ປ໋ອງ( ໜັກ,ເບົາ ) | ສັງເກດການ<br>ປຽບທຽບໜັກ, ເບົາຂອງເດັກແຕ່ລະຄົນ |

3.2 ເຝິກສອນຕົວຈິງໃນຊັ້ນອະນຸບານ

## ບົດສອນແບບຢ່າງ

- ໜ່ວຍ: ສິ່ງແວດລ້ອມອ້ອມຕົວເຮົາ

- ກິດຈະກໍາວົງມົນ ການສອນຄະນິດສາດ ອາທິດທີ່ 4: ມື້ທີ່1

- ອະນຸບານ 1 ເວລາ 15 - 20 ນາທີ

| ຈຸດປະສົງ | ເນື້ອໃນ | ກິດຈະກໍາ | ອຸປະກອນ | ປະເມີນ |
|---|---|---|---|---|
| - ເພື່ອໃຫ້ເດັກສາມາດປຽບທຽບຈໍານວນເທົ່າກັນ ແລະບໍ່ເທົ່າກັນຂອງຈໍານວນ1-3ນໍາຄູໄດ້. | -ການປຽບທຽບຈໍານວນເທົ່າກັນ ແລະ ບໍ່ເທົ່າກັນແຕ່ 1-3. | **ຂັ້ນນໍາເຂົ້າສູ່ບົດຮຽນ**<br>- ຄູສົນທະນາກ່ຽວກັບການປົກປັກຮັກສາວັດມີແນວໃດແດ່?(ເດັກຕອບ).<br>**ຂັ້ນດໍາເນີນການສອນ**<br>- ຄູສະເໜີໃຫ້ເດັກຮູ້ກ່ອນວ່າມື້ນີ້ສາວຄູຈະພາພວກຫຼານຮຽນກ່ຽວກັບການປຽບທຽບກ້ອນຫີນ 2 ກອງເທົ່າກັນ ແລະ ບໍ່ເທົ່າກັນຂອງຈໍານວນ1-3.<br>- ສາວຄູເອົາກ້ອນຫີນ2ກອງມາໃຫ້ເດັກເບິ່ງພ້ອມທັງປຽບທຽບຈໍານວນເທົ່າກັນ ແລະ ບໍ່ເທົ່າກັນຂອງຈໍານວນ 1-3<br>- ຄູອະທິບາຍ ແລະສາທິດໃຫ້ເດັກເບິ່ງກ່ອນ 1-3ເທື່ອ.<br>-ຄູໃຫ້ເດັກອາສາສະໝັກອອກມາປຽບທຽບຈໍານວນເທົ່າກັນ ແລະ ບໍ່ເທົ່າກັນຂອງຈໍານວນ 1-3 ເທື່ອລະຄົນ(ຄູຍ້ອງຍໍແລະ ຊົມເຊີຍເດັກ).<br>- ຄູຕິດຕາມຊ່ວຍເຫຼືອເດັກຜູ້ທີ່ເຮັດບໍ່ທັນໄດ້ດີ ( ຍ້ອງຍໍຊົມເຊີຍເດັກ )<br>**ຂັ້ນສະຫຼຸບບົດຮຽນ**<br>- ມື້ນີ້ສາວຄູພາພວກຫຼານຮຽນຫຍັງແດ່? -ຮຽນການປຽບທຽບຫັຍງແດ່ (ໃຫ້ເດັກຕອບ )ຄືນອີກ.<br>• **ສຶກສາອົບຮົມເດັກ**<br>- ພວກຫຼານກັບບ້ານຕ້ອງເຊື່ອຟັງຄວາມພໍ່ແມ່ ແລະເປັນເດັກຄໍາຮູ້ອີກເດີ. | -ກ້ອນຫີນ2ກອງແລະຕົວເດັກ. | - ສັງເກດການປຽບທຽບຈໍານວນເທົ່າແລະບໍ່ເທົ່າກັນແຕ່ 1-3 ຂອງເດັກແຕ່ລະຄົນ |

| | | | | |
|---|---|---|---|---|
| | | | | |

**ປະເມີນຜົນການຮຽນ**

| ລຳດັບ | ຫົວຂໍ້ການປະເມີນ | ດີ/ຄົນ | ປານກາງ/ຄົນ | ປັບປຸງ/ຄົນ |
|---|---|---|---|---|
| 1 | - ສັງເກດການປຽບທຽບ ຈຳນວນເທົ່າແລະບໍ່ເທົ່າກັນ ແຕ່ 1-3 ຂອງເດັກ ແຕ່ລະຄົນ | | | |

## ບົດສອນ

ໜ່ວຍ:ສິ່ງແວດລ້ອມອ້ອມຕົວເຮົາ

ກິດຈະກຳ: ວົງມົນ　　　　　　　　　　　　　　　　　　　　ເວລາ 20 -25ນາທີ

ຫົວຂໍ້:ປຽບທຽບຈຳນວນນ້ອຍໜ້ອຍ - ຈຳນວນຫຼາຍ　　　　　　　　　ຊັ້ນ ອະນຸບານ2

| ຈຸດປະສົງ | ເນື້ອໃນ | ກິດຈະກຳການຮຽນ-ການສອນ | ເວລາ | ອຸປະກອນ | ປະເມີນ |
|---|---|---|---|---|---|
| | | **1,ຂັ້ນນຳເຂົ້າສູ່ບົດຮຽນ**<br>-ຈັດເດັກເປັນຮູບວົງມົນ<br>-ຄູແລະເດັກເຄົາລົບເຊິ່ງກັນແລະ ກັນ<br>-ຄູກວດກາຈຳນວນຄົນຂາດ<br>-ຄູພາເດັກສ້າງບັນຍາກາດໂດຍ | 5 ນາທີ | | |

| | | | | | |
|---|---|---|---|---|---|
| -ເພື່ອໃຫ້ເດັກປຽບທຽບຈຳນວນນ້ອຍໜ້ອຍ - ຈຳນວນຫຼາຍນຳໄດ້ | -ປຽບທຽບຈຳນວນນ້ອຍໜ້ອຍ - ຈຳນວນຫຼາຍ | ການຮ້ອງເພງ ກະປຸ<br>-ຍ້ອງຍໍຊົມເຊີຍເດັກ<br>**2,ຂັ້ນດຳເນີນການສອນ**<br>-ຄູສະເໜີກິດຈະກຳທີ່ຈະພາເດັກຮຽນກິດຈະກຳວົງມົນ, ຫົວຂໍ້: ປຽບທຽບຈຳນວນນ້ອຍໃຫຍ່<br>-ຄູສົນທະນາກັບເດັກກ່ຽວກັບການປຽບທຽບຈຳນວນນ້ອຍໃຫຍ່<br>-ເດັກຕອບ<br>-ຍ້ອງຍໍຊົມເຊີຍເດັກ<br>-ຄູຍົກສໍໃຫ້ເດັກເບິ່ງ1-2ຄັ້ງແລ້ວໃຫ້ເດັກຮູ້ຈຳນວນນ້ອຍຫຼາຍ<br>-ຄູໃຫ້ເດັກອອກມາຈຳແນກຈຳນວນນ້ອຍຫຼາຍໃຫ້ໝູ່ເບິ່ງ1-2 ຄັ້ງ<br>-ຍ້ອງຍໍຊົມເຊີຍເດັກ<br>-ຄູໃຫ້ເດັກປະຕິບັດຕົວຈິ່ງ<br>-ໃຫ້ເດັກຜັນປ່ຽນກັນອອກມານັບແຕ່ລະຄົນ<br>-ຄູຕິດຕາມແລະຊ່ວຍເຫລືອເດັກຜູ້ທີ່ປະຕິບັດ ບໍ່ທັນໄດ້ດີ<br>-ຍ້ອງຍໍຊົມເຊີຍເດັກ<br>**3,ຂັ້ນສະຫລຸບ**<br>-ຄູຖາມຄືນວ່າ: ຄູພາພວກຫຼານຈຳນວນຫຍັງແນ່?<br>-ເດັກຕອບ<br>-ຄູຍ້ອງຍໍຊົມເຊີຍເດັກ.<br>- ຄູໃຫ້ເດັກຜູ້ທີ່ປະຕິບັດບໍ່ທັນໄດ້ດີອອກມານັບເລກໃຫ້ຫມູ່ເບິ່ງຄືນ<br>**+ສຶກສາອົບຮົມເດັກ**:ພວກຫຼານຕ້ອງຮັກແພງກັນ,ຕັ້ງໃຈຮຽນນຳຄູ<br>-ໃຫ້ເດັກພັກຜ່ອນ | 15 ນາທີ<br><br>5 ນາທີ | -ສໍດຳ | -ສັງເກດຄວາມຖືກຕ້ອງໃນປຽບທຽບຈຳນວນນ້ອຍໜ້ອຍ - ຈຳນວນຫຼາຍ |

## ປະເມີນຜົນການຮຽນ

| ລຳດັບ | ຫົວຂໍ້ການປະເມີນ | ດີ/ຄົນ | ປານກາງ/ຄົນ | ປັບປຸງ/ຄົນ |
|---|---|---|---|---|
| 1 | -ສັງເກດຄວາມຖືກຕ້ອງ ໃນການປຍ-ທຽບຈຳນວນ ນວນນ້ອຍ-ຫຼາຍ | | | |

## ບົດສອນ

- ໜ່ວຍ: ສິ່ງແວດລ້ອມອ້ອມຕົວເຮົາ
- ກິດຈະກຳ: ວົງມົນ
- ຂັ້ນອະນຸບານ 2 ເວລາ: 20-25 ນາທີ
- ອາທິດທີ: 4 ມື້ທີ: 2
- ຫົວຂໍ້: ການປຽບທຽບຈຳນວນຮູບພາບເຮືອບິນຫຼາຍກ່ວາ: 5 ຫຼາຍກ່ວາ: 4

| ຈຸດປະສົງ | ເນື້ອໃນຕົ້ນຕໍ | ກິດຈະກຳການຮຽນ-ການສອນ | ອຸປະກອນ | ວັດແລະປະເມີນ |
|---|---|---|---|---|
| - ຝຶກໃຫ້ເດັກສາມາ | - ການປຽບທຽບຈຳນວນຮູບພາບເຮືອບິນ | 1 ຂັ້ນນຳເຂົ້າສູ່ບົດຮຽນ<br>- ຄູທັກທາຍສະບາຍດີ<br>- ກວດກາຈຳນວນຜົນ<br>- ຄູພາເດັກສ້າງບັນຍາກາດດ້ວຍການໃຊ້ຄຳທວາຍ: ແມ່ນຫຍັງນໍ! ບິນຢູ່ເທິງຟ້າ ຍາມບິນກາຍມາສຽງດັງຫຶ່ມໆ?<br>2 ຂັ້ນດຳເນີນການສອນ<br>- ຄູສະເໜີບົດຮຽນທີ່ຈະຮຽນມື້ນີ້ສາວຄູຈະພາພວກຫຼານຮຽນກ່ຽວກັບການປຽບທຽບຈຳນວນຮູບພາບເຮືອບິນຫຼາຍກ່ວາ:5 ຫຼາຍກ່ວາ:4<br>- ຄູສົນທະນາກັບເດັກກ່ຽວກັບເຮືອບິນ (ຍົນ) | - ຮູບພາບ: ສະໜາມບິນ | - ສັງເກດການປຽບທຽບຈຳນວນ |

| | | | | |
|---|---|---|---|---|
| ປຽບທຽບຈຳນວນຫຼາຍກ່ວາໃຫ້ຖືກຕ້ອງ | ຫຼາຍກ່ວາ: 5 ຫຼາຍກ່ວາ: 4 | - ຄູອະທິບາຍ ແລະ ສາທິດໃຫ້ເດັກສັງເກດເບິ່ງ 1-2 ເທື່ອ<br>- ຄູໃຫ້ເດັກປຽບທຽບຮູບພາບເຮືອບິນຫຼາຍກ່ວາ 5 ຫຼາຍກ່ວາ 4<br>- ຄູໃຫ້ເດັກປະຕິບັດຕົວຈິງ<br>- ຄູເປັນຜູ້ແນະນຳ ແລະ ຊ່ວຍເຫຼືອເດັກຜູ້ທີ່ເຮັດບໍ່ທັນເປັນ<br>- ໃຫ້ເດັກອາສາສະໝັກອອກມາເຮັດໃຫທ້ໝູ່ເບິ່ງ<br>3 ຂັ້ນສະຫຼຸບບົດຮຽນ<br>- ສາວຄູຖາມເດັກຄືນວ່າມື້ນີ້ສາວຄູພາພວກຫຼານຮຽນກ່ຽວກັບຫຍັງ? ແລະເອົາຮູບຫຍັງແດ່? ມາໃຫ້ພວກຫຼານເບິ່ງ? (ເດັກຕອບ)<br>- ໃຫ້ເດັກອາສາສະໝັກອອກມາເວົ້າຄືນ 1-2 ຄົນ<br>ຂັ້ນສຶກສາອົບຮົມເດັກ<br>- ພວກຫຼານຕ້ອງເປັນເດັກຄຳຮູ້ຟັງຄວາມພໍ່ແມ່ ແລະ ສາວຄູ, ເວລາຮຽນໜັງສືໃຫ້ຕັ້ງໃຈຮຽນ, ບໍ່ໃຫ້ກວນກັນ ແລະ ບໍ່ຄວນລົມກັນໃນເວລາຮຽນໜັງສື | ແລະ ເຮືອບິນ | ຫຼາຍກ່ວາ |

**ປະເມີນຜົນການຮຽນ**

| ລຳດັບ | ຫົວຂໍ້ການປະເມີນ | ດີ/ຄົນ | ປານກາງ/ຄົນ | ປັບປຸງ/ຄົນ |
|---|---|---|---|---|
| 1 | -ສັງເກດການປຽບທຽບຈຳນວນຫຼາຍກ່ວ | | | |

# ບົດສອນ

ໜ່ວຍ: ໂຮງຮຽນຂອງຂ້ອຍ

ກິດຈະກຳວົງມົນ ການສອນຄະນິດສາດ

ຫົວຂໍ້: ການປົກປັກຮັກສາຫ້ອງຮຽນ ອາທິດທີ 2 ມື້ທີ 4

ຊັ້ນ ອະນຸບານ3 ເວລາ: 25-30 ນາທີ

ວັນທທີສອນ................................ ຜູ້ແຕ່ງ..........................

| ຈຸດປະສົງ | ເນື້ອໃນ | ກິດຈະກຳການຮຽນ - ການສອນ | | ອຸປະກອນ | ປະເມີນ |
|---|---|---|---|---|---|
| | | ➢ ຂັ້ນນຳເຂົ້າສູ່ບົດຮຽນ<br>- ຄູໃຫ້ເດັກນັ່ງເປັນວົງມົນ, ໃຫ້ເດັກຮອງເພງປະກອບທ່າທາງ (ເຮັດທ່າທາງປັດກວດຫ້ອງຮຽນ) | | | |
| ໃຫ້ເດັກສາມາດບອກວິທີບົວລະບັດຫ້ອງຮຽນໃຫ້ສະອາດ<br><br>ໃຫ້ເດັກສາມາວັດແທກປະລິມານໄດ້ | ໝັ່ນປັດກວດ ແລະ ເຊັດຖູເປັນປະຈຳ<br><br>ການວັດແທກປະລິມານ | ➢ ຂັ້ນດຳເນີນການສອນ<br>- ຄູນຳເອົາຮູບພາບຫ້ອງຮຽນມາໃຫ້ເດັກສັງເກດແລ້ວຖາມເດັກວ່ານີ້ແມ່ນຮູບພາບຫຍັງ ?ມີຫຍັງແດ່ ( ຫ້ອງຮຽນ : ມີໂຕະ - ນັ່ງນັກຮຽນ,ມີກະດານດຳ ແລະ ມີໂຕະຄູ)<br>- ຄູແລະເດັກຮ່ວມກັນສົນທະນາກ່ຽວກັບການບົວລະບັດຮັກສາຄວາມສະອາດຂອງຫ້ອງຮຽນ<br>- ເດັກຕອບ ຍ້ອງຍໍຊົມຊົມ<br>- ຄູສະຫຼຸບຄືນໂດຍຫຍໍ້<br>- ຄູວາງຈອກນ້ຳທີ່ມີປະລິມານໜ້ອຍກ່ວາ(1) ແລະ ຈອກນ້ຳທີ່ມີປະມານລິມານຫຼາຍກ່ວາ (2)ໄວ້ຮຽງ | | ແຜຟອຍກວດ ໂຕະ ນັ່ງ ແລະ ຮູບພາບໂຕະນັ່ງ | ສັງເກດການຕອບຄຳຖາມຂອງເດັກ<br><br>ສັງເກດການປະຕິບັດຕົວຈິງຂອງເດັກ |

| | | | | | |
|---|---|---|---|---|---|
| | | ກັນ ແລະ ວາງຈອກນໍ້າທີ່ມີປະມານນໍ້າເທົ່າກັນ<br>-ໃຫ້ເດັກສັງເກດເບິ່ງແລ້ວບອກວ່ານໍ້າໃນຈອກໃດປະລິມານຫຼາຍກວ່າ ແລະ ນໍ້າຈອກໃດມີປະລິມາໜ້ອຍກວ່າ ແລະ ຈອກໃດມີປະລິມານເທົ່າກັນ<br>-ໃຫ້ເດັກອາສາສະມັກອອກມາຊີ້ນໍ້າໃນຈອກພ້ອມທັງເວົ້າໃຫ້ໝູ່ຟັງ 1 – 2 ຄົນ<br>-ພາເດັກເວົ້າພ້ອມກັນໝົດຫ້ອງ 1-2 ເທື່ອ<br>-ຄູຕິດຕາມແນະນໍາຊ່ວຍເຫຼືອເດັກ | | | |
| | | ➢ ຂັ້ນສະຫຼຸບ<br>- ຄູຖາມຄືບົດຮຽນມາມື້ນີ້ສາວຄູພາພວກຫຼານຮຽນກ່ຽວກັບຫຍັງ ? ເດັກຕອບ<br>+ ຂັ້ນ ວັດ ແລະ ປະເມີນ.<br>- ໃຫ້ເດັກອາສາສະມັກອອກມາຊີ້ນໍ້າໃນຈອກພ້ອມທັງເວົ້າໃຫ້ໝູ່ຟັງ 1 – 2 ຄົນ<br>-ສຶກສາອົບຮົມ: ເວລາພວກຫຼານເມື່ອເຮືອນຕ້ອງໝັ່ນຮຽນໜັງສື ເພື່ອຈະໄດ້ຮຽນເກັ່ງ ແລະ ພວກຫຼານຕ້ອງເປັນເດັກຄໍາຮູ້ຟັງຄວາມສາວຄູ ແລະ ພໍ່-ແມ່ໃຫ້ເດັກພັກຜ່ອນ. | | | |

| ລໍາດັບ | ຫົວຂໍ້ການປະເມີນ | ດີ/ຄົນ | ປານກາງ/ຄົນ | ປັບປຸງ/ຄົນ |
|---|---|---|---|---|
| | | | | |

| | | | | |
|---|---|---|---|---|
| 1 | -ສັງເກດການຕອບຄຳຖາມຂອງເດັກ<br>ສັງເກດການປະຕິບັດຕົວຈິງຂອງເດັກ | | | |

**ປະເມີນຜົນການຮຽນ**

## ບົດສອນ

ໜ່ວຍ: ຕົວຂອງຂ້ອຍ

ກິດຈະກຳ: ວົງມົນ

ຫົວຂໍ້: ຊື່ ແລະ ນາມສະກຸນຕົນເອງ ແລະ ໝູ່ເພື່ອນ ອາທິດທີ 1 ມື້ທີ 1

ຊັ້ນອະນຸບານ 3 ເວລາ 25-30 ນາທີ

| ຈຸດປະສົງ | ເນື້ອໃນ | ກິດຈະກຳການຮຽນ- ການສອນ | ເວລາ | ອຸປະກອນ | ປະເມີນຜົນ |
|---|---|---|---|---|---|
| - ເພື່ອໃຫ້ເດັກສາມາດບອກຊື່, ນາມສະກຸນ, ເພດ, ຮູບຮ່າງລັກສະນະຂອງຕົນເອງ ແລະ ໝູ່ເພື່ອນໄດ້ຢ່າງຖືກຕ້ອງ.<br>-ເພື່ອໃຫ້ເດັກສາມາດບອກສ່ວນປະກອບຂອງ | - ຊື່, ນາມສະກຸນ, ຮູບຮ່າງລັກສະນະຕົນເອງ, ໝູ່ເພື່ອນ ແລະ ສ່ວນປະກອບຂອງຮ່າງກາຍ | **I.ຂັ້ນນຳເຂົ້າສູ່ບົດຮຽນ**<br>- ຄູຈັດເດັກນັ່ງເປັນລະບຽບ.<br>- ຄູໃຫ້ເດັກຮ້ອງເພງ: "ເຈົ້າຊື່ຫຍັງ" ປະກອບທ່າທາງ.<br>- ຄູຍ້ອງຍໍຊົມເຊີຍເດັກ.<br>**II.ຂັ້ນດຳເນີນການສອນ.**<br>- ຄູສະເໜີກິດຈະກຳກິດຈະກຳວົງມົນ, ໜ່ວຍຕົວຂອງຂ້ອຍຫົວຂໍ້: ຊື່ ແລະ ນາມສະກຸນຕົນເອງ ແລະ ໝູ່ເພື່ອນ<br>- ຄູສົນທະນາຖາມຊື່ ແລະ ນາມສະກຸນຂອງເດັກແຕ່ລະຄົນ<br>- ຄູສົນທະນາກັບເດັກກ່ຽວກັບຮ່າງກາຍຂອງຄົນປະກອບດ້ວຍ 3 ພາກສ່ວນຄື: ຫົວ, ລຳຄໍ, ແຂນ ແລະ ຂາ. | 5 ນາທີ<br><br>20 ນາທີ | - ເພງ "ເຈົ້າຊື່ຫຍັງ".<br><br>- ຕົວເດັກ.<br>- ກະດານ.<br>- ເຝີດ. | - ສັງເກດຄວາມຖືກຕ້ອງໃນການບອກຊື່, ນາມສະກຸນ,ເພດ,ຮູບຮ່າງລັກສະນະຂອງຕົນເອງ ແລະ ໝູ່ເພື່ອນ<br>- ສັງເກດຄວາມ |

| | | | | | | |
|---|---|---|---|---|---|---|
| ຮ່າງກາຍໄດ້ ຖືກຕ້ອງ.<br>- ເພື່ອໃຫ້ເດັກ ສາມາດປຽບ ທຽບຄວາມສູງ ກວ່າ, ຕ່ຳກວ່າ,ສູງ ເທົ່າກັນ, ຕຸ້ຍ ແລະ ຈ່ອຍໄດ້ຢ່າງ ຖືກຕ້ອງ. | - ຊື່ ແລະ ນາມສະກຸນ ຕົນເອງ ແລະ ໝູ່ເພື່ອນ ທ້າວ....ເພດ ຊາຍ; ນາງ.... ເພດຍິງ.<br>- ຮູບຮ່າງ ລັກສະນະ ຕຸ້ຍ, ຈ່ອຍ,ຕ່ຳ,ສູງ.<br>- ຮ່າງກາຍຂອງ ຄົນເຮົາປະກອບ ດ້ວຍ 3 ສ່ວນ ຄື:ຫົວເລົາຄີງ, ແຂນ ແລະ ຂາ.<br>- ການ ປຽບທຽບ ຄວາມສູງໂດຍ ໃຊ້ຄຳວ່າ: ສູງ ກວ່າ,ຕ່ຳກວ່າ, ສູງເທົ່າກັນ, ຕຸ້ຍ ຈ່ອຍ. | - ຄູໃຫ້ເດັກແຕ່ລະຄົນອອກມາຊີ້ບອກ ພາກສ່ວນຕ່າງໆຂອງຮ່າງກາຍຕົນເອງ<br>- ຄູໃຫ້ເດັກສັງເກດເບິ່ງໝູ່ແລ້ວບອກວ່າ ເດັກຄົນໃດສູງກວ່າ, ຕ່ຳກວ່າ ຫຼື ເທົ່າ ກັນ; ເດັກຄົນໃດຕຸ້ຍ ແລະ ຈ່ອຍ<br>- ຄູຕິດຕາມຊ່ວຍເຫຼືອເດັກ ແລະ ແນະ ນຳເດັກໄປພ້ອມ.<br>- ຄູຍ້ອງຍໍຊົມເຊີຍເດັກ.<br>**III.ຂັ້ນສະຫຼຸບ**<br>- ຄູຖາມເດັກຄືນສາວຄູພາຮຽນກິດຈະ ກຳຫຍັງ? ຫົວຂໍ້ຫຍັງ?<br>- ຄູໃຫ້ເດັກຮ້ອງເພງຄືນ 1-2 ເທື່ອ<br>- ຄູຍ້ອງຍໍຊົມເຊີຍເດັກ.<br>+ ສຶກສາອົບຮົມເດັກ: ພວກຫຼານເວລາ ຢູ່ຮ່ວມກັນໃຫ້ພວກຫຼານສາມັກຄີກັນ ແລະ ເວົ້າຄຳທີ່ສຸພາບຕໍ່ກັນ. ເວລາຄູ ແນະນຳພວກຫຼານຕ້ອງຕັ້ງໃຈຟັງ ແລະ ໃຫ້ກຳລັງໝູ່ເພື່ອນເວລາອອກມາເຮັດ ກິດຈະກຳກັບສາວຄູ<br>- ໃຫ້ເດັກພັກຜ່ອນ. | 5 ນາທີ | | ຖືກຕ້ອງໃນ ການບອກສ່ວນ ປະ<br>ກອບຂອງ ຮ່າງກາຍ<br>- ສັງເກດຄວາມ ຖືກຕ້ອງໃນ ການປຽບທຽບ: ສູງກວ່າ,ຕ່ຳກວ່າ ,ສູງເທົ່າກັນ,ຕຸ້ຍ ແລະ ຈ່ອຍ |

## ປະເມີນຜົນການການຮຽນ

| ລາຍການປະເມີນ | ລະດັບຄຸນນະພາບ | | | ໝາຍເຫດ |
|---|---|---|---|---|
| | ດີ | ພໍໃຊ້ | ຄວນປັບປຸງ | |
| 1.ສັງເກດຄວາມຖືກຕ້ອງໃນການບອກຊື່, ນາມສະກຸນ,ເພດ,ຮູບຮ່າງລັກສະນະຂອງຕົນເອງ ແລະ ໝູ່ເພື່ອນ<br>2.ສັງເກດຄວາມຖືກຕ້ອງໃນການບອກສ່ວນ | | | | |

| | | | | |
|---|---|---|---|---|
| ປະກອບຂອງຮ່າງກາຍ<br>3.ສັງເກດຄວາມຖືກຕ້ອງໃນການປຽບທຽບ:ສູງກວ່າ,ຕ່ຳກວ່າ,ສູງເທົ່າກັນ,ຕຸ້ຍ ແລະ ຈ່ອຍ | | | | |

**ໃຈຄວາມ.** ການປຽບທຽບແມ່ນການປຽບທຽບວັດຖຸສິ່ງຂອງຕ່າງໆທີ່ຄືກັນ ແລະ ແຕກຕ່າງກັນທາງດ້ານສີ, ຈຳນວນ, ຂະໜາດ ( ໃຫຍ່, ນ້ອຍ, ຍາວ - ສັ້ນ, ຕ່ຳ - ສູງ ) ປະລິມານ ( ໜ້ອຍ - ຫຼາຍ ), ຮູບຮ່າງ, ຈຳນວນ ເພື່ອໃຫ້ເດັກມີຄວາມສຳນຶກເບື້ອງຕົ້ນກຽ່ວກັບບັນຫາເຫຼົ່ານັ້ນ

**ຄຳຖາມຄົ້ນຄ້ວາ**

1. ຈົ່ງອະທິບາຍຄວາມໝາຍຂອງການປຽບທຽບ?
2. ຈົ່ງອະທິບາຍກິຈະກຳການຈັດການຮຽນການສອນ ?
3. **ວຽກບ້ານ:**
   ໃຫ້ນັກຮຽນແຕ່ລະຄົນແຕ່ງບົດສອນໃນຊັ້ນອະນຸບານ ( ໃຫ້ແຕ່ງກ່ຽວກັບການປຽບທຽບ), ພ້ອມທັງຜະລິດສື່ການສອນທີ່ຕົນຈະສອນ.

# ບົດທີ 4

# ວິທີສອນການລຽງລຳດັບ

ເວລາ 5 ຊົ່ວໂມງ

- **ຈຸດປະສົງໃຫ້ນັກຮຽນຄູສາມາດ:**

1. ອະທິບາຍຄວາມໝາຍຂອງຄວາມໝາຍຂອງການລຽງລຳດັບໄດ້.
2. ເຂົ້າໃຈການຈັດກິດຈະກຳການຮຽນ-ການສອນການລຽງລຳດັບໄດ້.
3. ແຕ່ງບົດສອນ ແລະ ສອນຕົວຈິງໄໄດ້.

## 1. ຄວາມໝາຍຂອງການລຽງລຳດັບ

ການລຽງລຳດັບສຳລັບເດັກໝາຍເຖິງການຈັດສິ່ງຂອງໃຫ້ເຂົ້າລະບຽບ ເຂົ້າຊຸດ ຄືກັບຕົ້ນແບບ ຫຼື ຕາມຄຳແນະນຳ ແລະ ຕາມກົດເກນໃດໜຶ່ງ ເຊັ່ນ: ຄູເອົາສໍດຳ 5 ກ້ານ ແລ້ວໃຫ້ເດັກວາງສໍດຳທີ່ມີຂະໜາດຕ່າງກັນຕາມລຳດັບ ຈາກຍາວເຖິງສັ້ນ ໃຫ້ເດັກສັງເກດໄດ້ວ່າສໍດຳທີ່ສັ້ນ ແຕ່ລະກ້ານ ຈະຕ້ອງວາງຕາມຫຼັງ, ກ້ານທີ່ຍາວກວ່າຕາມລຳດັບ. ເພື່ອໃຫ້ເດັກຮູ້ລະດັບທີ 1, ທີ 2 ຮອດທີ 5 ແລະຮູ້ຈັກວ່າ " ກ່ອນ " , "ຕາມຫຼັງ" ຫຼື ຕໍ່ໆໄປນີ້.

**ຕົວຢ່າງ:**



1 2 3 4 5



4 2 3 5 1

## 2. ການຈັດກິດຈະກຳການຮຽນ-ການສອນການລຽງລຳດັບ

### 2.1 ວິທີສອນການລຽງລຳດັບແຕ່ຕ່ຳຫາສູງ ແລະ ສູງຫາຕ່ຳ

1. ລຽງລຳດັບວັດຖຸ ຫຼື ຮູບພາບທີ່ມີຂະໜາດຕ່ຳກວ່າ, ສູງກວ່າ ແລະ ສູງເທົ່າກັນ
2. ບອກວັດຖຸ ຫຼື ຮູບພາບທີ່ມີຂະໜາດຕ່ຳກວ່າ, ສູງກວ່າ ແລະ ສູງເທົ່າກັນຕາມລຳດັບ

   ຕົວຢ່າງ:

- ວາງຮູບພາບຄົນຕ່ຳ ແລະ ຄົນສູງໄວ້ຮຽງກັນ
- ວາງຮູບພາບຄົນ ທີ່ສູງເທົ່າກັນ
- ບອກວ່າຮູບພາບຄົນ ຮູບໃດຕ່ຳກ່ວາ ແລະ ຮູບໃດທີ່ສູງກ່ວາ

1. ຕ່ຳກວ່າ 2.ສູງກວ່າ 3. ສູງເທົ່າກັນ







### 2.2 ວິທີສອນການລຽງລຳດັບສັ້ນຫາຍາວ ແລະ ຍາວຫາສັ້ນ

1. ລຽງລຳດັບວັດຖຸ ຫຼື ຮູບພາບທີ່ມີຂະໜາດສັ້ນກວ່າ, ຍາວກວ່າ ແລະ ຍາວເທົ່າກັນ
2. ບອກວັດຖຸ ຫຼື ຮູບພາບທີ່ມີຂະໜາດສັ້ນກວ່າ, ຍາວກວ່າ ແລະ ຍາວເທົ່າກັນຕາມລຳດັບ

ຕົວຢ່າງ:

- ວາງຮູບພາບສໍດຳທີ່ມີຂະໜາດສັ້ນກ່ວາ,ຍາວກ່ວາ ແລະຍາວເທົ່າກັນ
- ວາງຮູບພາບສໍດຳ ທີ່ມີຂະໜາດສັ້ນກ່ວາ ແລະ ຍາວກ່ວາ ໄວ້ຮຽງກັນ
- ຈາກນັ້ນ ວາງຮູບພາບສໍດຳທີ່ຍາວເທົ່າກັນ
- ບອກວ່າສໍດຳເສັ້ນໃດສັ້ນກ່ວາ. ສໍດຳກ້ານໃດຍາວກ່ວາ ແລະ ສໍດຳກ້ານໃດທີ່ມີຂະໜາດເທົ່າກັນ

ສໍດຳສັ້ນກວ່າ ສໍດຳຍາວກ່ວາ





ສໍດຳຍາວເທົ່າກັນ



- ລຽງລຳດັບວັດຖຸ ຫຼື ຮູບພາບທີ່ມີຈຳນວນໜ້ອຍກວ່າ, ຫຼາຍກວ່າ

- ບອກວັດຖຸ ຫຼື ຮູບພາບທີ່ມີຈຳນວນໜ້ອຍກວ່າ, ຫຼາຍກວ່າ ຕາມລຳດັບ

ຕົວຢ່າງ:

- ວາງຮູບພາບໝາກແອບເປີ້ນທີ່ມີຈຳນວນໜ້ອຍກ່ວາ,ຫຼາຍກ່ວາ

- ວາງຮູບພາບສໍດຳ ທີ່ມີມີຈຳນວນໜ້ອຍກວ່າ, ຫຼາຍກວ່າ ໄວ້ຮຽງກັ







### 2.3 ວິທີສອນການລຽງລຳດັບຕາມຄວາມໝາຍຂອງຈຳນວນ

ຕົວຢ່າງ : ການລຽງລຳດັບຕາມຄວາມໝາຍຂອງຈຳນວນ



ເທົ່າກັບເລກ **1**



ເທົ່າກັບເລກ **2**



ເທົ່າກັບເລກ **3**



ເທົ່າກັບເລກ **4**



ເທົ່າກັບເລກ **5**

## 3. ການແຕ່ງບົດສອນ ແລະ ຜະລິດອຸປະກອນ

- ແຕ່ງບົດສອນທຸກຄັ້ງກ່ອນຂຶ້ນຫ້ອງສອນ.
- ກະກຽມອຸປະກອນໂດຍສອດຄ່ອງກັບໜ່ວຍການສອນ ແລະ ກິດຈະກຳທີ່ຈະຈັດອຸປະກອນຈະຕ້ອງເປັນສິ່ງທີ່ມີໃນທ້ອງຖິ່ນພ້ອມທັງຫາໄດ້ງ່າຍ ແລະ ເໝາະກັບເດັກແຕ່ລະສ່ຳອາຍຸຂອງເດັກ.
- ດຳເນີນການສອນໄປຕາມຂັ້ນຕອນທີ່ຕົນວາງໄວ້.
- ໃຫ້ເດັກມີສ່ວນຮ່ວມໃນການປະຕິບັດກິດຈະກຳຢ່າງທົ່ວເຖິງ
- ໃຊ້ຄຳຖາມເພື່ອກະຕຸ້ນໃຫ້ເກີດຄວາມຄົ້ນຄິດ, ໃຫ້ເດັກໄດ້ປະຕິບັດ, ໄດ້ທົດລອງ.
- ຄູຕ້ອງແນະນຳຕິດຕາມ, ໃຫ້ການຊ່ວຍເຫຼືອ ແລະ ແກ້ໄຂບັນຫາຊ່ວຍເດັກ.

## 4. ການເຝິກສອນຕົວຈິງ

- ຄູແບ່ງນັກສຶກສາຄູອອກເປັນກຸ່ມ
- ໃຫ້ແຕ່ລະກຸ່ມຝຶກປ່ຽນກັນສອນພາຍໃນກຸ່ມ
- ສອນແລ້ວແຕ່ລະກຸ່ມຮ່ວມກັນຖອດຖອນບົດຮຽນເຊິ່ງກັນ ແລະ ກັນພາຍໃນກຸ່ມເພື່ອເປັນການປັບປຸງວິທີສອນໃຫ້ສອດຄ່ອງກັບເດັກແຕ່ລະສ່ຳອາຍຸ
- ສົ່ງຕົວແທນໃນກຸ່ມຕົນເອງມາສອນໃຫ້ກຸ່ມອື່ນເບິ່ງເພື່ອແລກປ່ຽນບົດຮຽນເຊິ່ງກັນ ແລະ ບູລະນາການທີ່ໜ້າສົນໃຈຂອງເດັກໃຫ້ແກ່ເດັກແຕ່ລະສ່ຳອາຍຸ

5.1 ເຝິກສອນຕົວຈິງໃນຂັ້ນລ້ຽງເດັກໃຫ່ຍ

### ບົດສອນ

**ກິດຈະກຳ ວົງມົນ**

**ໜ່ວຍ: ວັນເດັກ**

**ຫວົຂໍ້: ຮູບກ້ອນສາມລ່ຽມ, 4 ລ່ຽມ**

**ລ້ຽງເດັກໃຫ່ຍ** **ເວລາ 10-15 ນາທີ**

| **ຈຸດປະສົງ** | **ເນື້ອໃນ** | ກິດຈະກຳການຮຽນ-ການສອນ | ສື່ການຮຽນການສອນ | **ປະເມີນ** |
|---|---|---|---|---|
| | -ເພງ ມ່ວນຊື່ນໃນວັນເດັກ | ☞ **ຂັ້ນນຳເຂົ້າສູ່ບົດຮຽນ**<br>-ຈັດນັກຮຽນນັ່ງເປັນຮູບວົງມົນ<br>-ຄູພາເດັກຮ້ອງເພງ ມ່ວນຊື່ນໃນວັນເດັກ ☞ **ຂັ້ນດຳເນີນການສອນ.**<br>- ມື້ນີ້ສາວຄູຈະພາພວກຫຼານມາຮຽນກ່ຽວກັບຮູບຊົງເລຂາຄະນິດຕ່າງໆ<br><br>-ຄູ້ອີາເຄື່ອງຫຼິ້ນກໍສ້າງອອກມາໃຫ້ເດັກຫຼິ້ນ ແລະ ສັງເກດວ່າມີຮູບຫຫຍັງ | -ບົດເພງ | |

| | | | | |
|---|---|---|---|---|
| -ໃຫ້ເດັກໄດ້ສຳຜັດກັບຮູບຊົງເລຂາຄະນິດຕ່າງໆ | -ຮູບກ້ອນສາມລ່ຽມ, 4 ລ່ຽມ | ແດ່<br>- ຄູໃຫ້ເດັກລົງມືປະຕິບັດຫຼິ້ນເຄື່ອງກໍ່ສ້າງ<br>- ຄູຕິດຕາມເບິ່ງການຫຼິ້ນຂອງເດັກ<br>- ຍ້ອງຍໍຊົມເຊີຍເດັກ<br>☞ **ຂັ້ນສະຫຼຸບ**<br>-ມື້ນີ້ສາວຄູພາພວກຫຼານຮຽນກ່ຽວກັບຫຍັງແດ່?<br>-ເດັກຕອບ,ຍໍຍ້ອງຊົມເຊີຍ<br>-ຄູໃຫ້ເດັກອາສາສະໝັກອອກມາບອກຮູບເລຂາໃນເຄື່ອງຫຼິ້ນວ່າຮູບໃດເປັນຮູບກ້ອນ,ຮູບໃດເປັນຮູບສາມລ່ຽມ ແລະ 4 ລ່ຽມ<br>-ຍ້ອງຍໍຊົມເຊີຍ<br>-ສຶກສາອົບຮົມເດັກ<br>- ໃຫ້ເດັກພັກຜ່ອນ. | ເຄື່ອງຫຼິ້ນກໍ່ສ້າງ | -ສັງເກດການຫຼິ້ນຂອງເດັກ. |

## ປະເມີນຜົນການການຮຽນ

| ລາຍການປະເມີນ | ລະດັບຄຸນນະພາບ | | | ໝາຍເຫດ |
|---|---|---|---|---|
| | ດີ | ພໍໃຊ້ | ຄວນປັບປຸງ | |
| ສັງເກດການຫຼິ້ນຂອງເດັກ. | | | | |

## ບົດສອນ

### ກິດຈະກຳ ວົງມົນ

**ໜ່ວຍ: ເຂົ້າ**

**ຫວົຂໍ້: ນັບປາກເປົ່າແຕ່ 1-10**

**ລ້ຽງເດັກໃຫ່ຍ** **ເວລາ 10-15 ນາທີ**

| **ຈຸດປະສົງ** | **ເນື້ອໃນ** | ກິດຈະກຳການຮຽນ-ການສອນ | ສື່ການຮຽນການສອນ | **ປະເມີນ** |
|---|---|---|---|---|
| -ໃຫ້ເດັກສາມາດ | -ເພງ ມ່ວນຊື່ນໃນວັນເດັກ<br>-ນັບປາກເປົ່າ | ☞ **ຂັ້ນນຳເຂົ້າສູ່ບົດຮຽນ**<br>-ຈັດນັກຮຽນນັ່ງເປັນຮູບວົງມົນ<br>-ຄູພາເດັກຮ້ອງເພງ ມືະອາດ<br>☞ **ຂັ້ນດຳເນີນການສອນ.**<br>- ມື້ນີ້ສາວຄູຈະພາພວກຫຼານມາຮຽນກ່ຽວກັບການນັບ<br>-ຄູນັບໃຫ້ເດັກຟັງ 1-2 ເທື່ອ<br>- ໃຫ້ເດັກນັບຕາມຫຼັງຄູ 1-2ເທື່ອ | -ບົດເພງ | |

| | | | | |
|---|---|---|---|---|
| ນັບປາກເປົ່າແຕ່ 1-10ນຳຄູໄດ້ | ປາກ 1-10 | - ໃຫ້ເດັກນັບພ້ອມກັນໝົດທຸກຄົນ 1 ເທື່ອ<br>- ໃຫ້ເດັກອາສາສະມັກອອກມານັບເລກໃຫ້ໝູ່ຟັງ 1- 3 ຄົນ<br>- ຄູຕິດຕາມເບິ່ງການນັບຂອງເດັກ<br>- ຍ້ອງຍໍຊົມເຊີຍເດັກ<br>☞ **ຂັ້ນສະຫຼຸບ**<br>-ມື້ນີ້ສາວຄູພາພວກຫຼານຮຽນກ່ຽວກັບຫຍັງແດ່?<br>-ເດັກຕອບ,ຍໍຍ້ອງຊົມເຊີຍ<br>-ຄູໃຫ້ເດັກອາສາສະມັກອອກມານັບເລກຄືນ<br>-ຍ້ອງຍໍຊົມເຊີຍ<br>-ສຶກສາອົບຮົມເດັກ<br>- ໃຫ້ເດັກພັກຜ່ອນ. | ຕົວເດັກ | -ສັງເກດການນັບຂອງເດັກ. |

## ປະເມີນຜົນການການຮຽນ

| ລາຍການປະເມີນ | ລະດັບຄຸນນະພາບ | | | ໝາຍເຫດ |
|---|---|---|---|---|
| | ດີ | ພໍໃຊ້ | ຄວນປັບປຸງ | |
| ສັງເກດການນັບຂອງເດັກ. | | | | |

## 4.2 ເຝິກສອນຕົວຈິງໃນຊັ້ນອະນຸບານ

# ບົດສອນ

ໜ່ວຍ:  ສິ່ງແວດລ້ອມອ້ອມຕົວເຮົາ

ກິດຈະກຳວົງມົນ: ການສອນຄະນິດສາດ                                        ອາທິດທີ 2 ມື້ທີ4

ຊັ້ນອະນຸບານ 2                                                                  ເວລາ 20-25 ນາທີ

ຫົວຂໍ້: ການລຽງລຳດັບແຕ່ ໜ້ອຍ - ຫຼາຍ

ວັນທີສອນ..........                                                               ຜູ້ແຕ່ງ.................

| ຈຸດປະສົງ | ເນື້ອໃນ | ກິດຈະກຳການຮຽນ-ການສອນ | ເວລາ | ອຸປະກອນ | ປະເມີນຜົນ |
|---|---|---|---|---|---|
| | | + ຂັ້ນນຳ<br>- ຄູແລະເດັກພ້ອມກັນຮ້ອງເພງ ຈັບປູພ້ອມທັງເຮັດທ່າທາງ ຍ່າງອ້ອມຫ້ອງພ້ອມທັງຕົບມື ເມື່ອສຽງເພງສິ້ນສຸດລົງໃຫ້ ພວກຫຼານຕົບມືພ້ອມກັນ 5 ບາດ ແລະເຕັ້ນກັບທີ່ 5 ເທື່ອ | | ເພງ ຄ ເອີ້ນ ຄ ຄູເຄື່ອງເຄາະຈັ່ງ ຫວະ | |
| ໃຫ້ເດັກສາ ມາດລຽງ ລຳດັບຈຳນວນ ແຕ່ 1-5 | ການລຽງ ລຳດັບຈຳ ນວນແຕ່1-5 | -ຂັ້ນດຳເນີນການສອນ:<br>+ຄູສະເໜີກິດຈະກຳທີ່ຈະພາ ເດັກຮຽນກ່ອນມື້ນີສາຄູຈະພາ ພວກຫຼານຮຽນກ່ຽວກັບການ ລຽງລຳດັບແຕ່1-5<br>- ຄູຍົກໃບໄມ້ຂຶ້ນແລ້ວຖາມ ເດັກວ່າໃບໄມ້ໃນມືສາວຄູນີ້ມີ ຈັກໃບ, ຫຼັງຈາກນັ້ນຄູໃຫ້ເດັກ ນັບ<br>- ຄູເອົາຮູບໃບໄມ້ທີ່ມີຈຳນວນ ແຕ່ 1 – 5 ໃບໃຫ້ເດັສັງເກດ<br>- ຈາກນັ້ນຄູເອົາໃບໄມ້ຈຳນວນ ແຕ່ 1 – 5 ໄປສຽບໃສ່ຖົງ ບັດຄຳແລ້ວພາເດັກນັບຈຳນວນ ແຕ່ 1-5<br>- ຄູຍົກບັດເລກຂຶ້ນໃຫ້ເບິ່ງ ແລ້ວເອົາໄປສຽບໃສ່ຂ້າງຈຳ ນວນໃບໄມ້.<br>- ຄູ ແລະ ເດັກນັບຈຳນວນ 1- 3 ເທື່ອ<br>- ຄູ ໃຫ້ເດັກອອກມາລຽງລຳ ດັບຈຳນວນແຕ່ 1-5 | 25 ນາທີ | ຮູບພາບໃບໄມ້ ໃບໄມ້, ຖົງ ບັດຄຳ. ບັດເລກ | ສັງເກດ ການສະແດງ ອອກຂອງເດັກ. |

| | | | | | |
|---|---|---|---|---|---|
| | | - <u>ຂັ້ນສະຫຼຸບ</u><br>ມື້ນີ້ສາວຄູພາພວກຫຼານຮຽນກ່ຽວກັບຫຍັງແດ່ ?<br>+ຄູສົນທະນາກຽວກັບການລຽງລຳດັບຈຳນວນຄູຍົກໄມ້ຖູຂຶ້ນເທື່ອລະ 1 ດົ້ວໃຫ້ເດັກນັບໄປພ້ອມຈົນເຖິງ 5ດົ້ວແລ້ວໃຫ້ເດັກລຽງລຳດັບປະຕິບັດ2ເທື່ອ<br>+ສຶກສາເດັກ<br>+ໃຫ້ເດັກພັກຜ່ອນ ແລະ ຫຼິ້ນຕາມໃຈ | | | |

## ປະເມີນຜົນການການຮຽນ

| ລາຍການປະເມີນ | ລະດັບຄຸນນະພາບ | | | ໝາຍເຫດ |
|---|---|---|---|---|
| | ດີ | ພໍໃຊ້ | ຄວນປັບປຸງ | |
| ສັງເກດການສະແດງອອກຂອງເດັກ. | | | | |

## ບົດສອນ

- ໜ່ວຍ: ສິ່ງແວດລ້ອມອ້ອມຕົວເຮົາ　　　　　　　　　　　　　ອາທິດທີ່ 2: ມື້ທີ່5
- ກິດຈະກຳວົງມົນ　　　　　　　　　　　　　　　　　　　　ເວລາ 15 - 20 ນາທີ
- ຫົວຂໍ້: ການສອນຄະນິດສາດ　　　　　　　　　　　　　　　ຂັ້ນອະນຸບານ 1

| ຈຸດປະສົງ | ເນື້ອໃນ | ກິດຈະກຳ | ອຸປະກອນ | ປະເມີນ |
|---|---|---|---|---|
| | | ➢ **ຂັ້ນນຳເຂົ້າສູ່ບົດຮຽນ**<br>- ຄູຈັດເດັກເຂົ້າສູ່ລະບຽບ<br>- ພາເດັກສ້າງບັນຍາກາດ ເລົ່າຄຳຄ່ອງ ປະໂຫຍດຂອງດິນ ປະກອບທ່າທາງ<br>➢ **ຂັ້ນດຳເນີນການສອນ**<br>- ຄູສະເໜີໃຫ້ເດັກຮູ້ກ່ອນວ່າມື້ນີ້ | | |

| | | | | |
|---|---|---|---|---|
| ເພື່ອໃຫ້ເດັກ ສາມາດ ຕໍ່ພື້ນ ຂອງຮູບສາມແຈ ຕິດກັນ2ຮູບ ໄດ້ | ການຕໍ່ພື້ນຂອງ ຮູບສາມແຈ ຕິດກັນ 2 ຮູບ | ສາວຄູຈະພາພວກຫຼານຮຽນກ່ຽວກັບຮູບສາມແຈ<br>- ຄູເອົາຮູບສາມແຈຍົກຂຶ້ນແລ້ວຖາມເດັກວ່ານີ້ແມ່ນຮູບຫຍັງທາງໃດເປັນຈອມຂອງຮູບ ແລະ ທາງໃດແມ່ນພື້ນຮູບ ແລ້ວເອົາຮູບສາມແຈມາຕໍ່ພື້ນ 2 ຮູບມາວາງໄວ້ ແລ້ວບອກໃຫ້ເດັກສັງເກດເບິ່ງ ( ໃຫ້ເດັກຕອບຕາມຄວາມເຂົ້າໃຈ )<br>- ສາວຄູໃຫ້ເດັກອອກມາຕໍ່ພື້ນຮູບສາມແຈຕິດກັນສອງຮູບໃຫ້ໝູ່ເບິ່ງ<br>- ສາວຄູໃຫ້ເດັກອາມາສະໝັກອອກມາຕໍ່ພື້ນຂອງຮູບສາມແຈຕິດກັນສອງຮູບ 1-2 ຄົນ<br>- ຄູຕິດຕາມຊ່ວຍເຫຼືອເດັກຜູ້ທີ່ເຮັດບໍ່ທັນໄດ້ດີ ( ຍ້ອງຍໍຊົມເຊີຍເດັກ )<br>➢ **ຂັ້ນສະຫຼຸບົດຮຽນ**<br>- ມື້ນີ້ສາວຄູເອົາຮູບຫຍັງມາໃຫ້ພວກຫຼານເບິ່ງ ( ໃຫ້ເດັກຕອບ )<br>- ສາວຄູໃຫ້ເດັກອອກມາຕໍ່ພື້ນຮູບສາມຕິດກັນສອງຮູບຄືນອີກ.<br>• **ສຶກສາອົບຮົມເດັກ**<br>- ພວກຫຼານບໍຕ້ອງໄປທຳລາຍຕົ້ນໄມ້ເດີເພາະມັນເຮັດໃຫ້ອາກາດເຢັນແລະເຮົາກະໄດ້ອາໄສຮົ່ມຂອງມັນອີກ. | ໄມ້ບູ້ອກ ສາມແຈ | ສັງເກດການຕໍ່ພື້ນຮູບສາມແຈ2ຮູບຂອງເດັກແຕ່ລະຄົນ |

## ປະເມີນຜົນການການຮຽນ

| ລາຍການປະເມີນ | ລະດັບຄຸນນະພາບ | | | ໝາຍເຫດ |
|---|---|---|---|---|
| | ດີ | ພໍໃຊ້ | ຄວນປັບປຸງ | |
| ສັງເກດການຕໍ່ພື້ນຮູບສາມແຈ2ຮູບຂອງເດັກແຕ່ລະຄົນ | | | | |

# ບົດສອນຕົວຢ່າງ

ໜ່ວຍ ຄົມມະນາຄົມ ແລະ ສື່ສານ

ກິດຈະກຳວົງມົນ ການສອນຄະນິດສາດ ອາທິດທີ 1 ມື້ທີ 2

ຂັ້ນອະນຸບານ 1 ເວລາ 15 – 20 ນາທີ

ຫົວຂໍ້: ພະຫານະທາງບົກ

ວັນທີສອນ ..............................

| ຈຸດປະສົງ | ເນື້ອໃນ | ກິດຈະກຳການຮຽນການສອນ | | ອຸປະກອນ | ການປະເມີນ |
|---|---|---|---|---|---|
| ໃຫ້ເດັກສາດມາບອກພະຫານະໃນການເດີນທາບົກໄດ້- ໃຫ້ເດັກສາມາດຈັດກຸ່ມລົດຈັກ ລົດຖີບ ລົດໃຫ່ຍນຳຄູໄດ້ | ມີລົດຈັກ, ລົດຖີບ, ລົດໃຫ່ຍ<br><br>ການຈັດກຸ່ມລົດຈັກ ລົດຖີບ ລົດໃຫ່ຍ | ➢ **ຂັ້ນນຳເຂົ້າສູ່ບົດຮຽນ.**<br>- ຄູຈັດເດັກເປັນຮູບເຄິ່ງວົງມົນ<br>- ຄູກວດກາຈຳນວນເດັກ<br>- ຄູພາເດັກ ສ້າງບັນຍາກາດດ້ວຍການຮ້ອງເພງ: ພາຍເຮືອ<br>- ຄູພາເດັກຮ້ອງເພງ 1-2 ເທື່ອ<br>➢ **ຂັ້ນດຳເນີນການສອນ**-ຄູສະເໜີບົດຮຽນທີ່ຈະພາເດັກຮຽນໃນມື້ນີ້ສາວຄູຈະພາພວກຫຼານຮຽນກ່ຽວກັບວິຊາຄະນິດສາດການຈັດກຸ່ມ<br>- ຄູສົນທະນາກັບເດັກກ່ຽວກັບພະຫານະໃນກາເດີນທາງບົກໂດຍຕັ້ງຄຳຖາມດັ່ງນີ້: ເວລາພວກຫຼານມາໂຮງຮຽນພວກຂີ່ຫຍັງແດ່ມາ ? ເດັກຕອບ ຍ້ອງຍໍຊົມເຊີຍເດັກ ຄູສະຫຼູບຄືນໂດຍຫຍໍ້<br>-ຄູເອົາຮູບພາບ ລົດຈັກ ລົດຖີບ ລົດໃຫ່ຍ ວາງເທິງໂຕະ<br>-ຄູອະທິບາຍ ແລະ ສາທິດການຈັດກຸ່ມໃຫ້ເດັກເບິ່ງກ່ອນ 1-2 ເທື່ອ<br>-ໃຫ້ເດັກອາສາສະມັກອອກມາຈັດກຸ່ມໃຫ້ໝູ່ເບິ່ງ 1-3 ຄົນ | | | ສັງເກດການຕອບຂອງເດັກແຕ່ລະຄົນ<br><br>ສັງເກດ ການປະຕິບັດຕົວຈິງຂອງເດັກແຕ່ລະຄົນ |

| | | | | | |
|---|---|---|---|---|---|
| | | -ແບ່ງອອກເປັນ2ກຸ່ມ ແຕ່ລະກຸ່ມໃຫ້ອອກມາແຂ່ງກັນຈັດກຸ່ມ<br>-ຍ້ອງຍໍຊົມເຊີຍ<br>- ຄູຕິດຕາມ ແລະ ຊ່ວຍເຫຼືອເດັກ<br>-ຊົມເຊີຍເດັກ<br>➢ **ຂັ້ນສະຫຼຸບ**<br>- ຄູຖາມເດັກຄືນວ່າມື້ນີ້ສາວຄູພາພວກຫຼານຮຽນຫຍັງແດ່?<br>-ເດັກຕອບ<br>-ຄູພາເດັກເວົ້າຄືນ 2-3 ເທື່ອຊົມເຊີຍເດັກ<br>• **ສຶກສາເດັກ**<br>-ເວລາພວກຫຼານເມື່ອເຮືອນຕ້ອງໝັ່ນຮຽນໜັງສື ເພື່ອຈະໄດ້ຮຽນເກັ່ງ ແລະ ພວກຫຼານຕ້ອງເປັນເດັກຄໍາຮູ້ຟັງຄວາມສາວຄູ ແລະ ພໍ່-ແມ່-ຄູໃຫ້ເດັກອະນຸຍາດພັກຜ່ອນ | | | |

## ປະເມີນຜົນການການຮຽນ

| ລາຍການປະເມີນ | ລະດັບຄຸນນະພາບ | | | ໝາຍເຫດ |
|---|---|---|---|---|
| | ດີ | ພໍໃຊ້ | ຄວນປັບປຸງ | |
| ສັງເກດການຕອບຂອງເດັກແຕ່ລະຄົນ<br><br>ສັງເກດ ການປະຕິບັດຕົວຈິງຂອງເດັກແຕ່ລະຄົນ | | | | |

# ບົດສອນ

ໜ່ວຍ: ສິ່ງແວດລ້ອມອ້ອມຕົວເຮົາ

ກິດຈະກຳວົງມົນ: ການສອນຄະນິດສາດ ອາທິດທີ 3 ມື້ທີ 2

ຫົວຂໍ້: ການນັບລຽງລຳດັບການງອກຂອງເມັດພືດ

ຂັ້ນອະນຸບານ 3 ເວລາ 25-30 ນາທີ

ວັນທີສອນ:......................... ຜູ້ແຕ່ງ.........................

| ຈຸດປະສົງ | ເນື້ອໃນ | ກິດຈະກຳການຮຽນ - ການສອນ | ເວລາ | ອຸປະກອນ | ປະເມີນຜົນ |
|---|---|---|---|---|---|
| | | + ຂັ້ນນຳ:<br>-ຄູພາເດັກນັ່ງຢຽດຂາເອົາມືໄຕ່ຕາມຕົນໂຕຈົນຮອດປາຍຕີນ ເຮັດໄຕ່ຂຶ້ນ - ລົງ(ແບບບົ້ງໄຕ່) ປະມານ 3ຄັ້ງ.<br>-ໃຫ້ເດັກຄານໄປຕາມຫ້ອງ ປຽບເໝືອນບົ້ງກິນໃບຜັກ ຊ້ຳໄວຕາມບາດເຄາະ. | 5ນາທີ | ເຄື່ອເຄາະຈັງຫວະ | |
| ໃຫ້ເດັກສາມາດ:<br>1 ບອກຄຸນປະໂຫຍດ ແລະ ໂທດຂອງການກິນຜັກ. | ຜັກປັນອາຫານທີ່ມີປະໂຫຍດເຮັດໃຫ້ຮ່າງກາຍແຂງແຮງ, ບຳລຸງຮັກສາຕາ ແລະ ແຂ້ວ. | + ຂັ້ນດຳເນີນການສອນ.<br>ຄູສົນທະນາຮ່ວມກັບເດັກໂດຍການໃຊ້ຄຳຖາມດັ່ງນີ້:<br>ຫຼານເຄີຍກິນຜັກຫຍັງແນ່?<br>ກ່ອນຈະນຳເອົາຜັກມາກິນຫຼານຄວນເຮັດແນວໃດ? | | ຜັກກາດຂາວ | ສັງເກດການຕອບຄຳຖາມ ແລະ ການປະຕິບັດ |
| 2 ລຽງລຳດັບການງອກຂອງເມັດພືດ | •ໂທດຂອງການກິນຜັກແມ່ນເກີດຈາກຜັກເຊັ່ນ: ຜັກທີ່ສີດຢາຂ້າແມງໄມ້,ຜັກທີ່ລ້າງບໍ່ສະອາດ<br><br>•ການລຽງລຳດັບການງອກຂອງເມັດພືດ | ກິນຜັກແລ້ວຫຼານເປັນແນວໃດ<br>-ໃຫ້ເດັກເຮັດທ່າທາງແຂງແຮງ ຫຼືເຈັບທ້ອງຖ້າຄູເວົ້າວ່າກິນຜັກບໍ່ສະອາດ<br>-ຄູພາເດັກເລົ່າຄຳຄ່ອງ<ຜັກກາດຂາວ>ປະກອບທ່າທາງ<br><br>-ຄູຍົກຮູບພາບການງອກຂອງເມັດພືດໃຫ້ເດັກໄດ້ສັງເກດເທື່ອລະຮູບແລ້ວເອົາລຽງໃຫ້ເດັກເບິ່ງ: ຫຼັງຈາກນັ້ນຖາມເດັກວ່າ: ຮູບໃດທີ່ເປັນໂຕທຳອິດ ແລະຕໍ່ໆໄປ | | ຮູບການງອກຂອງເມັດພືດ4 ຮູບ | ຕົວຈິງຂອງເດັກ |

| | | | | | |
|---|---|---|---|---|---|
| | | -ໃຫ້ເດັກອອກມາລຽງລຳດັບຮູບພາບຕາມການງອກຂອງເມັດພືດປະມານ3-4ຄົນ<br>- ຄູເອົາທໍ່ດູດທີ່ມີຄວາມສັ້ນຍາວຕ່າງກັນມາໃຫ້ເດັກລຽງລຳດັບປະມານ3-4ຄົນ | | | |
| | | + ຂັ້ນສະຫຼຸບ<br>-ຄູສົນທະນາກ່ຽວກັບບົດຮຽນທີ່ໄດ້ຮຽນມາແລ້ວ<br>-ໃຫ້ເດັກລຽງລຳດັບການງອກຂອງເມັດພືດ ໃຫ້ເດັກປະຕິບັດນັ່ງລົງ-ລຸກຂຶ້ນ ແລະ ເຮັດສູງຂຶ້ນປະມານ3ເທື່ອ<br>-ໃຫ້ເດັກພັກຜ່ອນ | | | |

## ປະເມີນຜົນການການຮຽນ

| ລາຍການປະເມີນ | ລະດັບຄຸນນະພາບ | | | ໝາຍເຫດ |
|---|---|---|---|---|
| | ດີ | ພໍໃຊ້ | ຄວນປັບປຸງ | |
| ສັງເກດການຕອບຄຳຖາມຂອງເດັກ<br>- ສັງເກດການຮ່ວມກຸ່ມຈຳນວນ1-3,ຂອງເດັກ | | | | |

**ໃຈຄວາມ.** ການລຽງລຳດັບສຳລັບເດັກໝາຍເຖິງການຈັດສິ່ງຂອງໃຫ້ເຂົ້າລະບຽບ ເຂົ້າຊຸດ ຄືກັບຕົ້ນແບບ ຫຼື ຕາມຄຳແນະນຳ ແລະ ຕາມກົດເກນໃດໜຶ່ງ ເຊັ່ນ: ຄູເອົາສໍດຳ 5 ກ້ານ ແລ້ວໃຫ້ເດັກວາງສໍດຳທີມີຂະໜາດຕ່າງກັນຕາມລຳດັບ ຈາກຍາວເຖິງສັ້ນ ໃຫ້ເດັກສັງເກດໄດ້ວ່າສໍດຳທີ່ສັ້ນ ແຕ່ລະກ້ານ ຈະຕ້ອງວາງຕາມຫຼັງ

**ຄຳຖາມຄົ້ນຄ້ວາ**

1. ການຈັດລຽງລຳດັບໝາຍຫຍັງ ?
2. ການຈັດກິດຈະກຳການຮຽນ-ການສອນການລຽງລຳດັບແມ່ນຈັດແນໃດ ?
3. ການແຕ່ງບົດສອນ ແລະ ຜະລິດອຸປະກອນ ໝາຍເຖິງຫຍັງ ?

**ວຽກບ້ານ:**

ໃຫ້ນັກຮຽນແຕ່ລະຄົນແຕ່ງບົດສອນໃນຊັ້ນອະນຸບານ ( ໃຫ້ແຕ່ງກ່ຽວກັບການລຽງລຳດັບ), ພ້ອມທັງຜະລິດສື່ການສອນທີ່ຕົນຈະສອ

# ບົດທີ 5

# ວິທີສອນກ່ຽວກັບການຈຳແນກ

ເວລາ 5 ຊົ່ວໂມງ

- **ຈຸດປະສົງໃຫ້ນັກຮຽນຄູສາມາດ:**

1. **ອະທິບາຍຄວາມໝາຍກ່ຽວກັບການຈຳແນກໄດ້**
2. **ການແຕ່ງບົດສອນ, ຜະລິດອຸປະກອນ ສອນຕົວຈິງໄດ້**

## 1. ຄວາມໝາຍຂອງການຈຳແນກ.

ການຈຳແນກໝາຍເຖິງການໄຈ້ແຍກວັດຖຸສິ່ງຂອງອອກເປັນກຸ່ມ. ເປັນໝວດຕາມລັກສະນະຮູບຮ່າງ, ຕາມສີ ແລະ ຕາມຂະໜາດ.

**ຕົວຢ່າງ:**

➢ ກໍລະນີວັດຖຸຊະນິດດຽວກັນຕ່າງສີ ( ຈຳແນກສີ ). ເຊັ່ນ:






**ສີຟ້າ** **ສີແດງ** **ສີເຫຼືອງ.**

➢ ກໍລະນີວັດຖຸຕ່າງກັນ(ຈຳແນກຕາມຊະນິດຂອງວັດຖຸ).ເຊັ່ນ: ໝາກບານມ ຊິງຕັ້ງ ຕົບເຂົ້າ, ໝາກມັງຄຸດ








### 1.1 ການຈັດກິດຈະກຳການຮຽນ-ການສອນການແຍກກຸ່ມ

ການແຍກກຸ່ມ ເປັນຮູບພາບໜຶ່ງຂອງການເຝິກແອບນັບສິ່ງຂອງ ແລະ ຮຽນຮູ້ຄວາມສຳພັນ ລະຫວ່າງເລກກັບຈຳນວນສິ່ງຂອງ ແລະ ຄວາມຫຼຸດລົ່ນຂອງຈຳນວນ ເຊັ່ນ: ໃນກອງໃຫຍ່ມີໃບໄມ້ 4 ໃບ ແລະ ດອກໄມ້ 4 ດອກຢູ່ຮ່ວມກັນ. ເມື່ອແຍກອອກຈະໄດ້ 2 ກຸ່ມ. ກຸ່ມ 1 ແມ່ນດອກໄມ້ 4 ດອກ ແລະ ອີກກຸ່ມ 1 ແມ່ນກຸ່ມໃບໄມ້ 4 ໃບ.







## 1.2 ການຈັດກິດຈະກຳການຮຽນ-ການສອນການລວມກຸ່ມ

ການຮ່ວມກຸ່ມແມ່ນການເອົາສິ່ງຂອງກອງລວມເຂົ້າກັນເປັນກຸ່ມໃຫຍ່ ຊຶ່ງມີຫຼາຍກໍລະນີຄື:

- ວັດຖຸ ຫຼື ຮູບພາບສະນິດດຽວກັນ, ຂະໜາດເທົ່າກັນ, ຈຳນວນເທົ່າກັນ ຫຼື ບໍ່ເທົ່າກັນ
- ວັດຖຸ ຫຼື ຮູບພາບຊະນິດດຽວກັນ, ຂະໜາດຕ່າງກັນ.
- ວັດຖຸ ຫຼື ພາບຊະນິດຕ່າງກັນ.

ກ່ອນອື່ນ ຄູຄວນໃຫ້ເດັກສັງເກດ ແລະ ເຂົ້າໃຈສິ່ງຂອງເຫຼົ່ານີ້ໃນແຕ່ລະກຸ່ມ. ຈາກນັ້ນຈຶ່ງໃຫ້ເດັກເອົາວັດຖຸທັງສອງກຸ່ມ ຫຼື ສອງກອງມາລວມກັນໃຫ້ເປັນກອງໃຫຍ່ໜຶ່ງ ແລ້ວ ພາເດັກນັບຈຳນວນວັດຖຸທັງໝົດ.

**ຕົວຢ່າງ 1 :** (ຊະນິດດຽວກັນ, ຂະໜາດເທົ່າກັນ)



**ຕົວຢ່າງ 2 :** ( ຊະນິດດຽວກັນ, ຂະໜາດຕ່າງກັນ )





**ຕົວຢ່າງ 3 :** ( ຊະນິດຕ່າງກັນ ).



**1.3 ການຈັດກິດຈະກຳການຮຽນ-ການສອນການຈັດກຸ່ມ**

ການຈັດກຸ່ມແມ່ນການເລືອກສິ່ງຂອງທີ່ຄືກັນ ຫຼື ປະເພດດຽວກັນມາວາງໄວ້ບ່ອນດຽວກັນ ( ຮ່ວມກັນ ) ເຊັ່ນ: ໃຫ້ເດັກເອີ້ນຊື່ສິ່ງຂອງທີ່ແມ່ນເຄື່ອງໃຊ້ປະເພດດຽວກັນ ( ຍົນ, ລົດ, ເຮືອ ).

ກ່ອນຈະເລືອກໄດ້ ເດັກຈະຕ້ອງເຂົ້າໃຈຄວາມໝາຍຂອງຄຳເວົ້າຕ່າງໆ ທີ່ຖືກນຳໃຊ້ເສຍກ່ອນເຊັ່ນ: “ ຄືກັນ ”, “ ສີດຽວກັນ ” , “ ເຂົ້າກັນໄດ້ ” ນີ້ສະແດງໃຫ້ເຫັນບົດບາດອັນສຳຄັນຂອງພາສາຕໍ່ການຮຽນຄະນິດສາດ






## 2. ການແຕ່ງບົດສອນ ແລະ ຜະລິດອຸປະກອນ

- ການແຕ່ງບົດສອນ: ຄູແບ່ງນັກຮຽນອອກເປັນກຸ່ມຕາມຄວາມເໝາະສົມໃຫ້ແຕ່ລະກຸ່ມແຕ່ງບດສອນ, ພາຍັຫຼັງແຕ່ງແລ້ວຕາງໜ້າແຕ່ລະກຸ່ມຂຶ້ນນຳສະເໜີບົດສອນໃນກຸ່ມໃຫ້ກຸ່ມອື່ນຮັບຮູ້ ເພື່ອຮ່ວມກັນວິເຄາະ ແລະ ປັບປຸງຄືນບາງບັນຫາທີ່ບໍ່ທັນສອດຄ່ອງກັບສະພາບຕົວຈິງສຳລັບເດັກ, ຫຼັງຈາກນັ້ນໃຫ້ນັກສຶກສາແຕ່ງບົດສອນເປັນລາຍບຸກຄົນ ເພື່ອຈະນຳໄປສອນເດັກຕົວຈິງໃນໂຮງຮຽນລ້ຽງເດັກ-ອະນຸບານ.
- ຜະລິດອຸປະກອນ: ການຜະລິດອຸປະກອນແມ່ນສິ່ງທີ່ຈຳເປັນສຳລັບຄູ ແລະ ເດັກ. ອຸປະກອນຈະຊ່ວຍໃຫ້ຜູ້ຮຽນມີຄວາມສົນໃຈ,ບໍ່ເບື່ອໜ່າຍໃນການຮຽນ,ຊ່ວຍໃຫ້ເດັກໄດ້ພັດທະນາຄວາມຄິດ, ຄວາມເຂົ້າໃຈ ແລະ ຈື່ຈຳບົດຮຽນໄດ້ດີ.

## 3. ການຝຶກສອນຕົວຈິງ

- ຄູແບ່ງນັກສຶກສາຄູອອກເປັນກຸ່ມ
- ໃຫ້ແຕ່ລະກຸ່ມຝຶກປ່ຽນກັນສອນພາຍໃນກຸ່ມ
- ສອນແລ້ວແຕ່ລະກຸ່ມຮ່ວມກັນຖອດຖອນບົດຮຽນເຊິ່ງກັນ ແລະ ກັນພາຍໃນກຸ່ມເພື່ອເປັນການປັບປຸງວິທີສອນໃຫ້ສອດຄ່ອງກັບເດັກແຕ່ລະສົກອາຍຸ
- ສົ່ງຕົວແທນໃນກຸ່ມຕົນເອງມາສອນໃຫ້ກຸ່ມອື່ນເບິ່ງເພື່ອແລກປ່ຽນບົດຮຽນເຊິ່ງກັນ ແລະ ກັນການສອນພາສາລາວແບບເນັ້ນປະສົບການ ແລະ ບູລະນາການທີ່ໜ້າສົນໃຈຂອງເດັກໃຫ້ແກ່ເດັກແຕ່ລະສົກອາຍຸ

### 3.1 ຝຶກສອນຕົວຈິງໃນຂັ້ນລ້ຽງເດັກໃຫຍ່

**ບົດສອນ**

- ໜ່ວຍ: ໝາກໄມ້ ອາທິດທີ່ 4: ມື້ທີ່5

- ກິດຈະກຳວົງມົນ                                                              ເວລາ    10-15 ນາທີ

- ຫົວຂໍ້: ການສອນຄະນິດສາດ(ການຮວ່ມກຸ່ມຈຳນວນ1-3)
- ຂັ້ນລ້ຽງເດັກໃຫ່ຍ

| ຈຸດປະສົງ | ເນື້ອໃນ | ກິດຈະກຳ | ອຸປະກອນ | ປະເມີນ |
|---|---|---|---|---|
| ໃຫ້ເດັກສາມາດບອກຊື່ຂອງໝາກແຕ່ລະຊະນິດໄດ້<br><br>- ເພື່ອໃຫ້ເດັກສາມາຮ່ວມກຸ່ມຈຳນວນ1-3 ນຳຄູໄດ້. | ຮູບໝາກແອັບເປີນ, ໝາກມ່ວງ ແລະ ລຳໄຍ<br><br>- ການຮວ່ມກຸ່ມຈຳນວນ1-3 | **+ ຂັ້ນນຳເຂົ້າສູ່ບົດຮຽນ**<br>- ຄູຈັດເດັກເຂົ້າສູ່ລະບຽບ<br>- ພາເດັກສົນທະນາກ່ຽວກັບການປົກປັກຮັກສາໂຮງໝໍ ມີຫຍັງແດ່?(ເດັກຕອບ) ເດັກເຄີຍເຫັນຜ່ານມາ.<br>**+ ຂັ້ນດຳເນີນການສອນ**<br>- ຄູສະເໜີໃຫ້ເດັກຮູ້ກ່ອນວ່າມື້ນີ້ສາວຄູຈະພາພວກຫຼານຮຽນກ່ຽວກັບການຮວ່ມກຸ່ມຈຳນວນ1-3<br>ຄູຍົກຮູບໝາກແອັບເປີນ, ໝາກມ່ວງ ແລະ ລຳໄຍໃຫ້ເດັກສັງເກດແລ້ວຖາມເດັກວ່າໃນຮູບພາບນີ້ມີໝາກັຍງແດ່ ? ເດັກຕອບ<br>ຍ້ອງຍໍຊົມເຊີຍ<br>- ສາວຄູເອົາໄມ້ບ໊ອກຈຳນວນ1-3ມາໃຫ້ເດັກເບິ່ງກ່ອນ<br>- ສາວຄູໃຫ້ເດັກຮວ່ມກຸ່ມຈຳນວນ1-3 ຂອງໄມ້ບ໊ອກຕາມຫຼັງຄູ1-2 ເທື່ອ<br>- ສາວຄູໃຫ້ເດັກອາມາສະໝັກອອກມາຮວ່ມກຸ່ມຈຳນວນ1-3ຂອງໄມ້ບອັກ(ເທື່ອລະຄົນ).<br>- ຄູຕິດຕາມຊ່ວຍເຫຼືອເດັກຜູ້ທີ່ເຮັດປຽບທຽບບໍ່ທັນໄດ້ດີ ຍ້ອງຍໍຊົມເຊີຍເດັກ<br>**+ ຂັ້ນສະຫຼຸບບົດຮຽນ**<br>- ມື້ນີ້ສາວຄູພາພວກຫຼານຮຽນຮວ່ມກຸ່ມຫຍັງແດ່ ( ໃຫ້ເດັກຕອບ )<br>- ສາວຄູໃຫ້ເດັກອອກຮວ່ມກຸ່ມຈຳນວນ 1-3 ຄືນອີກ.<br>• **ສຶກສາອົບຮົມເດັກ**<br>- ພວກຫຼານເວລາຊື້ກິນໝາກໄມ້ຄວນເອົາໄປລ້າງໃຫ້ສະອາດກ່ອນຈິ່ງກິນ | ຮູບໝາກແອັບເປີນ, ໝາກມ່ວງ ແລະ ລຳໄຍ<br><br>- ຕົວເດັກ ແລະ ໝາກໄມ້ຈຳນວນ1-3. | ສັງເກດການຕອບຄຳຖາມຂອງເດັກ<br><br>- ສັງເກດການຮ່ວມກຸ່ມຈຳນວນ1-3,ຂອງເດັກແຕ່ລະຄົນ. |

**ປະເມີນຜົນການການຮຽນ**

| | ລະດັບຄຸນນະພາບ | ໝາຍເຫດ |
|---|---|---|

| ລາຍການປະເມີນ | ດີ | ພໍໃຊ້ | ຄວນປັບປຸງ | |
|---|---|---|---|---|
| - ສັງເກດການຕອບຄຳຖາມຂອງເດັກ<br>- ສັງເກດການຮ່ວມກຸ່ມຈຳນວນ1-3,ຂອງເດັກ | | | | |

**3.2 ເຝິກສອນຕົວຈິງໃນຊັ້ນອະນຸບານ**

## ບົດສອນຕົວຢ່າງ

ໜ່ວຍ ຄຸນນະທຳ ແລະ ສື່ສານ

ກິດຈະກຳວົງມົນ ການສອນຄະນິດສາດ ອາທິດທີ 1 ມື້ທີ 2

ຊັ້ນອະນຸບານ 1 ເວລາ 15 – 20 ນາທີ

ຫົວຂໍ້: ພະຫານະທາງບົກ

ວັນທີສອນ ...............................

| ຈຸດປະສົງ | ເນື້ອໃນ | ກິດຈະກຳການຮຽນການສອນ | ເວລາ | ອຸປະກອນ | ການປະເມີນ |
|---|---|---|---|---|---|
| ໃຫ້ເດັກສາດມາບອກພະຫານະໃນການເດີນທາງ | ມີລົດຈັກ, ລົດຖີບ, ລົດໃຫ່ຍ | ➢ **ຂັ້ນນຳເຂົ້າສູ່ບົດຮຽນ.**<br>- ຄູຈັດເດັກເປັນຮູບເຄິ່ງວົງມົນ<br>- ຄູກວດກາຈຳນວນເດັກ<br>- ຄູພາເດັກ ສ້າງບັນຍາກາດດ້ວຍການຮ້ອງເພງ: ພາຍເຮືອ<br>- ຄູພາເດັກຮ້ອງເພງ 1-2 ເທື່ອ<br>➢ **ຂັ້ນດຳເນີນການສອນ**<br>- ຄູສະເໜີບົດຮຽນທີ່ຈະພາເດັກຮຽນໃນມື້ນີ້ສາວຄູຈະພາພວກຫຼານຮຽນກ່ຽວກັບວິຊາຄະນິດສາດການຈັດກຸ່ມ<br>- ຄູສົນທະນາກັບເດັກກ່ຽວກັບພະຫານະໃນກາເດີນທາງບົກໂດຍຕັ້ງຄຳຖາມດັ່ງນີ້: ເວລາພວກຫຼານມາໂຮງຮຽນພວກຂີ່ຫຍັງແດ່ມາ ?<br>ເດັກຕອບ<br>ຍ້ອງຍໍຊົມເຊີຍເດັກ<br>ຄູສະຫຼູບຄືນໂດຍຫຍໍ້<br>-ຄູເອົາຮູບພາບ ລົດຈັກ ລົດຖີບ ລົດໃຫ່ຍ ວາງໄວເທິງໂຕະ<br>-ຄູອະທິບາຍ ແລະ ສາທິດການຈັດກຸ່ມໃຫ້ເດັກເບິ່ງກ່ອນ 1-2 ເທື່ອ<br>-ໃຫ້ເດັກອາສາສະມັກອອກມາຈັດກຸ່ມ | | ຮູບພາບລົດຈັກ , ລົດຖີບ,ລົດ | ສັງເກດການຕອບຂອງເດັກແຕ່ລະ |

| | | | | | |
|---|---|---|---|---|---|
| ບົກໄດ້<br><br><br>- ໃຫ້ເດັກ ສາມາດຈັດ ກຸ່ມລົດຈັກ ລົດຖີບ ລົດ ໃຫ່ຍນຳຄູ ໄດ້ | ການຈັດກຸ່ມ ລົດຈັກ ລົດຖີບ ລົດໃຫ່ຍ | ໃຫ້ໝູ່ເບິ່ງ 1-3 ຄົນ<br>-ແບ່ງອອກເປັນ2ກຸ່ມ ແຕ່ລະກຸ່ມໃຫ້ ອອກມາແຂ່ງກັນຈັດກຸ່ມ<br>-ຍ້ອງຍໍຊົມເຊີຍ<br>- ຄູຕິດຕາມ ແລະ ຊ່ວຍເຫຼືອເດັກ<br>- ຊົມເຊີຍເດັກ<br>➢ **ຂັ້ນສະຫຼຸບ**<br>- ຄູຖາມເດັກຄືນວ່າມື້ນີ້ສາວຄູພາ ພວກຫຼານຮຽນຫຍັງແດ່?<br>-ເດັກຕອບ<br>-ຄູພາເດັກເວົ້າຄືນ 2-3 ເທື່ອ<br>-ຊົມເຊີຍເດັກ<br>• **ສຶກສາເດັກ**<br>-ເວລາພວກຫຼານເມື່ອເຮືອນຕ້ອງໝັ່ນ ຮຽນໜັງສື ເພື່ອຈະໄດ້ຮຽນເກັ່ງ ແລະ ພວກຫຼານຕ້ອງເປັນເດັກຄຳຮູ້ຟັງ ຄວາມສາວຄູ ແລະ ພໍ່-ແມ່<br>-ຄູໃຫ້ເດັກອະນຸຍາດພັກຜ່ອນ | | ໃຫ່ຍ<br><br><br><br><br><br><br><br>ຮູບພາບລົດຈັກ , ລົດຖີບ,ລົດ ໃຫ່ຍ | ຄົນ<br><br><br><br><br><br>ສັງເກດ ການ ປະຕິບັດ ຕົວຈິງຂອງ ເດັກແຕ່ລະ ຄົນ |

## ປະເມີນຜົນການການຮຽນ

| ລາຍການປະເມີນ | ລະດັບຄຸນນະພາບ | | | ໝາຍເຫດ |
|---|---|---|---|---|
| | ດີ | ພໍໃຊ້ | ຄວນປັບປຸງ | |
| ສັງເກດການຕອບຂອງເດັກແຕ່ລະຄົນ<br>ສັງເກດ ການປະຕິບັດຕົວຈິງຂອງເດັກແຕ່ລະຄົນ | | | | |

## ບົດສອນຕົວຢ່າງ

ໝ່ວຍ ຄົມມະນາຄົມ ແລະ ສື່ສານ

ກິດຈະກຳວົງມົນ ການສອນຄະນິດສາດ

ຂັ້ນອະນຸບານ 2 ເວລາ 20 - 25 ນາທີ

ຫົວຂໍ້: ພະຫານະທາງນ້ຳ ອາທິດທີ 2 ມື້ທີ3

ວັນທີສອນ ...............................

| ຈຸດປະສົງ | ເນື້ອໃນ | ກິດຈະກຳການຮຽນການສອນ | ເວລາ | ອຸປະກອນ | ການປະ ເມີນ |
|---|---|---|---|---|---|

| | | | | | |
|---|---|---|---|---|---|
| ໃຫ້ເດັກສາດມາບອກພະຫານະໃນການເດີນທາງນ້ຳໄດ້<br><br>- ໃຫ້ເດັກສາມາດຈັດກຸ່ມລົດຈັກລົດຖີບ ລົດໃຫ່ຍນຳຄູໄດ້ | ມີເຮືອຈັກ,ເຮືອໃບ,ເຮືອພາຍ<br><br>ການຈັດກຸ່ມເຮືອ,ເຮືອໃບ,ເຮືອພາຍ | ➢ **ຂັ້ນນຳເຂົ້າສູ່ບົດຮຽນ.**<br>- ຄູຈັດເດັກເປັນຮູບເຄິ່ງວົງມົນ<br>- ຄູກວດກາຈຳນວນເດັກ<br>- ຄູພາເດັກ ສ້າງບັນຍາກາດດ້ວຍການຮ້ອງເພງ: ລົດອີ່ແຕນ<br>➢ **ຂັ້ນດຳເນີນການສອນ**<br>- ຄູສະເໜີບົດຮຽນທີ່ຈະພາເດັກຮຽນໃນມື້ນີ້ສາວຄູຈະພາພວກຫຼານຮຽນກ່ຽວກັບວິຊາຄະນິດສາດການລວມກຸ່ມ<br><br>- ຄູສົນທະນາກັບເດັກກ່ຽວກັບພະຫານະໃນກາເດີນທາງບົກໂດຍຕັ້ງຄຳຖາມດັ່ງນີ້: ເວລາພວກຫຼານມາໂຮງຮຽນພວກຂີ່ຫຍັງແດ່ມາ ?<br>ເດັກຕອບ<br>ຍ້ອງຍໍຊົມເຊີຍເດັກ<br>ຄູສະຫຼູບຄືນໂດຍຫຍໍ້<br><br>-ຄູແບ່ງຮູບພາບ ເຮືອຈັກ,ເຮືອໃບ, ເຮືອພາຍ ໃຫ່ຍອອກເປັນສາມກອງ<br>-ຄູອະທິບາຍ ແລະ ສາທິດວິທີການລວມກຸ່ມໃຫ້ເດັກເບິ່ງກ່ອນ 1-2 ເທື່ອ<br>-ໃຫ້ເດັກອາສາສະມັກອອກມາລວມກຸ່ມໃຫ້ໝູ່ເບິ່ງ 1-3 ຄົນ<br>- ໃຫ້ເດັກແຕ່ລະຄົນອອກມາລວມກຸ່ມລົດຈັກ,ລົດຖີບ ແລະ ລົດໃຫ່ຍ ຍ້ອງຍໍຊົມເຊີຍ<br>- ຄູຕິດຕາມ ແລະ ຊ່ວຍເຫຼືອເດັກ<br>- ຊົມເຊີຍເດັກ<br>➢ **ຂັ້ນສະຫຼູບ**<br>-ຄູຖາມເດັກຄືນວ່າມື້ນີ້ສາວຄູພາພວກຫຼານຮຽນຫຍັງແດ່?<br>-ເດັກຕອບ<br>-ຄູພາເດັກເວົ້າຄືນ 2-3 ເທື່ອ<br>-ຊົມເຊີຍເດັກ<br>• ສຶກສາອົບຮົມເດັກ<br>-ເວລາພວກຫຼານເມື່ອເຮືອນຕ້ອງໝັ່ນຮຽນໜັງສື ເພື່ອຈະໄດ້ຮຽນເກັ່ງ ແລະ | | ຮູບພາບເຮືອຈັກເຮືອໃບເຮືອພາຍ<br><br>ຮູບພາບເຮືອຈັກເຮືອໃບເຮືອພາຍ | ສັງເກດການຕອບຂອງເດັກແຕ່ລະຄົນ<br><br>ສັງເກດການປະຕິບັດຕົວຈິງຂອງເດັກແຕ່ລະຄົນ |

| | | | | | |
|---|---|---|---|---|---|
| | | ພວກຫຼານຕ້ອງເປັນເດັກຄໍາຮູ້ຟັງຄວາມສາວຄູ ແລະ ພໍ່-ແມ່<br>-ຄູໃຫ້ເດັກອະນຸຍາດພັກຜ່ອນ | | | |

## ປະເມີນຜົນການການຮຽນ

| ລາຍການປະເມີນ | ລະດັບຄຸນນະພາບ | | | ໝາຍເຫດ |
|---|---|---|---|---|
| | ດີ | ພໍໃຊ້ | ຄວນປັບປຸງ | |
| ສັງເກດການຕອບຂອງເດັກແຕ່ລະຄົນ<br>ສັງເກດ ການປະຕິບັດຕົວຈິງຂອງເດັກແຕ່ລະຄົນ | | | | |

## ບົດສອນ

- ໜ່ວຍ: ສິ່ງແວດລ້ອມອ້ອມຕົວເຮົາ
- ກິດຈະກໍາ: ວົງມົນ
- ຫົວຂໍ້: ຈໍານວນຂອງການແຍກກຸ່ມບໍ່ເກີນ 5: 5 ເອົາອອກ 2. ອາທິດທີ: 3 ມື້ທີ: 4
- ຂັ້ນອະນຸບານ 2 ເວລາ: 20-25 ນາທີ

| ຈຸດປະສົງ | ເນື້ອໃນຕົ້ນຕໍ | ກິດຈະກໍາການຮຽນ-ການສອນ | ອຸປະກອນ | ວັດແລະປະເມີນ |
|---|---|---|---|---|
| - ຝຶກໃຫ້ເດັກສາມາດສັງເກດຈໍາ | - ຈໍານວນຂອງການແຍກກຸ່ມກ້ອນຫີນບໍ່ເກີນ | **1 ຂັ້ນນໍາເຂົ້າສູ່ບົດຮຽນ**<br>- ຄູທັກທາຍສະບາຍດີ (ກວດກາຈໍານວນຜົນ)<br>- ຄູຈັດເດັກນັ່ງເປັນຮູບ U<br>- ຄູພາເດັກສ້າງບັນຍາກາດດ້ວຍການຮ້ອງເພງ: " ການນັບ " ປະກອບທ່າທາງ<br>**2 ຂັ້ນດໍາເນີນການສອນ**<br>- ຄູສະເໜີບົດຮຽນທີ່ຈະຮຽນມື້ນີ້ສາວຄູຈະພາພວກຫຼານຮຽນກ່ຽວກັບການບອກຈໍານວນຂອງການແຍກກຸ່ມບໍ່ເກີນ 5: 5 ເອົາອອກ 2<br>- ຄູສົນທະນາກັບເດັກກ່ຽວກັບຈໍານວນຂອງການແຍກກຸ່ມບໍ່ເກີນ 5: 5 ເອົາອອກ 2<br>- ຄູອະທິບາຍ ແລະ ສາທິດໃຫ້ເດັກສັງເກດວັດຖຸ ແລະ ບອກຈໍານວນຂອງການແຍກກຸ່ມບໍ່ເກີນ 5 1-2 ເທື່ອ | | |

| | | | | |
|---|---|---|---|---|
| ນວນຂອງການແຍກກຸ່ມກ້ອນຫີນບໍ່ເກີນ 5: 5 ເອົາອອກ 2 | 5: 5 ເອົາອອກ 2 | - ຄູໃຫ້ເດັກປະຕິບັດຕົວຈິງໂດຍຄູເປັນຜູ້ຕິດຕາມ<br>- ໃຫ້ເດັກອາສາສະໝັກອອກມາເຮັດໃຫ້ໝູ່ເບິ່ງ (ຕິດຕາມ ແລະ ຊ່ວຍເຫຼືອເດັກ)<br>- ຍ້ອງຍໍ (ຊົມເຊີຍເດັກ)<br>**3 ຂັ້ນສະຫຼຸບບົດຮຽນ**<br>- ສາວຄູຖາມເດັກຄືນວ່າມື້ນີ້ສາວຄູພາພວກຫຼານຮຽນກ່ຽວກັບຫຍັງ? ແລະເອົາຫຍັງແດ່? ມາໃຫ້ພວກຫຼານເບິ່ງ? (ເດັກຕອບ)<br>- ໃຫ້ເດັກອາສາສະໝັກອອກມາເວົ້າຄືນ 1-2 ຄົນ<br>- ຍ້ອງຍໍ (ຊົມເຊີຍເດັກ)<br>• **ຂັ້ນສຶກສາອົບຮົມເດັກ**<br>- ພວກຫຼານຕ້ອງເປັນເດັກຄຳຮູ້ຟັງຄວາມພໍ່ແມ່, ເວລາພວກຫຼານຢູ່ບ້ານຫຼືເຮືອນບໍ່ຄວນຫຼິ້ນໝາກຂີ້ຫີນແລ້ວດຶກໃສ່ກັນເພາະວ່າມັນຈະເກີດອັນຕະລາຍໄດ້ | - ກ້ອນຫີນ | -ສັງເກດການບອກຈຳນວນຂອງການແຍກກຸ່ມບໍ່ເກີນ 5 |

## ປະເມີນຜົນການການຮຽນ

| ລາຍການປະເມີນ | ລະດັບຄຸນນະພາບ | | | ໝາຍເຫດ |
|---|---|---|---|---|
| | ດີ | ພໍໃຊ້ | ຄວນປັບປຸງ | |
| -ສັງເກດການບອກຈຳນວນຂອງການແຍກກຸ່ມບໍ່ເກີນ 5 | | | | |

## ບົດສອນ

ໜ່ວຍ: ສິ່ງແວດລ້ອມອ້ອມຕົວເຮົາ

ກິດຈະກຳວົງມົນ: ການສອນຄະນິດສາດ

ຫົວຂໍ້: ກະປູ, ກຸ້ງ ແລະ ຫອຍ — ອາທິດທີ 2 ມື້ທີ1

ຂັ້ນອະນຸບານ 3 — ເວລາ 25 -30 ນາທີ

ວັນທີສອນ:............ — ຜູ້ແຕ່ງ..........................

| ຈຸດປະສົງ | ເນື້ອໃນ | ກິດຈະກຳການຮຽນການສອນ | ເວລາ | ອຸປະກອນ | ກ າ ນ ປ ະ ເມີນ |
|---|---|---|---|---|---|
| | | **ຂັ້ນນຳເຂົ້າສູ່ບົດຮຽນ.**<br>-ຈັດເດັກເປັນຮູບວົງມົນ<br>- ຄູກວດກາຈຳນວນເດັກ | | | |

| | | | | | |
|---|---|---|---|---|---|
| ໃຫ້ເດັກ<br>ສາມາດ:<br>1 ບອກ<br>ຄຸນ<br>ປະໂຫຍດ<br>ຂອງກະປູ<br>ກຸ້ງ ແລະ<br>ຫອຍນຳຄູ<br>ໄດ້<br><br>- ໃຫ້ເດັກ<br>ສາມາດ<br>ແຍກກຸ່ມ<br>ກະປູ ກຸ້ງ<br>ແລະ<br>ຫອຍນຳຄູ<br>ໄດ້ | ກະປູ, ກຸ້ງແລະ<br>ຫອຍເປັນ<br>ອາຫານ, ສ່ວນ<br>ເປືອກຫອຍ<br>ບາງຊະນິດເປັນ<br>ເຄື່ອງປະດັບ | - ຄູພາເດັກ ສ້າງບັນຍາກາດດ້ວຍ<br>ການຮ້ອງເພງ: ຈັບກະປູ<br>➢ **ຂັ້ນດຳເນີນການສອນ**<br>- ຄູສະເໜີບົດຮຽນທີ່ຈະພາເດັກຮຽນ<br>ໃນມື້ນີ້ສາວຄູຈະພາພວກຫຼານຮຽນ<br>ກ່ຽວກັບວິຊາຄະນິດສາດການລວມ<br>ກຸ່ມ<br><br>- ຄູສົນທະນາກັບເດັກກ່ຽວກັບຄຸນ<br>ປະໂຫຍດຂອງກະປູ.ກຸງ ແລະ ຫອຍ<br>ໂດຍຕັ້ງຄຳຖາມລຸ່ມນີ້<br>+ ພວກຫຼານວ່າກະປູ, ກຸ້ງ ,ຫອຍມີ<br>ຄຸນປະໂຫຍດແນວໃດ ?<br>ເດັກຕອບ<br>ຍ້ອງຍໍຊົມເຊີຍເດັກ<br>ຄູສະຫຼູບຄືນໂດຍຫຍໍ້<br><br>-ຄູເອົາຮູບພາບ ກະປູ ກຸ້ງ ແລະ ຫອຍ<br>-ຄູອະທິບາຍ ແລະ ສາທິດວິທີການ<br>ແຍກກຸ່ມໃຫ້ເດັກເບິ່ງກ່ອນ 1-2 ເທື່ອ<br>-ໃຫ້ເດັກອາສາສະມັກອອກມາ<br>ແຍກກຈຳນວນຮູບກະປູ, ກຸ່ງ ແລະ<br>ຫອຍໃຫ້ໝູ່ເບິ່ງ 1-3 ຄົນ<br>- ໃຫ້ເດັກແຕ່ລະຄົນອອກມາແຍກກຸ່ມ<br>ກະປູ ກຸ້ງ ແລະ ຫອຍ<br>ຍ້ອງຍໍຊົມເຊີຍ<br>- ຄູຕິດຕາມ ແລະ ຊ່ວຍເຫຼືອເດັກ<br>- ຊົມເຊີຍເດັກ<br>➢ **ຂັ້ນສະຫຼຸບ**<br>-ຄູຖາມເດັກຄືນວ່າມື້ນີ້ສາວຄູພາພວກ<br>ຫຼານຮຽນຫຍັງແດ່?<br>-ເດັກຕອບ<br>-ຄູພາເດັກປະຕິບັດຄືນ2-3 ເທື່ອ<br>-ຊົມເຊີຍເດັກ<br>• ສຶກສາອົບຮົມເດັກ<br>-ເວລາພວກຫຼານເມື່ອເຮືອນຕ້ອງໝັ່ນ<br>ຮຽນໜັງສື ເພື່ອຈະໄດ້ຮຽນເກັ່ງ ແລະ<br>ພວກຫຼານຕ້ອງເປັນເດັກຄຳຮູ້ຟັງ<br>ຄວາມສາວຄູ ແລະ ພໍ່-ແມ່<br>-ຄູໃຫ້ເດັກອະນຸຍາດພັກຜ່ອນ | | ຮູບພາບ ກະປູ<br>ກຸ້ງ ແລະ ຫອຍ<br><br>ຮູບພາບກະປູ<br>ກຸ້ງ ແລະ ຫອຍ | ສັງເກດ<br>ການຕອບ<br>ຂອງເດັກ<br>ແຕ່ລະ<br>ຄົນ<br><br>ສັງເກດ<br>ການ<br>ປະຕິບັດ<br>ຕົວຈິງຂອງ<br>ເດັກແຕ່ລະ<br>ຄົນ |

# ປະເມີນຜົນການການຮຽນ

| ລາຍການປະເມີນ | ລະດັບຄຸນນະພາບ | | | ໝາຍເຫດ |
|---|---|---|---|---|
| | ດີ | ພໍໃຊ້ | ຄວນປັບປຸງ | |
| ສັງເກດການຕອບຂອງເດັກແຕ່ລະຄົນ<br>ສັງເກດ ການປະຕິບັດຕົວຈິງຂອງເດັກແຕ່ລະຄົນ | | | | |

**ໃຈຄວາມ.**

ວິທີສອນການຈຳແນກທຸກຄັ້ງຕ້ອງໃຫ້ມີວັດຖຸທັງ 3 ປະເພດ ແລະ ແຕ່ລະປະເພດຕ້ອງໃຫ້ສອດຄ່ອງກັບໜ່ວຍການສອນ, ເຮົາສາມາດຈັດກິດຈະກຳແບບນີ້ກັບກິດຈະກຳເສີມຫຼັກສູດ ແລະ ເກມການສຶກສາໄດ້ນອກຈາກິດຈະກຳວົງມົນ.

**ຄຳຖາມຄົ້ນຄ້ວາ**

1. ຈົ່ງອະທິບາຍຄວາມໝາຍຂອງການຈຳແນກ ?
2. ວິສອນການແຍກກຸ່ມໝາຍເຖິງຫຍັງ ?
3. ວິທີສອນການຈຳແນກໝາຍເຖິງຫຍັງ ?
4. ວິທີສອນການລວມກຸ່ມໝາຍເຖິງຫຍັງ ?

1. **ວຽກບ້ານ:** ໃຫ້ນັກຮຽນແຕ່ລະຄົນແຕ່ງບົດສອນໃນຊັ້ນອະນຸບານ ( ໃຫ້ແຕ່ງກ່ຽວກັບການຈຳແນກ ), ພ້ອມທັງຜະລິດສື່ການສອນທີ່ຕົນຈະສອນ.

# ບົດທີ 6
# ວິທີສອນການນັບ

ເວລາ 5 ຊົ່ວໂມງ

- **ຈຸດປະສົງໃຫ້ນັກຮຽນຄູສາມາດ:**

1. **ອະທິບາຍຄວາມໝາຍຂອງການນັບໄດ້**
2. **ອະທິບາຍການຈັດກິດຈະກຳການຮຽນ-ການສອນການນັບປາກເປົ່າໄດ້.**
3. **ແຕ່ງບົດສອນ, ຜະລິດສື່ການສອນ ແລະ ສອນຕົວຈິງໄດ້**

## 1. ວິທີສອນການນັບ

ນັກຮຽນຈຳນວນນຶ່ງມີຄວາມຮູ້ໃນການນັບກ່ອນເຂົາເຈົ້າເລີ່ມເຂົ້າໂຮງຮຽນ ແລະ ສາມາດ'ນັບໄດ້' ຮອດ 10. ແຕ່ພວກເຮົາຈຳເປັນຕ້ອງຖາມ' 'ນັກຮຽນນັບໄດ້ແທ້ບໍ?'. ນັກຮຽນເຄີຍໄດ້ຮຽນກ່ຽວກັບຄວາມຕໍ່ເນື່ອງຂອງຄຳສັບ, ນຶ່ງ, ສອງ, ສາມ.........ນັບຕໍ່ໄປຈົນຮອດ ສິບ, ແລະ ນັກຮຽນເຄີຍໄດ້ຮຽນແຕ່ເວົ້າລື້ມຄືນຄຳເວົ້າ, ກໍຄືກັນກັບນັກຮຽນອາດຮຽນຄຳເວົ້າຈາກເພງ. ເຖິງຢ່າງໃດກໍດີ, ການນັບມີສ່ວນຮ່ວມຫຼາຍກວ່າການເວົ້າຊື່ຂອງຈຳນວນໃຫ້ຖືກຕາມລຳດັບເທົ່ານັ້ນ. ການນັບແມ່ນກ່ຽວພັນກັບການຮູ້ວ່າບັນດາຄຳສັບທີ່ພົວພັນກັບຈຳນວນສະເພາະຂອງລາຍການໃດນຶ່ງ.

➢ **ຄວາມໝາຍຂອງການນັບຕົວເລກ**

ແມ່ນການໃຫ້ເດັກຮູ້ຈັກຕົວເລກທີ່ເຫັນຫຼືໃຊ້ໃນຊີວິດປະຈຳວັນໃຫ້ເດັກຫຼິ້ນຂອງຫຼິ້ນທີ່ກ່ຽວກັບບຕົວເລກເພື່ອໃຫ້ເດັກໄດ້ນັບ ແລະ ຄິດເອງ ແລະ ເປັນການນຳໃຊ້ທາງຄະນິດສາດເພື່ອໃຊ້ໃນການຫາຄຳຕອບວ່າວັດຖຸດມີຈຳນວນເທົ່າໃດ? ສະນັ້ນ,ການນັບເລກຖືກນຳເຂົ້າໃນການສິດສອນທີ່ເປັນຄວາມຮູ້ກັບຊື່ຈຳນວນ

ການນັບໃນຂັ້ນຕົ້ນຂອງເດັກມັກຈະເປັນການນັບແບບທ່ອງຂຶ້ນໃຈ,ເປັນການນັບລຽງຕາມລຳດັບແຕ່ຍັງບໍ່ທັນແມ່ນການຮຽນຮູ້ນັບທີ່ແທ້ຈິງ, ສິ່ງສຳຄັນຄວນໃຫ້ເດັກເຂົ້າໃຈກ່ຽວກັບຈຳນວນເຊັ່ນ: ນັບສິ່ງຂອງຖືກຕ້ອງຕາມຈຳນວນທີ່ຕ້ອງການ.

ໃນການສອນນັບນັ້ນຄວນນຳໃຊ້ວັດຖຸ ແລະ ຄວນນຳໃຊ້ເຂົ້າໃນທຸກໆສະຖານະການໃນການເຄື່ອນໄຫວອື່ນໆພາຍໃນໂຮງຮຽນເຊັ່ນ:

- ໃຫ້ເດັກນັບໝູ່ຕົນເອງໃນເວລາຫຼິ້ນຮ່ວມກັນ.
- ໃຫ້ເດັກນັບການຜອງດິນຊາຍ.
- ໃຫ້ເດັກນັບການໄກວໂອ່ນຊາໃນເວລາຂີ່ໂອ່ນຊາ.
- ໃຫ້ເດັກນັບບ່ວງ - ສ້ອມໃນເວລາກິນອາຫານ.
- ໃຫ້ເດັກນັບໝູ່ເພື່ອນເພື່ອຈັດຈານອາຫານໃຫ້ຄົບທຸກຄົນ.

➢ **ຄວາມສຳຄັນຂອງການນັບຕົວເລກ**

ມັນມີຄວາມສຳຄັນສຳລັບຄູສອນໃນການຕັດສິນໃຈຖ້າວ່ານັກຮຽນຜູ້ນຶ່ງສາມາດນັບໄດ້ແທ້ໆ ຫຼື ນັກຮຽນເວົ້າລື້ມຄືນຄຳເວົ້າຕາມລຳດັບເທົ່ານັ້ນ. ຈະເຮັດແນວນີ້ໄດ້ໂດຍການໃຫ້ນັກຮຽນແກ້ໂຈດບັນຫາຈຳນວນທີ່ຈະສາທິດໃຫ້ເຫັນວ່ານັກຮຽນສາມາດເອົາຄຳສັບກ່ຽວກັບຕົວເລກໃຫ້ເຂົ້າຄູ່ກັບລາຍການຂອງການຮວມກັນ. ຕົວຢ່າງ, ເອົາ

ຊຸດລາຍການຕ່າງໆໃຫ້ນັກຮຽນ ແລະ ໃຫ້ເບິ່ງວ່ານັກຮຽນສາມາດນັບລາຍການນັ້ນໄດ້ຢ່າງຖືກຕ້ອງ, ແລະ ນັກຮຽນສາມາດບອກໄດ້ວ່າໃນຊຸດນັ້ນມີເທົ່າໃດ.

➢ ຂັ້ນຕອນການນັບ

ການນັບມີສາມຂັ້ນຕອນຫຼັກທີ່ຈະເຫັນໄດ້ຄວາມກ້າວໜ້າຂອງນັກຮຽນເພາະວ່ານັກຮຽນພັດທະນາທັກສະການນັບຂອງເຂົາເຈົ້າໂດຍຜ່ານການນັບຄືດັ່ງນີ້:

- ການນັບແບບຈື/ທ່ອງຈຳ
- ການນັບແບບສຳພັດ
- ການນັບແບບມີຫຼັກການ

ການນັບແບບຈື່/ທ່ອງຈຳແມ່ນເວລານັກຮຽນສາມາດເວົ້າກ່ຽວກັບຄວາມຕໍ່ເໜື່ອງຕາມລຳດັບຂອງຊື່ຕົວເລກໃນລຳດັບຄືກັນ ແລະ ສາມາດເວົ້າລົ້ມຄືນເລກຕາມລຳດັບຄວາມຕໍ່ເໜື່ອງໄດ້. ຄວາມຕໍ່ເນື່ອງອາດປະກອບດ້ວຍຊື່ຂອງຕົວເລກທັງໝົດຄື ນຶ່ງຈົນຮອດ ສິບ ຫຼື ນັກຮຽນອາດລືມຕົວເລກໃດນຶ່ງໃນຄວາມຕໍ່ ເນື່ອງນັ້ນ ( 1,2,3,4, 6,7,8,9, 10). ໃນຂະນະທີ່ນັກຮຽນກຳລັງນັບຕົວເລກນັ້ນ, ເຂົາເຈົ້າບໍ່ສາມາດບອກເຈົ້າໄດ້ວ່າ' ວັດຖຸມີເທົ່າໃດ'ໃນການຮວມວັດຖຸ, ເຂົາເຈົ້າມີແຕ່ເວົ້າລົ້ມຄືນຊື່ຕົວເລກຕາມຄວາມຕໍ່ເນື່ອງຂອງມັນເທົ່ານັ້ນ.

ການນັບແບບສຳພັດແມ່ນເວລານັກຮຽນຊີ້ໄປ ຫຼື ສຳພັດກັບວັດຖຸໃນຂະນະທີ່ນັບແຕ່ນັກຮຽນຍັງບໍ່ມີຄວາມສາມາດຕອບທ່ານໄດ້ຢ່າງຄ່ອງແຄ້ວວ່າວັດຖຸໂຮມເຂົ້າກັນ' ມີເທົ່າໃດ'. ເຂົາເຈົ້າຈະສຳພັດວັດຖຸນຶ່ງອັນ ຫຼື ຫຼາຍອັນໃນຂະນະທີ່ນັບເລກນຶ່ງ ຕົວຢ່າງ. ນັບນຶ່ງແຕ່ສຳພັດ ສາມລາຍການ ແລະ ສືບຕໍ່ນັບ. ດ້ວຍເຫດຜົນນີ້ນັກຮຽນສາມາດນັບກຸ່ມຂອງວັດຖຸ 6 ອັນດ້ວຍການນັບ 1 (ໃນເວລາສຳພັດສອງວັດຖຸ); ນັບ 2( ໃນເວລາສຳພັດວັດຖຸສອງອັນຕໍ່ໄປ); ນັບ 3
(ໃນເວລາສຳພັດວັດຖຸຕໍ່ໄປ); ແລະ ຈາກນັ້ນ 4 ສຳລັບວັດຖຸອັນສຸດທ້າຍ. ເມື່ອເວລາຖາມວ່າ 'ມີຫຼາຍປານໃດ' ນັກຮຽນເຄີຍເລີ້ມນັບຄືນເລື້ອຍໆຫຼາຍກວ່າການໃຫ້ຄຳຕອບຈຳນວນທັງໝົດ.

ການນັບແບບມີຫຼັກການແມ່ນຂັ້ນຕອນຕໍ່ໄປຂອງການນັບ ແລະ ແມ່ນພວກເຮົາຕ້ອງການໃຫ້ນັກຮຽນທຸກຄົນສາມາດນັບໄດ້. ໃນຂັ້ນນີ້ນັກຮຽນເຂົ້າໃຈວ່າ:

- ການນັບວັດຖຸແຕ່ລະອັນແມ່ນມີຊື່ຂອງຈຳນວນອັນດຽວເທົ່ານັ້ນ. ນີ້ກໍອ້າງເຖິງຄວາມສອດຄ່ອງກັນ ນຶ່ງ ກັບ ນຶ່ງ.
- ມັນມີລຳດັບສະເພາະອີກຊຶ່ງຊື່ຂອງຈຳນວນຕ້ອງໄປຕາມລຳດັບເວລານັບວັດຖຸ. ຕົວຢ່າງ. 1,2,3,4,5,6,7,8,9, 10.
- ວັດຖຸອາດສາມາດຖືກນັບໃນລຳດັບອື່ນກໍໄດ້ ແລະ ທ່ານຕ້ອງມີຈຳນວນທັງໝົດຄືກັນ. ທ່ານສາມາດເລີ້ມນັບວັດຖຸອັນໃດອັນນຶ່ງໃນການໂຮມວັດຖຸກ່ອນກໍໄດ້ ແລະ ຈຳນວນທັງໝົດຂອງມັນຈະບໍ່ມີການປ່ຽນແປງ.
- ເມື່ອເວລານັບ, ຕົວເລກສຸດທ້າຍຈະບອກທ່ານວ່າຈຳນວນໃນການໂຮມວັດຖຸ ຕົວຢ່າງ. ເວລານັບການໂຮມຂອງ 4 ວັດຖຸ (1,2,3,4) ເລກ ສີ່ ແມ່ນຕົວເລກສຸດທ້າຍ ແລະ ມັນຈະບອກວ່າທັງໝົດມີເທົ່າໃດ.



| | | | |
|---|---|---|---|
| 1 | 2 | 3 | 4 |
| 4 | 3 | 2 | 1 |

ມີດາວຈັກອັນ? (ເດັກນັບ 1,2,3,4
ແລະ ສາມາດບອກໄດ້ວ່າມີດາວ '4 ດວງ'

**ການຈັດກິດຈະກຳການຮຽນ-ການສອນການນັບປາກເປົ່າ**

❖ **ກິດຈະກຳ ( ນຳເຂົ້າສູ່ບົດຮຽນ )**

- ຄູພາເດັກຮ້ອງເພງ << ນັບ >> ແຕ່ 1 – 10

1 2 3 ເຂົ້າຫຼາມເຂົ້າຈີ່.
4 5 6 ໝາກບິກໝາກເຜັດ
7 8 9 ນົກເຄົ້ານົກຈິບ
ນັບຮອດ 10 ຫຼານນ້ອຍເກັ່ງຫຼາຍ.

❖ **ກິດຈະກຳ ( ໃຊ້ວັດຖຸຕົວຈິງ ).**

- ຄູຈັບໄມ້ດິ້ວຂຶ້ນແລ້ວພານັກຮຽນນັບຕາມລຳດັບເທື່ອລະ 1 ຈົນຮອດຈຳນວນທີ່ຕ້ອງການຕາມແຕ່ລະໜ່ວຍການສອນ.
- ຄູໃຫ້ເດັກຕົບມືເທື່ອລະບາດແຕ່ 1 – 10.
- ຄູສັ່ນໝາກກະແຊັກເດັກນັບຕາມສຽງແຕ່ 1 – 10.
- ຄູເອົາໄມ້ 2 ອັນມາເຄາະກັນໃຫ້ເດັນັບສຽງບາດເຄາະແຕ່ 1 – 10.
- ຄູໃຫ້ເດັກຢືນຂຶ້ນ 10 ຄົນແລ້ວໃຫ້ເດັກນັບໝູ່ເພື່ອນທີ່ຢືນຂຶ້ນແຕ່ 1 – 10.
- ຄູໃຫ້ເດັກຍົກນິ້ວມືຂຶ້ນເທື່ອລະນິ້ວແລ້ວນັບໄປພ້ອມແຕ່ 1 – 10 ( ຫຼືຈະໃຊ້ວິທີອື່ນໆ ກໍ່ແລ້ວແຕ່ຄວາມເໝາະສົມຂອງແຕ່ລະໜ່ວຍການສອນ ).

❖ **ກິດຈະກຳ ( ໃຊ້ຮູບພາບ ).**

ຄູເອົາຮູບໝາກໄມ້, ຮູບສັດ, ຮູບແມງໄມ້ ແລະ ອື່ນໆເຊິ່ງຮູບແຕ່ລະແຜ່ນມີພຽງອັນດຽວມາວາງໄວ້ຕໍ່ໜ້າເດັກ, ແລ້ວໃຊ້ຄຳຖາມດັ່ງນີ້:

- ນີ້ແມ່ນຮູບຫຍັງ ? ມີຈັກຮູບ ? ຖາມຕໍ່ໄປຈົນຮອດ 10.
- ນຳພາເດັກນັບໂດຍຊີ້ໃສ່ເທື່ອລະຮູບແຕ່ 1 – 10.



1 2 3 4 5 6 7 8 9

10

**ຮູບທີ 1 ນັບຈຳນວນໝາກມັງຄຸດ**

**1.2 ການຈັດກິດຈະກຳການຮຽນ-ການສອນການນັບລຽງລຳດັບຕາມຄວາມໝາຍຂອງຈຳນວນ**

❖ **ກິດຈະກຳ ( ນຳໃຊ້ວັດຖຸຕົວຈິງ )**

- ຄູຈັບໃບໄມ້ຂຶ້ນແລ້ວພາເດັກນັບເທື່ອລະໃບຕາມລຳດັບຈົນຮອດຈຳນວນທີ່ຕ້ອງການ
- ຄູຈັບທໍ່ດູດຂຶ້ນແລ້ວພາເດັກນັບເທື່ອລະຈຳນວນຕາມລຳດັບຈົນຮອດຈຳນວນທີ່ຕ້ອງການ.

**ຕົວຢ່າ**



1 2 3 4 5 6 7 8 9 10

- ຄູຈັບທໍ່ດູດຂຶ້ນອັນໜຶ່ງແລ້ວຖາມເດັກວ່າ: ນີ້ແມ່ນຈຳນວນເທົ່າໃດ ? ແລ້ວຄູວາງກໍ້ດູດລົງ, ຈາກນັ້ນຄູຈັບກໍ້ດູດສອງອັນຂຶ້ນແລ້ວຖາມເດັກວ່າມີຈຳນວນເທົ່າໃດ ?
- ໃຫ້ນັກຮຽນນັບຄືນ. ຄູຈັບເທື່ອລະ 1 ໃຫ້ນັບເດັກນັບຮອດ 2, ແລ້ວຄູວາງກໍ້ດູດລົງ, ຖັດໄປດ້ານຂວາ, ເຮັດແນວນັ້ນຕໍ່ໆໄປຈົນຮອດຈຳນວນທີ່ຕ້ອງການ



**1 2 3 4 5 6 ....**

❖ **ກິດຈະກຳ ( ໃຊ້ຮູບພາບ )**

- ຄູເອົາຮູບເທື່ອລະແຜ່ນ, ແຕ່ລະແຜ່ນມີຈຳນວນແຕກຕ່າງກັນຄື: ແຜ່ນທີ 1 ມີຮູບ 1 ອັນ, ແຜ່ນທີ 2 ມີຮູບ 2 ອັນ, ແຜ່ນທີ 3 ມີຮູບ 3 ອັນ ... ຄືແນວນັ້ນຕໍ່ໆ ໄປຈົນຮອດຈຳນວນທີ່ຕ້ອງການ.

**ຕົວຢ່າງ** ຄູຖາມເດັກດັ່ງນີ້:

- ນີ້ແມ່ນຮູບຫຍັງ ? ມີເທົ່າໃດ ? ( 1 )

  ຄູຈັບຮູບທີ 2 ແລ້ວຖາມວ່າ:

- ນີ້ແມ່ນຮູບຫຍັງ ? ມີເທົ່າໃດ ? (2 )ນັບເບິ່ງແມ່ນແທ້ບໍ? ແລ້ວວາງຕໍ່ກັນໄປ...(ຖາມຄ້າຍຕືກັນນີ້ຕໍ່ໆໄປຈົນຮອດຈຳນວນທີ່ຕ້ອງການເຮັດຄ້າຍຄືກັນໂດຍປ່ຽນຮູບພາບຕາມໜ່ວຍການສອນເຊັ່ນ: ໜ່ວຍໝາກໄມ້ກໍໃຫ້ມີຮູບໝາກໄມ້ຫຼາຍປະເພດ, ຖ້າໜ່ວຍຜັກກໍໃຫ້ມີຮູບໝາກໄມ້ຫຼາຍປະເພດ, ຖ້າໜ່ວຍຜັກກໍໃຫ້ມີຮູບໝາກໄມ້ຫຼາຍປະເພດ ເຊັ່ນ:



**ຮູບທີ 2 ການນັບຈຳນວນໝາກແອັບເປີ້ນ**

❖ **ກິດຈະກຳ ( ສັນຍາລັກ )**

- ຈາກຮູບທີ່ຄູວາງຕາມລຳດັບເທື່ອລະ 1 , ຄູເອົາບັດເລກແຕ່ 1 ... ເຖິງຈຳນວນທີ່ຕ້ອງການໄປວາງໃສ່ດ້ານໜ້າຂອງຮູບຈົນຄົບແລ້ວນັບໄປພ້ອມ.

**ຕົວຢ່າງ 1**




ຮູບທີ 3 ການນັບລຽງຈຳນວນໝາກແອັບເປີ້ນ

## 2. ການແຕ່ງບົດສອນ ແລະ ຜະລິດອຸປະກອນ

ການແຕ່ງບົດສອນໝາຍເຖິງການທີ່ຄູໄດ້ວາງແຜນກ່ອນການດຳເນີນກິດຈະກຳໃດໜຶ່ງເຊິ່ງປະກອບດ້ວຍການກຳນົດຈຸດປະສົງ, ການວາງເນື້ອໃນ, ຮູບແບບ ແລະ ກິດຈະການການການຮຽນ ການສອນ ແລະ ການກະກຽມສື່ການສອນປະກອບເຂົ້າໃນກິດຈະກຳການສອນຢ່າງລະອຽດ, ການແຕ່ງບົດສອນແຕ່ລະຄັ້ງຄູອະນຸບານຕ້ອງໄດ້ສຶກສາປຶ້ມແຜນຈັດປະສົບການໃນໂຮງຮຽນລ້ຽງເດັກ - ອະນຸບານໃນແຕ່ລະສຳອາຍຸເດັກເປັນຫຼັກໃນການສ້າງແຜນກາສອນປະສົມປະສານກັບແນວຄວາມຄິດໃນການອອກແບບການສອນ, ແບບບູລະນະການ, ຄູສະຫຼູບລວມແລ້ວການແຕ່ງບົດສອນແມ່ນການກະກຽມຄວາມພ້ອມກ່ອນລ່ວງໜ້າຂອງຄູ ເພື່ອໃຫ້ການຮຽນການສອນລະຫວ່າງຄູ ແລະເດັກ ໃຫ້ບັນລຸຕາມຈຸດປະສົງທີ່ວາງໄວ້ ເຊິ່ງລາຍລະອຽດຂອງບົດສອນຜະອຸປະກອນ: ການຜະລິດອຸປະກອນແມ່ນສິ່ງທີ່ຈຳ

ເປັນສຳລັບຄູ ແລະ ເດັກ. ອຸປະກອນຈະຊ່ວຍໃຫ້ຜູ້ຮຽນມີຄວາມສົນໃຈ,ບໍ່ເບື່ອໜ່າຍໃນການຮຽນ,ຊ່ວຍໃຫ້ເດັກໄດ້ພັດທະນາຄວາມຄິດ, ຄວາມເຂົ້າໃຈ ແລະຈື່ຈຳບົດຮຽນໄດ້ດີ.

## 3. ການເຝິກສອນຕົວຈິງ

- ຄູແບ່ງນັກສຶກສາຄູອອກເປັນກຸ່ມ
- ໃຫ້ແຕ່ລະກຸ່ມຜັດປ່ຽນກັນສອນພາຍໃນກຸ່ມ
- ສອນແລ້ວແຕ່ລະກຸ່ມຮ່ວມກັນທອດຖອນບົດຮຽນເຊິ່ງກັນ ແລະ ກັນພາຍໃນກຸ່ມເພື່ອເປັນການປັບປຸງວິທີສອນໃຫ້ສອດຄ່ອງກັບເດັກແຕ່ລະສົ່ງອາຍຸ
- ສົ່ງຕົວແທນໃນກຸ່ມຕົນເອງມາສອນໃຫ້ກຸ່ມອື່ນເບິ່ງເພື່ອແລກປ່ຽນບົດຮຽນເຊິ່ງກັນ ແລະ ກັນການສອນພາສາລາວແບບເນັ້ນປະສົບການ ແລະ ບູລະນາການທີ່ໜ້າສົນໃຈຂອງເດັກໃຫ້ແກ່ເດັກແຕ່ລະສົ່ງອາຍຸ

### 3.1 ເຝິກສອນຕົວຈິງໃນຂັ້ນລ້ຽງເດັກໃຫຍ່

## ບົດສອນ

ໜ່ວຍ: ສັດລ້ຽງ

ກິດຈະກຳ: ວົງມົນ

ຫົວຂໍ້: ການຈັບປາກເປົ່າແຕ່ 1-10

ຊັ້ນລ້ຽງເດັກກາໃຫຍ່ ເວລາ 10- 15 ນາທີ

| ຈຸດປະສົງ | ເນື້ອໃນ | ກິດຈະກຳການຮຽນ-ການສອນ | ເວລາ | ອຸປະກອນ | ປະເມີນ |
|---|---|---|---|---|---|
| | | **1,ຂັ້ນນຳເຂົ້າສູ່ບົດຮຽນ**<br>-ຈັດເດັກເປັນຮູບວົງມົນ<br>-ຄູແລະເດັກເຄົາລົບເຊິ່ງກັນແລະກັນ<br>-ຄູກວດກາຈຳນວນຄົນຂາດ<br>-ຄູພາເດັກສ້າງບັນຍາກາດໂດຍ ການຮ້ອງເພງ ນັບເລກ<br>-ຍ້ອງຍໍຊົມເຊີຍເດັກ<br>**2,ຂັ້ນດຳເນີນການສອນ**<br>-ຄູສະເໜີກິດຈະກຳທີ່ຈະພາເດັກ ຮຽນກິດຈະກຳວົງມົນ, ຫົວຂໍ້: | 3 ນາທີ | | |

| | | | | | |
|---|---|---|---|---|---|
| -ເພື່ອໃຫ້ເດັກການນັບປາກເປົ່າແຕ່ 1-10<br><br>ໄດ້ | ການນັບປາກເປົ່າແຕ່ 1-10 | ການຈັບປາກເປົ່າແຕ່ 1-10<br><br>-ຄູພາເດັກນັບປາກເປົ່າແຕ່ 1-10, 1-2ເທື່ອ<br><br>- ຄູໃຫ້ເດັກນັບຕາມຫຼັງ 1-2 ເທື່ອ<br><br>- ໃຫ້ເດັກນັບພ້ອມກັນໝົດຫ້ອງ<br><br>- ໃຫ້ເດັກອາສາສະມັກອອກມານັບໃຫ້ໝູ່ຟັງ 1-2 ຄົນ<br><br>-ຍ້ອງຍໍຊົມເຊີຍເດັກ<br><br>- -ຄູໃຫ້ເດັກປະຕິບັດຕົວຈິ່ງ<br><br>-ຄູຕິດຕາມແລະຊ່ວຍເຫລືອເດັກຜູ້ທີ່ປະຕິບັດ ບໍ່ທັນໄດ້ດີ<br><br>**3,ຂັ້ນສະຫລຸບ**<br><br>-ຄູຖາມຄືນວ່າ: ຄູພາພວກຫຼານຮຽນຫຍັງ ?<br><br>-ເດັກຕອບ<br><br>-ຄູຍ້ອງຍໍຊົມເຊີຍເດັກ.<br><br>- ຄູໃຫ້ເດັກຜູ້ທີ່ປະຕິບັດບໍ່ທັນໄດ້ດີອອກມານັບເລກໃຫ້ຫມູ່ເບິ່ງຄືນ<br><br>**+ສຶກສາອົບຮົມເດັກ**:ພວກຫຼານຕ້ອງຮັກແພງກັນ,ຕັ້ງໃຈຮຽນນຳຄູ -ໃຫ້ເດັກພັກຜ່ອນ | 10 ນາທີ<br><br>3 ນາທີ | | -ສັງເກດຄວາມຖືກຕ້ອງໃນນັບເລກປາກເປົ່າຂອງເດັກ |

| | | | | | |
|---|---|---|---|---|---|
| | | | | | |

ປະເມີນຜົນການຮຽນ

| ລຳດັບ | ຫົວຂໍ້ການປະເມີນ | ດີ/ຄົນ | ປານກາງ/ຄົນ | ປັບປຸງ/ຄົນ |
|---|---|---|---|---|
| 1 | -ສັງເກດຄວາມຖືກຕ້ອງໃນນັບເລກປາກເປົ່າຂອງເດັກ | | | |

## ບົດສອນ

- ໜ່ວຍ: ສັດລ້ຽງ
- ອາທິດທີ່: 3 ມື້ທີ່5
- ກິດຈະກຳວົງມົນ ເວລາ 10- 15 ນາທີ
- ຫົວຂໍ້: ການສອນຄະນິດສາດ(ບອກເລຂາຄະນິດຈະຕຸລັດ).
- ຊັ້ນລ້ຽງເດັກໃຫ່ຍ

| ຈຸດປະສົງ | ເນື້ອໃນ | ກິດຈະກຳ | ອຸປະກອນ | ປະເມີນ |
|---|---|---|---|---|
| ເພື່ອໃຫ້ເດັກສາມາດບອກຮູບເລຂາຄະນິດ | ການບອກຮູບເລຂາຄະນິດຈະຕຸລັດແລະຕໍ່ຮູບຈະຕຸລັດ6ຮູບລຽນກັນ. | **ຂັ້ນນຳເຂົ້າສູ່ບົດຮຽນ**<br>- ຄູຈັດເດັກເຂົ້າສູ່ລະບຽບ<br>- ພາເດັກສົນທະນາກ່ຽວກັບຄຸນປະໂຫຍດຂອງໂຮງໝໍມີຫັຍງແດ່?(ເດັກຕອບ).<br>**ຂັ້ນດຳເນີນການສອນ**<br>- ຄູສະເໜີໃຫ້ເດັກຮູ້ກ່ອນວ່າມື້ນີ້ສາວຄູຈະພາພວກຫຼານຮຽນກ່ຽວກັບການບອກຮູບເລຂາຄະນິດຮູບຈະຕຸລັດ ແລະຕໍ່ຮູບຂະຕຸລັດ6ຮູບລຽນກັນ.<br>- ຄູບອກຮູບເລຂາຄະນິດຈະຕຸລັດ ແລະຕໍ່ຮູບຈະຕຸລັດ6ຮູບລຽນກັນໃຫຫ້ເດັກເບິ່ງກ່ອນ(1-3ເທື່ອ).<br>- ສາວຄູໃຫ້ເດັກອອກມາບອກຮູບເລຂາຄະນິດແລະຕໍ່ຮູບຈະຕຸລັດ6ຮູບລຽນກັນເທື່ອລະຄົນ(ຄູຍ້ອງຍໍແລະຊົມເຊີຍເດັກ).<br>- ສາວຄູໃຫ້ເດັກອາມາສະໝັກອອກມາບອກຮູບເລຂາຄະນິດຈະຕຸລັດແລະຕໍ່ຮູບຈະຕຸລັດ6ຮູບລຽນກັນ 1-3 ຄົນ. | ຕົວເດັກແລະຮູບຂະຕຸລັດ | ສັງກດການບອກຮູບເລຂາຄະນິດຈະຕຸລັດແລະຕໍ່ຮູບຈະຕຸລັດ6ຮູບ |

| | | | | |
|---|---|---|---|---|
| ຈະຕຸລັດແລະ ຕໍ່ຮູບຂະຕູລັ6 ຮູບລຽນກັນ ນຳສາວຄູ ໄດ້ | | - ຄູຕິດຕາມຊ່ວຍເຫຼືອເດັກຜູ້ທີ່ເຮັດບໍ່ທັນໄດ້ດີ ( ຍ້ອງຍໍຊົມເຊີຍເດັກ )<br>**ຂັ້ນສະຫຼຸບບົດຮຽນ**<br>- ມື້ນີ້ສາວຄູພາພວກຫຼານຮຽນຫຍັງ ( ໃຫ້ເດັກຕອບ )<br>- ສາວຄູໃຫ້ເດັກອອກມາບອກຮູບເລຂາຄະນິດຈະຕຸລັດ ແລະ ຕໍ່ຮູບຈະຕຸລັດ6ຮູບລຽນກັນຄືນອີກ.<br>• **ສຶກສາອົບຮົມເດັກ**<br>- ພວກຫຼານກັບບ້ານຕ້ອງເປັນເດັກຄຳຮູ້ເຊື່ອຟັງພໍ່ແມ່ແລະໝັ່ນຮຽນຕໍ່ຮູບຈະຕຸລັດອີກເດີ. | | ລຽນກັນຂອງເດັກແຕ່ລະຄົນ. |

**ປະເມີນຜົນການຮຽນ**

| ລຳດັບ | ຫົວຂໍ້ການປະເມີນ | ດີ/ຄົນ | ປານກາງ/ຄົນ | ປັບປຸງ/ຄົນ |
|---|---|---|---|---|
| 1 | -ສັງກດການບອກຮູບເລຂາຄະນິດຈະຕຸລັດແລະຕໍ່ຮູບຈະຕຸລັດ6ຮູບລຽນກັນຂອງເດັກແຕ່ລະຄົນ. | | | |

**3.2 ເຝິກສອນຕົວຈິງໃນຊັ້ນອະນຸບານ**

ບົດສອນ

- ໜ່ວຍ: ສິ່ງແວດລ້ອມອ້ອມຕົວເຮົາ ອາທິດທີ່ 1: ມື້ທີ່1
- ກິດຈະກຳວົງມົນ ເວລາ 15 - 20 ນາທີ
- ຫົວຂໍ້: ການສອນຄະນິດສາດ ຂັ້ນອະນຸບານ 1

| ຈຸດປະສົງ | ເນື້ອໃນ | ກິດຈະກຳ | ອຸປະກອນ | ປະເມີນ |
|---|---|---|---|---|
| ເພື່ອໃຫ້ເດັກສາມາດ ນັບເລກປາກເປົ່າແຕ່ 1-10ໄດ້ | ການນັບເລກປາກ ເປົ່າແຕ່ 1-10 | **+ ຂັ້ນນຳເຂົ້າສູ່ບົດຮຽນ**<br>- ຄູຈັດເດັກເຂົ້າສູ່ລະບຽບ<br>- ພາເດັກສົນທະນາກ່ຽວກັບພຶດຫຼື ຜັກທີ່ເດັກເຄີຍກິນ<br>**+ ຂັ້ນດຳເນີນການສອນ**<br>- ຄູສະເໜີໃຫ້ເດັກຮູ້ກ່ອນວ່າມື້ນີ້ ສາວຄູຈະພາພວກຫຼານຮຽນກ່ຽວ ກັບການນັບເລກປາກເປົ່າແຕ່ 1 - 10<br>- ສາວຄູນັບ ນັບເລກປາກເປົ່າແຕ່ 1-10ໃຫ້ເດັກຟັງກ່ອນ<br>- ສາວຄູໃຫ້ເດັກນັບເລກປາກເປົ່າ ຕາມຫຼັງຄູ1-2 ເທື່ອ<br>- ສາວຄູໃຫ້ເດັກອາມາສະໝັ ກອອກມານັບປາກເປົ່າໃຫ້ໝູ່ຟັງ 1- 3 ຄົນ<br>- ຄູຕິດຕາມຊ່ວຍເຫຼືອເດັກຜູ້ທີ່ເຮັດ ບໍ່ທັນໄດ້ດີ ( ຍ້ອງຍໍຊົມເຊີຍເດັກ )<br>**+ ຂັ້ນສະຫຼຸບບົດຮຽນ**<br>- ມື້ນີ້ສາວຄູພາພວກຫຼານຮຽນ ຫຍັງ ( ໃຫ້ເດັກຕອບ )<br>- ສາວຄູໃຫ້ເດັກອອກມານັບປາກ ເປົ່າແຕ່ 1-7 ຄືນອີກ.<br>● **ສຶກສາອົບຮົມເດັກ**<br>- ພວກຫຼານເວລາກິນເຂົ້າຄວນກິນ ຜັກ ແລະໝາກໄມ້ທຸກມື້ເດີ ຈຶ່ງເຮັດ ໃຫ້ຮ່າງກາຍເຮົາແຂງແຮງ ແລະ ຖ່າຍສະດວກດີ. | ຕົວເດັກ | ສັງເກດການ ນັບປາກເປົ່າ ຂອງເດັກ ແຕ່ລະຄົນ |

**ປະເມີນຜົນການການຮຽນ**

| ລ/ດ | ຫົວຂໍ້ສັງເກດ | ດີ/ຄົນ | ກາງ/ຄົນ | ປັບປຸງ/ຄົນ/ຊື່ |
|---|---|---|---|---|
| 1 | ສັງເກດໃນການບອກເລກແລະນັບປາກເປົ່າແຕ່1-10 | | | |

# ບົດສອນ

- ໜ່ວຍ: ສິ່ງແວດລ້ອມອ້ອມຕົວເຮົາ　　　　　　　　　ອາທິດທີ່ 2: ມື້ທີ່4
- ກິດຈະກຳວົງມົນ　　　　　　　　　　　　　　　　ເວລາ 15 - 20 ນາທີ
- ຫົວຂໍ້: ການສອນຄະນິດສາດ
- ຂັ້ນອະນຸບານ 1

| ຈຸດປະສົງ | ເນື້ອໃນ | ກິດຈະກຳ | ອຸປະກອນ | ປະເມີນ |
|---|---|---|---|---|
| | | **ຂັ້ນນຳເຂົ້າສູ່ບົດຮຽນ**<br>- ຄູຈັດເດັກເຂົ້າສູ່ລະບຽບ<br>- ພາເດັກສ້າງບັນຍາກາດ ເພງ ຈັບກະປູ ປະກອບທ່າທາງ<br>**ຂັ້ນດຳເນີນການສອນ**<br>- ຄູສະເໜີໃຫ້ເດັກຮູ້ກ່ອນວ່າມື້ນີ້ ສາວຄູຈະພາພວກຫຼານຮຽນກ່ຽວ ກັບຕົວເລກ3 | | |
| ເພື່ອໃຫ້ເດັກ ສາມາດ ບອກຕົວ ເລກ 3 ໄດ້ | ການບອກຕົວ ເລກ 3 | - ຄູເອົາບັດຕົວເລກ 3 ອອກມາ ແລ້ວຍົກຂຶ້ນໃຫ້ເດັກສັງເກດເບິ່ງ, ຈາກນັ້ນຄູຖາມເດັກວ່ານີ້ແມ່ນຕົວ ເລກຫຍັງ?<br>( ໃຫ້ເດັກຕອບ )<br>- ສາວຄູຈັບບັດເລກຂຶ້ນແລ້ວໃຫ້ ເດັກແຕ່ລະຄົນເວົ້າຕົວເລກ 3<br>- ສາວຄູໃຫ້ເດັກອາມາສະໝັ ກອອກມາເວົ້າຕົວເລກ 1-2 ຄົນ ( ໂດຍແມ່ນຄູເປັນຜູ້ຕິດຕາມ ຊ່ວຍເຫຼືອ ) | ບັດຕົວເລກ3 | ສັງເກດການ ບອກຕົວ ເລກຂອງເດັກ ແຕ່ລະຄົນ |
| ເພື່ອໃຫ້ເດັກ ສາມາດ ບອກຄ່າ ຈຳນວນແຕ່ 1-3 ໄດ້ | ການບອກຄ່າຈຳ ນວນແຕ່ 1-3 | - ສາວຄູເອົາກ້ອນຫີນມາວາງໄວ້ 1 ກ້ອນແລ້ວແທນໃຫ້ເລກ 1, ກ້ອນ ຫີນ2 ກ້ອນແທນໃຫ້ເລກ2, ແລະ ກ້ອນຫີນ 3 ກ້ອນແທນໃຫ້ເລກ3 ໃຫ້ເດັກກ່ອນ<br>- ຄູໃຫ້ເດັກອາສາສະໝັກອອກມາ ບອກຄ່າຈຳນວນກ້ອນຫີນໃສ່ກັບ ຕົວເລກ 1-3 ຕາມລຳດັບທີ່ຄູກຳ ກົດໃຫ້<br>- ຄູຕິດຕາມຊ່ວຍເຫຼືອເດັກ ( ຍ້ອງຍໍຊົມເຊີຍເດັກ ) | ບັດເລກ 1-3 ແລະ ກ້ອນຫີນ | ສັງເກດການ ບອກຄ່າຈຳ ນວນຂອງເດັກ ແຕ່ລະຄົນ |

| | | ขั้นสะหຼຸບບົດຮຽນ<br>- มื้นี้สาวถูเອົາໂຕເລກຫຍັງມາ ໃຫ້ພວກຫຼານເບິ່ງ ( ໃຫ້ເດັກຕອບ<br>- ສາວຄູໃຫ້ເດັກອອກມາບອກຄ່າ ຈຳນວນຄືນອີກໂດຍແມ່ນຄູເປັນຜູ້ ຈັບກ້ອນຫີນໃສ່ກັບໂຕເລກ ສະ ລັບກັນ.<br>• **ສຶກສາອົບຮົມເດັກ**<br>- ເວລາຮຽນໜັງສືໃຫ້ພວກຫຼານ ຕັ້ງໃຈຮຽນເດີໃຫ້ຟັງຄວາມສາວຄູ ເວລາຢູ່ເຮືອນໃຫ້ຟັງຄວາມພໍ່ແມ່ ແລະຮຽນໜັງສືໃຫ້ເກັ່ງເດີພວກ ຫຼານ. | | |
|---|---|---|---|---|

**ປະເມີນຜົນການການຮຽນ**

| ລ/ດ | ຫົວຂໍ້ສັງເກດ | ດີ/ຄົນ | ກາງ/ຄົນ | ປັບປຸງ/ຄົນ/ຊື່ |
|---|---|---|---|---|
| 1 | -ສັງເກດການການບອກໂຕເລກຂອງເດັກ ແຕ່ລະຄົນ<br>ສັງເກດການບອກຄ່າຈຳນວນຂອງເດັກ ແຕ່ລະຄົນ | | | |

# ບົດສອນ

ໜ່ວຍ: ສິ່ງແວດລ້ອມອ້ອມຕົວເຮົາ ອາທິດທີ 1 ມື້ທີ 4

ກິດຈະກຳວົງມົນ ຊັ້ນອະນຸບານ 2

ຫົວຂໍ້: ກະປູ,ກຸ້ງແລະຫອຍ ເວລາ 20-25 ນາທີ

| ຈຸດປະສົງ | ເນື້ອໃນ | ກິດຈະກຳການຮຽນການສອນ | ເວລາ | ອຸປະກອນ | ວັດແລະປະເມີນ |
|---|---|---|---|---|---|
| | | **I.ຂັ້ນນຳເຂົ້າສູ່ບົດຮຽນ**<br>- ຄູຈັດເດັກເຂົ້າເປັນລະບຽບ<br>- ຄູແລະເດັກເຄົາລົບເຊິ່ງກັນແລະກັນ.<br>- ຄູກວດຈຳນວນຄົນໃນຫ້ອງ.<br>- ຄູສະເໜີຊື່(ຖ້າເປັນຄູໃໝ່)<br>- ຄູພາເດັກສ້າງບັນຍາກາດດ້ວຍກາດດ້ວຍການຮ້ອງເພງ:ຢ່າຖິ້ມ.<br>+ ທວນຄືນບົດຮຽນເກົ່າ:<br>- ພວກຫຼານຊົ່ວໂມງກ່ອນຄູພາຮຽນກ່ຽວກັບຫຍັງ?<br>- ເດັກຕອບ(ຍ້ອງຍໍຊົມເຊີຍ)<br>+ ລ້ຽວເຂົ້າສູ່ບົດຮຽນໃໝ່.<br>- ພວກຫຼານເຄີຍນັບເລກບໍ່?<br>- ເດັກຕອບ. | 5’ | | |
| ເພື່ອໃຫ້ເດັກສາມາດ: ຮ້ອງເພງ. ຝຸງສັດຕາມຈັງຫວະ, ບອກປະໂຫຍດ, | ກາຮ້ອງເພງຝຸງສັດ ປະໂຫຍດ: ໃຫ້ຊີ້ນເປັນອາຫານ ແລະຫອຍບາງຊະນິດເປັນເຄື່ອງ | **II.ຂັ້ນດຳເນີນການສອນ.**<br>ຄູສະເໜີກິດຈຳກຳທີຈະ: ວົງມົນ ຫົວຂໍ້:ກະປູ,ກຸ້ງແລະຫອຍ, ໜ່ວຍ:ສິ່ງແວດລ້ອມອອ້ມຕົວເຮົາ.<br>-ຄູສະເໜີບົດ:ຝູງສັດ,ຄູຮ້ອງເພງໃຫ້ເດັກຟັງກ່ອນ1-2ເທື່ອຫຼັງຈາກນັ້ນໃຫ້ເດັກຮ້ອງເພງຕາມຫຼາຍທັງຄູ່1-2ເທື່ອ<br>-ຄູໃຫ້ເດັກຮ້ອງເພງຝຸງສັດພ້ອມກັນໝົດຫ້ອງ.<br>-ຄູຖາມເດັກວ່າໃນບົດເພງນີ້ມີສັດຫຍັງແດ່?<br>- ພວກຫຼານເຄີຍເຫັນບໍ່? | 15’ | ຮູບພາບ ປາ, ຫອຍ, ກຸ້ງ<br>-ບັດຄຳສັບຕົວເລກ1-10 | -ສັງເກດການຮ້ອງເພງຕາມຈັງຫວະຄວາມຖືກຕ້ອງໃນການບອກປະໂຫຍດ, ການປົກປັກ |

| | | | | | |
|---|---|---|---|---|---|
| ການປົກປັກ ຮັກສາ ກະປູ, ກຸ້ງແລະ ຫອຍ<br><br><br><br><br><br><br><br><br><br><br><br><br><br><br>-ເພື່ອໃຫ້ເດັກ ສາມາດບອກ ຕົວເລກ ແລະ ນັບປາກເປົ່າ 1-10ໄດ້ ຖືກຕ້ອງ | ປະດັບ, ການປົກ ປັກຮັກສາ: ໃຫ້ຢູ່ໃນ ແມ່ນ້ຳ ເປືອກ,ໃຫ້ ອາຫານມີ ຫຍ້າ ຫຼືອາຫານ ,ນ້ຳແລະບໍ່ ໃຫ້ອາຫານ ຫຼາຍເກີນ ໄປ<br><br>-ບອກຕົວ ເລກແລະ ນັບປາກ ເປົ່າແຕ່1-10 | -ມີຄຸນປະໂຫຍດແນວໃດ?<br>-ເຮົາຈະປົກປັກຮັກສາແນວໃດ ແດ?ຕໍ່ສັດດັ່ງກ່າວ?<br>-ເດັກຕອບ(ຍ້ອງຍໍຊົມເຊີຍ)<br>- ຄູສະຫຼຸບ: ປະໂຫຍດ:ໃຫ້ຊີ້ນເປັນ ອາຫານແລະ ຫອຍບາງຊະນິດເປັນ ເຄື່ອງປະດັບ.<br>ການປົກປັກຮັກສາ: ໃຫ້ຢູ່ໃນ ແມ່ນ້ຳເປືອກ,ໃຫ້ອາຫານມີຫຍ້າ,ແ ໜ,ເຫົາ,ຫຼືອາຫານ,ນ້ຳແລະບໍ່ໃຫ້ ອາຫານຫຼາຍເກີນໄປ.<br><br>- ຄູຍົກບັດຄຳສັບຕົວເລກແຕ່ 1-10 ໃຫ້ເດັກແຕ່ລະຄົນເບິ່ງກ່ອນ ແລ້ວຖາມເດັກວ່ານີ້ແມ່ນຕົວເລກ ຍັງ?<br>- ເດັກນ້ອຍຕອບ(ຍ້ອງຍໍຊົມເຊີຍ ເດັກ).<br>ຄູຍົກບັດຕົວເລກ1-10ໃຫ້ເດັກ ສັງເກດເບິ່ງພ້ອມບອກຕົວເລກໃຫ້ ເດັກແນ1-2ເທື່ອ.<br>- ຄູໃຫ້ເດັກທີ່ມີຄວາມສາມາດ ອອກມາບອກເວວເບກ1-5 ປະມານ2-3ຄົນ<br>- ຍ້ອງຍໍຊົມເຊີຍ<br>- ຄູນັບປາກເປົ່າແຕ່1-10ໃຫ້ເດັກ ມັງກອນ1-2ເທື່ອ.ຫຼັງຈາກນັ້ນໃຫ້ ເດັກນັບຕາມຫູທັງຄູ່.<br>- ຄູໃຫ້ເດັກນັບປາກເປົ່າແຕ່1-10 ພ້ອມກັນໝົດຫ້ອງ1-2ເທື່ອ<br>-ຍ້ອງຍໍຊົມເຊີຍເດັກ<br>- ຄູຕິດຕາມແລະຊ່ວຍເຫຼືອເດັກຜູ້ ທີ່ບໍ່ທັນໄດ້.<br>**III. ຂັ້ນສະຫຼຸບ** | 5’ | | ຮັກສາ ກະປູ,ກຸ້ງ ແລະຫອຍ<br><br><br><br><br><br><br><br><br><br><br><br><br><br><br><br>-ສັງເກດການ ບອກຕົວເລກແຕ່ 1-10ຂອງເດັກ ແຕ່ລະຄົນ. |

| | | | | | |
|---|---|---|---|---|---|
| | | - ຄູຖາມເດັກຄືນວ່າ:ຄູພາພວກຫຼານຮຽນກ່ຽວກັບຍັງ?<br>- ເດັກຕອບ<br>- ຍ້ອງຍໍຊົມເຊີຍ<br>- ຄູໃຫ້ເດັກນັບຄືນຕົວຄັກແນ່1-10ພ້ອມກັນໝົດຫ້ອງ.<br>- ສຶກສາອົບຮົມ: ພວກຫຼານໃນເວລາຮຽນໃຫ້ຕັ້ງໃຈຮຽນ,ຟັງຄວາມຄູ,ເວລານັບເລກໃຫ້ຕັ້ງໃຈແລະນັບໃຫ້ຖືກຕ້ອງ,ບໍ່ວິນແຊວ,ບໍ່ຢອກກັນ,ເວລາເມື່ອເຮືອນຕ້ອງຟັງຄວາມພໍ່ແມ່<br>- ຄູມອບວຽກບ້ານໃຫ້ພວກຂຽນຕົວເລກ1-5<br>- ກິດຈະກຳເບົາ:ຄູພາເດັກເຮັດທ່າຄືລົມພັດ.<br>- ໃຫ້ເດັກພັກຜ່ອ | | | |

## ປະເມີນຜົນການການຮຽນ

| ລ/ດ | ຫົວຂໍ້ສັງເກດ | ດີ/ຄົນ | ກາງ/ຄົນ | ປັບປຸງ/ຄົນ/ຊື່ |
|---|---|---|---|---|
| 1 | -ສັງເກດການຮ້ອງເພງຕາມຈັງຫວະຄວາມຖືກຕ້ອງໃນການບອກປະໂຫຍດ,ການປົກປັກຮັກສາ ກະປູ,ກຸ້ງແລະຫອຍ | | | |
| 2 | ສັງເກດໃນການບອກເລກແລະນັບປາກເປົ່າແຕ່ 1-10 | | | |

# ບົດສອນ

ໜ່ວຍ:ໂຮງຮຽນຂອງຂ້ອຍ

ກິດຈະກຳ ວົງມົນ

ຫົວຂໍ້: ຫ້ອງອາຫານ ອາທິດທີ 3 ມື້ທີ 4

ຊັ້ນ ອະນຸບານ3 ເວລາ 30-35 ນາທີ

ຜູ້ແຕ່ງ.......................... ວັນທີສອນ.....................

| ຈຸດປະສົງ | ເນື້ອໃນ | ກິດຈະກຳການຮຽນ-ການສອນ | ເວລາ | ອຸປະກອນ | ປະເມີນ |
|---|---|---|---|---|---|
| | | +ຂັ້ນນຳເຂົ້າສູ່ບົດຮຽນ<br>-ຄູຈັດເດັກນັ່ງເປັນລະບຽບ<br>-ຄູກວດກາຈຳນວນພົນ<br>-ຄູພາເດັກສ້າງບັນຍາກາດຮ້ອງເພງ: ໂຮງຮຽນ<br>-ຄູທວນຄືນບົດຮຽນເກົ່າ..........<br>-ລ້ຽວເຂົ້າສູ່ບົດຮຽນໃໝ່.......... | 5 | | |
| | | +ຂັ້ນດຳເນີນການສອນ<br>-ຄູສະເໜີກິດຈະກຳ: ມື້ນີ້ຄູຈະພາພວກ ການຮຽນກິດຈະກຳວົງມົນ ຫົວຂໍ້: ຫ້ອງອາຫານ | | | |
| -ເພື່ອໃຫ້ເດັກນ້ອຍສາມາດບອກເຄື່ອງໃຊ້,ຄຸນປະໂຫຍດ, ການປະຕິບັດລະບຽບ | -ເຄື່ອງໃຊ້ໃນຫ້ອງອາຫານ:ໂຕະ,ຕັ່ງ, ຖ້ວຍ,ບ່ວງ,ຈອກ, ຕຸກນ້ຳດື່ມ ແລະ ອື່ນໆ.<br>-ຄຸນປະໂຫຍດຂອງຫ້ອງອາຫານ:ເປັນບ່ອນສຳລັບເດັກກິນເຂົ້າຮ່ວມກັນ | - ຄູສົນທະນາຖາມເດັກວ່າ: ພວກຫຼານເຄີຍເຫັນຫຍັງແນ່ຢູ່ໃນຫ້ອງອາຫານ?<br>(ເດັກຕອບ)<br>ຄູເວົ້າຄືນກ່ຽວກັບໃນຫ້ອງອາຫານ<br>+ ເຄື່ອງໃຊ້ໃນຫ້ອງອາຫານມີຄຸນປະໂຫຍດຫຍັງແດ່ ?<br>-ຄູຖາມເດັກວ່າກ່ອນຈະເຂົ້າຫ້ອງ | 25 | ໂຕະ,ຕັ່ງ, ຖ້ວຍ,ບ່ວງ, ຈອກ, ຕຸກນ້ຳດື່ມ ແລະ | -ສັງເກດຄວາມຖືກຕ້ອງໃນການບອກເຄື່ອງ,ຄຸນປະໂຫຍດ, ການປະຕິບັດລະບຽບ |

| | | | |
|---|---|---|---|
| ແລະ ການ ບົວລະບັດ ຮັກສາຫ້ອງ ອາຫານ ໄດ້ ຖືກຕ້ອງ. | -ລະບຽບໃນຫ້ອງ ອາຫານ:ເຂົ້າຫ້ອງ ອາຫານໃຫ້ຖືກ ຕາມເວລາ;ນັ່ງໃຫ້ ຖືກບ່ອນ;ກິນ ອາຫານບໍ່ໃຫ້ມີສຽງ ດັງ;ບໍ່ຍາດກິນຂອງ ໝູ,ບໍ່ວິນແຊວ,ບໍ່ ຢອກໝູ,ຖິ້ມຂີ້ ເຫຍື້ອ ແລະເສດ ອາຫານໃຫ້ຖືກ ບ່ອນ.<br>-ການບົວລະບັດ ຮັກສາ:ລ້າງຖ້ວຍ, ບ່ວງ,ຈອກໃຫ້ ສະອາດ,ເກັບມ້ຽນ ໃຫ້ຖືກບ່ອນ,ເຊັດຖູ ໂຕະ,ຕັ່ງໃຫ້ສະອາດ ແລະຖິ້ມຂີ້ເຫຍື້ອ ໃຫ້ຖືກບ່ອນ.<br>-ຄຳສັບ:ໂຕະ,ຕັ່ງ, ຖ້ວຍ,ບ່ວງ,ຈານ, ຈອກ,ຊາມ,ປອດ ໄພ,ອາຫານ,ມີດ ງຽບ. | ອາຫານພວກຫຼານຄວນປະຕິບັດຕົນ ແນວໃດ ? ແລະ ຫຼັງຈາກພວກຫຼານ ກິນອາຫານແລ້ວພວກຫຼານຄວນ ເຮັດຫຍັງແນ່ ແລະ ຄວນຮັກສາ ບົວລະບັດຮັກສາຫ້ອງອາຫານ ແນວໃດເພື່ອໃຫ້ສະອາດງາມຕາ<br>- ເດັກຕອບ<br>ຍ້ອງຍໍຊົມເຊີຍ<br>ຄູເວົ້າຄືນກ່ຽວກັບຄຸນປະໂຫຍດ ເຄື່ອງໃຊ້ໃນຫ້ອງອາຫານ | ແລະ ການ ບົວລະບັດ ຮັກສາຫ້ອງ ອາຫານ |
| -ເພື່ອໃຫ້ ເດັກນ້ອຍ ສາມາດ ເລົ່າ ຄຳຄ່ອງ,ເວົ້າ | -ປະໂຫຍກ:ຫ້ອງ ອາຫານມີເຄື່ອງໃຊ້ ຫຼາຍຢ່າງ,ຫ້ອງ ອາຫານມີຖ້ວຍບ່ວງ ຈອກຊາມ,ພວກ ຫຼານນັ່ງເປັນ ລະບຽບ, ພວກ ຫຼານເກັບມ້ຽນຈານ | - ຄູເລົ່າຄຳຄ່ອງໃຫ້ເດັກຟັງ 1-3 ເທື່ອ<br>-ຄູພາເດັກເລົ່າຄຳຄ່ອງພ້ອມກັນໝົດ ຫ້ອງ | -ສັງເກດ ຄວາມຊັດ ເຈນໃນການ ເລົ່າຄຳຄ່ອງ |

| | | | | |
|---|---|---|---|---|
| ຄຳສັບ ແລະ ປະໂຫຍກ ຕາມເນື້ອໃນ ບົດຄຳຄ່ອງ ໄດ້ຊັດເຈນ. | ຫຼັງຈາກກິນແລ້ວ. | -ຄູໃຫ້ເດັກຜູ້ມີຄວາມສາມາດອອກ ມາເລົ່າໃຫ້ໝູ່ຟັງ 1-2 ຄົນ<br>-ຄູຍົກບັດຄຳສັບ ແລະ ພາເດັກ ອ່ານຄຳສັບ: ໂຕະ,ຕັ່ງ,ຖ້ວຍ,ບ່ວງ, ຈອກ,ຊາມ ຄູພາເດັກອ່ານ 1-3 ເທື່ອ | | ,ຄຳສັບ ແລະ ປະໂຫຍກ ຕາມຄຳຄ່ອງ |
| -ເພື່ອໃຫ້ ເດັກນ້ອຍ ສາມາດ ນັບ ຮູບພາບ ເຄື່ອງໃຊ້ໃນ ຫ້ອງອາຫານ ແຕ່1-5 ໄດ້ ຢ່າງຖືກຕ້ອງ | .ການນັບຮູບພາບ ເຄື່ອງໃຊ້ໃນຫ້ອງ ອາຫານແຕ່1-5. | -ຄູພາເດັກອ່ານເປັນປະໂຫຍກ: ຫ້ອງ ອາຫານສະອາດ,ນັ່ງເປັນລະບຽບ,ກິນ ອາຫານ ຄູອ່ານໃຫ້ເດັກຟັງ 1-3 ເທື່ອ<br>-ຄູໃຫ້ເດັກອ່ານຕາມຫຼັງສາວຄູ2-3 ແລະ ໃຫ້ເດັກອ່ານ1-2 ຄັ້ງ<br>-ຄູໃຫ້ເດັກຜູ້ມີຄວາມສາມາດອອກ ມາອ່ານໃຫ້ໝູ່ໃນຫ້ອງຟັງ2-3 ຄົນ<br>ໃຫ້ເດັກນ້ອຍສັງເກດຮູບພາບ:ຖ້ວຍ ໂຕະ,ຕັ່ງ,ຖ້ວຍ,ບ່ວງ,ຈອກ,ຕຸກນ້ຳ ດື່ມ,ຊາມ,ຝອຍລ້າງຖ້ວຍ,ກະຕ່າຂີ້ ເຫຍື້ອ. ແລ້ວຖາມວ່າອັນນີ້ແມ່ນ ຫຍັງ?<br>ຄູພາເດັກນັບວັດຖຸໃນຫ້ອງອາຫານ ແຕ່ 1-5<br>ໃຫ້ເດັກນັບຕາມຫຼັງຄູ 1-2ເທື່ອ<br>ໃຫ້ຜູ້ທີ່ມີຄວາມສາມາດອອກມານັບ ໃຫ້ໝູ່ເບິ່ງ 1-3 ຄົນ<br>ຍ້ອງຍໍຊົມເຊີຍ<br>ຄູພາເດັກປະຕິບັດຕົວຈິງກ່ຽວກັບ ການເກັບມ້ຽນເຄື່ອງໃຊ້ໃນຫ້ອງ ອາຫານ. | -ບົດຄຳ ຄ່ອງ: ຫ້ອງ ອາຫານ ສະອາດ<br>-ບັດຄຳສັບ<br>-ປະໂຫຍກ<br>-ໂຕະ,ຕັ່ງ, ບ່ວງ,ຈອກ, ຕຸກນ້ຳດື່ມ, ຊາມ,ນ້ຳ, ຝອຍລ້າງ ຖ້ວຍ, ກະຕ່າຂີ້ ເຫຍື້ອ<br>-ຮູບພາບ: ຖ້ວຍ,ບ່ວງ 1-5. | -ສັງເກດ ຄວາມ ຖືກຕ້ອງໃນ ການນັບຈຳ ນວນຮູບ ພາບແຕ່1-5 |
| -ເພື່ອໃຫ້ | | | | |

| | | | |
|---|---|---|---|
| ເດັກນ້ອຍ ສາມາດ ປະຕິບັດຕົວ ຈິງໃນການ ເກັບມ້ຽນ ຖ້ວຍ ແລະ ບ່ວງ. | ໃຫ້ເຮັດຕົວຈິງພ້ອງກັນໝົດຫ້ອງ ຍ້ອງຍໍຊົມເລີຍ<br>-ຄູໃຫ້ເດັກນ້ອຍປະຕິບັດຕົວຈິງ ການບົວລະບັດຮັກສາຫ້ອງອາຫານ.<br>ຄູຕິດຕາມແນະນຳເດັກຜູ້ທີ່ປະຕິບັດບໍ່ທັນໄດ້<br>+ຂັ້ນສະຫຼູບ<br>-ຄູຖາມເດັກຄືນສາວຄູພາພວກຫຼານ ຮຽນກ່ຽວກັບຫຍັງ?<br>-ໃຫ້ເດັກນ້ອຍຜູ້ທີມີຄວາມສາມາດ ຕອບ2-3ຄົນ.<br>-ຄູຍ້ອງຍໍຊົມເຊີຍ.<br>+ສຶກສາອົບຮົມ:<br>-ຄູສຶກສາອົບຮົມເດັກນ້ອຍກ່ຽວກັບ ລະບຽບໃນການເຂົ້າຫ້ອງອາຫານ ແລະ ການບົວລະບັດຮັກສາເຄື່ອງໃຊ້ ໃນຫ້ອງອາຫານ. | 5 | -ສັງເກດ ການປະຕິບັດ ຕົວຈິງໃນ ການເກັບ ມ້ຽນຖ້ວຍ ແລະ ບ່ວງ |

**ປະເມີນຜົນການການຮຽນ**

| ລຳດັບ | ຫົວຂໍ້ການປະເມີນ | ລະດັບດີ/ຄົບ | ລະດັບປານກາງ | ລະດັບປັບປຸງ |
|---|---|---|---|---|
| 1 | -ສັງເກດການບອກຊື່<br>ສັງເກດຄວາມຖືກຕ້ອງໃນການບອກເຄື່ອງ,ຄຸນປະໂຫຍດ,ການປະຕິບັດລະບຽບ ແລະ ການບົວລະບັດຮັກສາຫ້ອງອາຫານ | | | |
| 2 | -ສັງເກດຄວາມຊັດເຈນໃນການເລົ່າຄຳຄ່ອງ,ຄຳສັບ ແລະ ປະໂຫຍກຕາມຄຳຄ່ອງ | | | |
| 3 | -ສັງເກດຄວາມຖືກຕ້ອງໃນການນັບຈຳນວນຮູບພາບແຕ່1-5 | | | |

4 -ສັງເກດການປະຕິບັດຕົວຈິງໃນການເກັບມ້ຽນ
ຖ້ວຍ ແລະ ບ່ວງ

**ໃຈຄວາມ.** ການນັບມີສ່ວນຮ່ວມຫຼາຍກວ່າການເວົ້າຊື່ຂອງຈຳນວນໃຫ້ຖືກຕາມລຳດັບເທົ່ານັ້ນ. ການນັບແມ່ນກ່ຽວພັນກັບການຮູ້ວ່າບັນດາຄຳສັບທີ່ພົວພັນກັບຈຳນວນສະເພາະຂອງລາຍການໃດນຶ່ງ.

**ຄຳຖາມຄົ້ນຄ້ວາ**

1. ການນັບໝາຍເຖິງຫຍັງ ?
2. ການແຕ່ງບົດສອນ ແລະ ຜະລິດອຸປະກອນ ມີຄວາມສຳຄັນແນວໃດ ?
3. ຈົ່ງອະທິບາຍຄວາມໝາຍຄວາມສຳຄັນຂອງການນັບຕົວເລກ ?
4. **ວຽກບ້ານ:**

ໃຫ້ນັກຮຽນແຕ່ລະຄົນແຕ່ງບົດສອນໃນຊັ້ນອະນຸບານ ( ໃຫ້ແຕ່ງກ່ຽວກັບການນັບ ), ພ້ອມທັງຜະລິດສື່ການສອນທີ່ຕົນຈະສອນ

# ບົດທີ 7

# ວິທີສອນກ່ຽວກັບຕໍາແໜ່ງ

ເວລາ 10 ຊົ່ວໂມງ

- **ຈຸດປະສົງໃຫ້ນັກຮຽນຄູສາມາດ:**
  1. ອະທິບາຍຄວາມໝາຍຂອງຕໍາແໜ່ງໄດ້
  2. ເຂົ້າໃຈກິດຈະກໍາການຮຽນ-ການສອນ ແລະ ວິທີສອນກ່ຽວກັບຕໍາແໜ່ງໄດ້
  3. ແຕ່ງບົດສອນ. ຜະລິດສື່ການສອນ ແລະສອນຕົວຈິງໄດ້.

## 1. ຄວາມໝາຍຂອງກ່ຽວກັບຕໍ່າແໜ່ງ

ຕໍາແໜ່ງໝາຍເຖິງການບອກທີ່ຕັ້ງຂອງສິ່ງຂອງຕ່າງໆທີ່ແນ່ນອນ ແລະ ຊັດເຈນເຊັ່ນ ຕໍ່າ-ສູງ, ເທິງ-ລຸ່ມ, ໜ້າ-ຫຼັງ, ໃນ-ນອກ, ຊ້າຍ-ຂວາ, ໃກ້-ໄກ, ບ່ອນນັ້ນ-ບ່ອນນີ້.

**ຕົວຢ່າງ** 1 : ຮູບຄົນຕໍ່າ ແລະ ຜູ້ສູງ





**ຕົວຢ່າງ 2:** ເຕົ້າດອກໄມ້ຢູ່ເທິງໂຕະ ແລະ ເດັກນ້ອຍຢູ່ລຸ່ມໂຕະ ຫຼື ກ້ອງໂຕະ





ຕົວຢ່າງ 3 : ໃກ້ - ໄກ ( ສົມທຽບລະຫວ່າງຄວາຍ ແລະ ເດືອນໃສ່ຄົນ )









ຕົວຢ່າງ 4 : ຊ້າຍ-ຂວາ



ຕົວຢ່າງ 5 : ໃນ - ນອກ





ຕົວຢ່າງ 6 : ທາງໜ້າ - ທາງຫຼັງ



## 2. ກິດຈະກຳການຮຽນ-ການສອນ ແລະ ວິທີສອນກ່ຽວກັບຕຳແໜ່ງ

### 2.1 ວິທີສອນກ່ຽວກັບຳແໜ່ງຊ້າຍ- ຂວາ

- ຄູໃຫ້ນັກຮຽນ 2 ຄົນອອກມາຢືນຢູ່ຕໍ່ໜ້າ
- ແລ້ວໃຫ້ຜູ້ທີ 1 ວາງແຂກເບື້ອງຂວາອອກ ແລະ ຜູ້ທີ 2 ວາງແຂນເບື້ອງຊ້າຍອອກ
- ຈາກນັ້ນຖາມນັກຮຽນໃນຫ້ອງວ່າຜູ້ທີ 1 ວາງແຂນເບື້ອງໃດອອກ, ຜູ້ທີສອເດ ວາງແຂນໃດອອກ
- ນອກຈາກນີ້ຄູໃຫ້ນັກຮຽນສອງຄົນຍົກມືສະດັບກັນ

  ຕົວຢ່າງ:





**2.2 ວິທີສອນກ່ຽວກັບໜ້າ- ຫຼັງ**

- ຄູເອົານັກຮຽນອອກມາຢືນລຽນແຖວກັນເປັນແຖວຍາວ
- ແລ້ວຖາມນັກຮຽນທັງໝົດວ່າໃຜຢືນຢູ່ທາງໜ້າ ແລະ ຢືນຢູ່ທາງຫຼັງ
- ຫຼັງຈາກນັ້ນໃຫ້ນັກຮຽນບອກຕໍາຂອງແໜ່ງທ້າວກໍຢູ່ທາງໜ້າ
- ຫຼັງຈາກນັ້ນໃຫ້ນັກຮຽນບອກຕໍາຂອງແໜ່ງທ້າວຂໍຢູ່ທາງຫຼັງ
- ຫຼັງຈາກນັ້ນໃຫ້ນັກຮຽນບອກຕໍາຂອງແໜ່ງນາຍຄູຢູ່ທາງນອກ



ນອກຈາກນັ້ນຄູສາວໃຫ້ນັກຮຽນສັງເກດສິ່ງຂອງຫຼືໝູ່ເພື່ອນທີ່ຢູ່ອ້ອມຕົວ ແລະ ອື່ນໆ

**2.3 ວິທີສອນກ່ຽວກັບເທິງ-ລຸ່ມ**

ວາງຊິງເທິງໂຕະ ແລະ ໝອກລຸ່ມໂຕະ

ໃຫ້ນັກຮຽນບອກຕໍາແໜ່ງ ຊິງຢູ່ເທິງໂຕະ ແລະ ບອກໝອກທີ່ວາງຢູ່ລຸ່ມໂຕະ

ຕົວຢ່າງ1:



ຕົວຢ່າງ2:  ຊີງຢູ່ກ້ອງ(ລຸ່ມ)ໂຕະ






**2.4 ວິທີສອນກ່ຽວກັບນອກ-ໃນ**

ຄູວາງບິກ)ໄວ້ໃນກັບ ແລະ ວາງ ແລ້ວວາງສໍດຳໄວນອກກັບແລ້ວ

ບອກວ່າ ບິກຢູ່ໃນກັບ ແລະ ບອກສໍດຳຢູ່ນອກ ກັບ

ຕົວຢ່າງ





2.5 ວິທີສອນກ່ຽວໃກ-ໄກ

ຄູວາງ ຮູບຍົນ 1 ລຳໄວທາງໄກ

- ວາງ ຮູບລົດ ແລະ ຮູບໄກ  ວາງຮູບໄກ່ໄວ້ໃກ້ ແລະ ວາງຮູບຍົນໄວ້ໄກ
- ແລ້ວຖາມນັກຮຽນວ່າລະຮູບໄກ່ກັບຮູບຍົນອັນໃດຢູ່ໃກ້ລົດກ່ວາກັນ
- ບອກວັດຖຸທີ່ຢູ່ໃກ້ ແລະ ຢູ່ໄກ

ຕົວຢ່າງ








ຮູບໄກ່ຢູ່ໃກ້ຮູບລົດ ຮູບຍົນຢູ່ໄກຮູບລົດ

### 2.6 ວິທີສອນກ່ຽວກັບພຸ້ນ-ພີ້

- ຄູອະທິບາຍຄວາມໝາຍພຸ້ນ-ພີ້ໃຫ້ເດັກຟັງກ່ອນເຊັ່ນວ່າ ຄຳວ່າພຸ້ນໝາຍຄວາມວ່າຢູ່ໄກຈາກຕົວເຮົາ ຕົວຢ່າງ ໝາກແອັບເປີ້ນຢູ່ພຸ້ນ, ຄຳວ່າພີ້ແມ່ນແມ່ນໝາຍຄວາມວ່າຢູ່ໃກ້ໆຕົວເຮົາ ຕົວຢ່າງ: ໝາກມ່ວງຢູ່ພີ້.



## 3. ການແຕ່ງບົດສອນ ແລະ ຜະລິດອຸປະກອນ

ບົດສອນແມ່ນບົດທີ່ຄູໃຊ້ສອນປະຈຳວັນມີຂໍ້ກຳນົດໃນຈຸດປະສົງ, ເນື້ອໃນຕົ້ນຕໍ, ສື່ການຮຽນ-ການສອນ. ກິດຈະກຳການຮຽນ-ການສອນ ແລະ ການວັດປະເມີນຜົນເຊິ່ງໃນແຕ່ລະວັນມີ, ຄູສອນແຕ່ງລະໂຮງຮຽນຕ້ອງຈຳເປັນແຕ່ງບົດສອນໃຫ້ມີຄວາມແທດເໝາະກັບສະພາບຕົວຈິງ ແລະ ຈຸດພິເສດຂອງເດັກທີ່ຕົນສອນ ເປັນຕົ້ນແມ່ນການຈັດຫາ ຫຼື ກະກຽມສື່ການຮຽນ-ການສອນ ແລະ ການຕິດຕາມຊ່ວຍເຫຼືອເດັກຕາມຈຸດປະສົງ ທີ່ກຳນົດໄວ້. ນອກນັ້ນບົດສອນຍັງເປັນເອກະສານທາງການທີ່ຢັ້ງຢືນຜົນງານການສອນ.

### 3.1 ການເຝິກສອນຕົວຈິງໃນຂັ້ນລ້ຽງເດັກໃຫ່ຍ

**ບົດສອນ**

**ກິດຈະກຳ ວົງມົນ**

**ໜ່ວຍ: ນົກນ້ອຍ**

**ຫົວຂໍ້: ການປຽບທຽບວັດຖຸທີ່ໜ້ອຍກວ່າ-ຫຼາຍ**

**ລ້ຽງເດັກໃຫຍ່ ເວລາ 10-15 ນາທີ**

| ຈຸດປະສົງ | ເນື້ອໃນ | ກິດຈະກຳການຮຽນ-ການສອນ | ສື່ການຮຽນ ການສອນ | ປະເມີນ |
|---|---|---|---|---|
| -ໃຫ້ເດັກ ປຽບທຽບວັດຖຸທີ່ ໜ້ອຍ ກວ່າ-ຫຼາຍກວ່າ | -ເພງ ມ່ວນຊື່ນ ໃນວັນເດັກ<br>- ປຽບທຽບ ວັດຖຸທີ່ໜ້ອຍ ກວ່າ-ຫຼາຍກວ່າ | ☞ **ຂັ້ນນຳເຂົ້າສູ່ບົດຮຽນ**<br>-ຈັດນັກຮຽນນັ່ງເປັນຮູບວົງມົນ<br>-ຄູພາເດັກຮ້ອງເພງ ມ່ວນຊື່ນໃນວັນເດັກ ☞ **ຂັ້ນດຳເນີນການສອນ.**<br>- ມື້ນີ້ສາວຄູຈະພາພວກຫຼານມາຮຽນກ່ຽວກັບປຽບທຽບວັດຖຸທີ່ໜ້ອຍກວ່າ-ຫຼາຍກວ່າ<br>-ຄູເອົາຈີກຊໍສີແດງ,ສີຟ້າອອກມາໃຫ້ເດັກເບິ່ງ ໂດຍແບ່ງອອກເປັນ2ກຸ່ມຄື ກຸ່ມທີ 1 ຈີກຊໍສີແດງຈຳນວນ 3 ອັນ, ກຸ່ມທີ 2ຈີກຊໍຈຳນວນ 5 ອັນມາໃຫ້ເດັກປຽບທຽບ ໂດຍຄູຖາມເດັກວ່າຈີກຊໍສອງກຸ່ມນີ້ສີໃດ ໜ້ອຍກວ່າ ແລະ ສີໃດຫຼາຍກວ່າ<br>-ຄູສະຫຼັບຈີກຊໍສອງສີແລ້ວໃຫ້ເດັກອອກມາປຽບທຽບໃຫ້ໝູ່ເບິ່ງ 1- 2 ຄົນ<br>- ຄູຕິດຕາມແນະນຳຊ່ວຍເຫຼືອເດັກທີ່ເຮັດບໍ່ທັນໄດ້ດີ<br>- ຍ້ອງຍໍຊົມເຊີຍເດັກ<br>☞ **ຂັ້ນສະຫຼຸບ**<br>-ມື້ນີ້ສາວຄູພາພວກຫຼານຮຽນກ່ຽວກັບຫຍັງແດ່?<br>-ເດັກຕອບ,ຍໍຍ້ອງຊົມເຊີຍ<br>-ຄູໃຫ້ເດັກອາສາສະມັກອອກມາປຽບທຽບວັດຖຸໜ້ອຍກວ່າ-ຫຼາຍກວ່າ ໂດຍຄູດປັນຜູ້ຈັດຈີກຊໍໃຫ້ເດັກ<br>-ຍ້ອງຍໍຊົມເຊີຍ-ສຶກສາອົບຮົມເດັກ | -ບົດເພງ<br>ເຄື່ອງຫຼິ້ນ ກໍ່ສ້າງ | -ສັງເກດ ການຫຼິ້ນ ຂອງ ເດັກ. |

**ປະເມີນຜົນການການຮຽນ**

| ລ/ດ | ຫົວຂໍ້ສັງເກດ | ດີ/ຄົນ | ກາງ/ຄົນ | ປັບປຸງ/ຄົນ/ຊື່ |
|---|---|---|---|---|
| 1 | -ສັງເກດການຫຼິ້ນຂອງເດັກ. | | | |

# ບົດສອນ

- ໜ່ວຍ: ແນະນຳຕົນເອງ ອາທິດທີ່ 1: ມື້ທີ່1
- ກິດຈະກຳວົງມົນ ເວລາ 10- 15 ນາທີ
- ຫົວຂໍ້: ການສອນຄະນິດສາດ ລ້ຽງເດັກໃຫ່ຍ

| ຈຸດປະສົງ | ເນື້ອໃນ | ກິດຈະກຳ | ອຸປະກອນ | ປະເມີນ |
|---|---|---|---|---|
| ເພື່ອໃຫ້ເດັກ ສາມາດ ນັບເລກ ປາກເປົ່າແຕ່ 1-7 ໄດ້ | ການນັບເລກ ປາກເປົ່າແຕ່ 1-7 | **ຂັ້ນນຳເຂົ້າສູ່ບົດຮຽນ**<br>- ຄູຈັດເດັກເຂົ້າສູ່ລະບຽບ<br>- ພາເດັກສົນທະນາກ່ຽວກັບຜັກຫຼືຜັກທີ່ເດັກເຄີຍກິນ<br>**ຂັ້ນດຳເນີນການສອນ**<br>- ຄູສະເໜີໃຫ້ເດັກຮູ້ກ່ອນວ່າມື້ນີ້ສາວຄູຈະພາພວກຫຼານຮຽນກ່ຽວກັບການນັບເລກປາກເປົ່າແຕ່ 1 - 7<br>- ສາວຄູນັບ ນັບເລກປາກເປົ່າແຕ່ 1-7 ໃຫ້ເດັກຟັງກ່ອນ<br>- ສາວຄູໃຫ້ເດັກນັບເລກປາກເປົ່າຕາມຫຼັງຄູ1-2 ເທື່ອ<br>- ສາວຄູໃຫ້ເດັກອາມາສະໝັກອອກມານັບປາກເປົ່າໃຫ້ໝູ່ຟັງ 1-3 ຄົນ<br>- ຄູຕິດຕາມຊ່ວຍເຫຼືອເດັກຜູ້ທີ່ເຮັດບໍ່ທັນໄດ້ດີ ( ຍ້ອງຍໍຊົມເຊີຍເດັກ )<br>**ຂັ້ນສະຫຼຸບບົດຮຽນ**<br>- ມື້ນີ້ສາວຄູພາພວກຫຼານຮຽນຫຍັງ ( ໃຫ້ເດັກຕອບ )<br>- ສາວຄູໃຫ້ເດັກອອກມານັບປາກເປົ່າແຕ່ 1-7 ຄືນອີກ.<br>• **ສຶກສາອົບຮົມເດັກ**<br>- ພວກຫຼານເວລາກິນເຂົ້າຄວນກິນຜັກແລະໝາກໄມ້ທຸກມື້ເດີ ຈຶ່ງເຮັດໃຫ້ຮ່າງການເຮົາແຂງແຮງ ແລະ ຖ່າສະດວກດີ | ຕົວເດັກ | ສັງເກດການ ນັບປາກເປົ່າຂອງ ເດັກແຕ່ລະຄົນ |

**ປະເມີນຜົນການການຮຽນ**

| ລ/ດ | ຫົວຂໍ້ສັງເກດ | ດີ/ຄົນ | ກາງ/ຄົນ | ປັບປຸງ/ຄົນ/ຊື່ |
|---|---|---|---|---|
| 1 | -ສັງເກດການນັບປາກເປົ່າຂອງເດັກແຕ່ລະຄົນ | | | |

## a. ເຝິກສອນຕົວຈິງໃນຊັ້ນອະນຸບານ

# ບົດສອນ

ໜ່ວຍ: ເຮືອນຂອງຂ້ອຍ

ກິດຈະກຳວົງມົນ ວິຊາ ຄະນິດສາດ

ຫົວຂໍ້: ປົກປັກຮັກສາເຮືອນ ອາທິດທີ1 ມື້ທີ 2

ຊັ້ນ ອະນຸບານ 1 ເວລາ: 15 - 20 ນາທີ

ວັນທທີສອນ................................. ຜູ້ແຕ່ງ.........................

| ຈຸດປະສົງ | ເນື້ອໃນ | ກິດຈະກຳການຮຽນ - ການສອນ | ເວລາ | ອຸປະກອນ | ປະເມີນ |
|---|---|---|---|---|---|
| | | ➢ **ຂັ້ນນຳເຂົ້າສູ່ບົດຮຽນ**<br>-ຄູໃຫ້ເດັກນັ່ງເປັນວົງມົນ<br>-ກວດກາຈຳນວນພົນ<br>-ພາເດັກສ້າງບັຍາກາດດ້ວຍການຮ້ອງເພງ ເຮືອນຂອງຫຼານ<br>-ທວນຄືນບົດຮຽນເກົ່າມືວານສາວຄູພາພວຫຼານຮຽນກ່ຽວກັບຫຍັງ ? ເດັກຕອບ | 5 | | |
| ໃຫ້ເດັກສາມາດບອກການປົກປັກຮັກສາເຮືອນນຳຄູໄດ້<br><br>ໃຫ້ເດັກສາມາດບອກຕຳແໜ່ງເລຂາຄະນິດລຸ່ມ-ເທິງໄດ້ | ໝັ່ນປັດກວດ, ເຊັດຖູໃຫ້ສະອາດທຸກມື້<br><br>ກາບອກຕຳແໜ່ງເລຂາຄະນິດລຸ່ມ- ເທິງ | ➢ **ຂັ້ນດຳເນີນການສອນ**<br>- ຄູຍົກຮູບພາບຄົນປັດກວດເຮືອນໃຫ້ເດັກສັງເກດເບິ່ງແລ້ວຖາມເດັກວ່ານີ້ແມ່ນຮູບພາບຫຍັງ ? ເຂົາເຮັດຫຍັງແດ່ ? ຖ້າຢາກໃຫ້ເຮືອນສະອາດພວກຫຼານຄວນເຮັດແນວໃດ ?<br>-ເດັກຕອບ, ຍ້ອງຍໍຊົມເຊີຍ<br><br>- ຄູເອົາຮູບວົງມົນວາງໄວ້ເທິງໂຕະ ແລະ ຮູບສາມແຈ ໄວ້ກອງໂຕະແລ້ວຖາມເດັກວ່າຮູບວົງມົນຢູ່ໃສ ແລະ ຮູບສາມແຈ ຢູ່ໃສ່<br>-ເດັກຕອບ, ຍ້ອງຍໍຊົມເຊີຍ<br>-ໃຫ້ເດັກອາສາສະມັກອອກມາເວົ້າໃຫ້ໝູ່ຟັງ 1- 2 ຄົນ<br>-ໃຫ້ເດັກສັງເກດເບິ່ງຮູບເລຂາຄະນິດ (ໂມງງວາງຢູ່ເທິງຝາຫ້ອງຮຽນ ແລະ ເອົາຮູບສາມແຈຕິດໄວ້ລຸ່ມໂມງແລ້ວຖາມເດັກວ່າໂມງຢູ່ໃສ ແລະ ຮູບ | 10 | ຮູບພາບຄົນອະນາໄມ<br><br>ໂຕະ, ຮູບວົງມົນ,ຮູບສາມແຈ | ສັງເກດການສົນທະນາຂອງເດັກແຕ່ລຄົນ<br><br>- ສັງເກດການຕອບຄຳ ການປະກອບຄຳເຫັນຂອງເດັກ. |

| | | | | | |
|---|---|---|---|---|---|
| | | ສາມແຈເດຢູ່ໃສ ?<br>-ໃຫ້ເດັກອອກມາຊີ້ເທິງ - ລຸ່ມພ້ອມທັງເວົ້າໃຫ້ໝູ່ຟັງ<br>1-2 ຄົເດັກຕອບ, ຍ້ອງຍໍຊົມເຊີຍ<br>-ຄູຕິດຕາມແນ່ນຳຊ່ວຍເຫຼືອເດັກແຕ່ລະຄົນ<br>-ພາເດັກນັບເລກແຕ່ 1 - 20 | | | |
| | | ➢ **ຂັ້ນສະຫຼູບ**<br>-ຄູຖາມເດັກວ່າມື້ນີ້ສາວຄູພາພວກຫຼານຮຽນກ່ຽວກັບຫຍັງແດ່?<br>-ເດັກຕອບ ຍ້ອງຍໍຊົມເຊີຍ<br>➢ **ຂັ້ນວັດ ແລະ ປະເມີນ**<br>-ໃຫ້ເດັກອອກມາຊີ້ເທິງ - ລຸ່ມພ້ອມທັງເວົ້າໃຫ້ໝູ່ຟັງ 1-2 ຄົນ<br>-ເດັກຕອບ, ຍ້ອງຍໍຊົມເຊີຍ<br>**+ ສຶກສາອົບຮົມ:**<br>-ເວລາພວກຫຼານເມື່ອເຮືອນຕ້ອງໝັ່ນຮຽນໜັງສື ເພື່ອຈະໄດ້ຮຽນເກັ່ງ ແລະ ພວກຫຼານຕ້ອງເປັນເດັກຄໍາຮູ້ຟັງຄວາມສາວຄູ ແລະ ພໍ່-ແມ່<br>-ໃຫ້ເດັກພັກຜ່ອນ. | 5 | | |

**ປະເມີນຜົນການການຮຽນ**

| ລ/ດ | ຫົວຂໍ້ສັງເກດ | ດີ/ຄົນ | ກາງ/ຄົນ | ປັບປຸງ/ຄົນ/ຊື່ |
|---|---|---|---|---|
| 1 | - ສັງເກດການຕອບຄໍາ ການປະກອບຄໍາເຫັນຂອງເດັກ.<br>- ສັງເກດການສົນທະນາຂອງເດັກແຕ່ລະຄົນ | | | |

## ບົດສອນ

- ໜ່ວຍ: ສິ່ງແວດລ້ອມອ້ອມຕົວເຮົາ ອາທິດທີ່ 3: ມື້ທີ່3
- ກິດຈະກຳວົງມົນ ເວລາ 15 - 20 ນາທີ
- ຫົວຂໍ້: ການສອນຄະນິດສາດ ຂັ້ນອະນຸບານ 1

| ຈຸດປະສົງ | ເນື້ອໃນ | ກິດຈະກຳ | ປະກອນ | ປະເມີນ |
|---|---|---|---|---|

| | | | | |
|---|---|---|---|---|
| ເພື່ອໃຫ້ເດັກສາມາດ ປຽບທຽບ: ໜັກເບົາ ໄດ້ | ການປຽບທຽບ ກະປ໋ອງຊາຍ: ໜັກ, ເບົາ | **ຂັ້ນນໍາເຂົ້າສູ່ບົດຮຽນ**<br>- ຄູຈັດເດັກເຂົ້າສູ່ລະບຽບ<br>- ຄູສົນທະນາກັບເດັກດ້ວຍການສົນທະນາວ່າເວລາໄປວັດເຮົາຈະປະຕິບັດຕົນຄືແນວໃດ<br>**ຂັ້ນດໍາເນີນການສອນ**<br>- ຄູສະເໜີໃຫ້ເດັກຮູ້ກ່ອນວ່າມື້ນີ້ສາວຄູຈະພາພວກຫຼານຮຽນກ່ຽວກັບການປຽບທຽບ: ໜັກເບົາ<br>- ຄູເອົາກະປ໋ອງຊາຍທີ່ກຽມໄວ້ມາວາງໄວ້ຕໍ່ໜ້າເດັກແລ້ວຖາມເດັກວ່ານີ້ແມ່ນຫຍັງ ແລ້ວບອກໃຫ້ເດັກສັງເກດເບິ່ງ ( ໃຫ້ເດັກຕອບຕາມຄວາມເຂົ້າໃຈ )<br>- ສາວຄູໃຫ້ເດັກອອກມາຈັບກະປ໋ອງຊາຍແລ້ວຍໍຂຶ້ນພ້ອມທັງໃຫ້ບອກວ່າກະປ໋ອງໃດໜັກ ແລະ ກະປ໋ອງໃດເບົາກ່ວາກັນ<br>- ສາວຄູໃຫ້ເດັກອາສາສະໝັກອອກມາຍໍກະປ໋ອງພ້ອມທັງບອກໝູ່ວ່າອັນໃດໜັກ ອັນໃດເບົາ 1-2 ຄົນ<br>- ຄູຕິດຕາມຊ່ວຍເຫຼືອເດັກຜູ້ທີ່ເຮັດບໍ່ທັນໄດ້ດີ ( ຍ້ອງຍໍຊົມເຊີຍເດັກ )<br>**ຂັ້ນສະຫຼຸບບົດຮຽນ**<br>- ມື້ນີ້ສາວຄູໃຫ້ພວກຫຼານເຮັດຫຍັງ ( ໃຫ້ເດັກຕອບ )<br>- ສາວຄູໃຫ້ເດັກອອກມາປຽບທຽບໜັກ-ເບົາຄືນອີກ.<br>• **ສຶກສາອົບຮົມເດັກ**<br>- ພວກຫຼານເວລາກິນເຂົ້າໜົມແລ້ວບໍ່ຕ້ອງຖິ້ມສະຊາຍເດີມັນຈະເຮັດເປິເປື້ອນ... | -ກະປ໋ອງ ຊາຍ 2ປ໋ອງ( ໜ | ສັງເກດການ ປຽບທຽບໜັກ, ເບົາຂອງເດັກ ແຕ່ລະຄົນ |

**ປະເມີນຜົນການການຮຽນ**

| ລ/ດ | ຫົວຂໍ້ສັງເກດ | ດີ/ຄົນ | ກາງ/ຄົນ | ປັບປຸງ/ຄົນ/ຊື່ |
|---|---|---|---|---|
| 1 | ສັງເກດການປຽບທຽບໜັກ,ເບົາຂອງເດັກ ແຕ່ລະຄົນ | | | |

# ບົດສອນ

ໜ່ວຍ: ເຮືອນຂອງຂ້ອຍ

ກິດຈະກຳວົງມົນ ວິຊາ ຄະນິດສາດ

ຫົວຂໍ້: ປົກປັກຮັກສາເຮືອນ ອາທິດທີ1 ມື້ທີ 2

ຊັ້ນ ອະນຸບານ2 ເວລາ: 20-25 ນາທີ

ວັນທທີສອນ................................ ຜູ້ແຕ່ງ.......................

| ຈຸດປະສົງ | ເນື້ອໃນ | ກິດຈະກຳການຮຽນ - ການສອນ | ເວລາ | ອຸປະກອນ | ປະເມີນ |
|---|---|---|---|---|---|
| | | ➢ ຂັ້ນນຳເຂົ້າສູ່ບົດຮຽນ<br>- ຄູໃຫ້ເດັກນັ່ງເປັນວົງມົນ<br>- ກວດກາຈຳນວນຜົນ<br>- ພາເດັກສ້າງບັຍາກາດດ້ວຍການຮ້ອງເພງ ເຮືອນຂອງຫຼານ<br>- ທວນຄືນບົດຮຽນເກົ່າມືວານສາວຄູພາພວຫຼານຮຽນກ່ຽວກັບຫຍັງ ? ເດັກຕອບ | 5 | | |
| ໃຫ້ເດັກສາມາດບອກການປົກປັກຮັກສາເຮືອນນຳຄູໄດ້<br><br>ໃຫ້ເດັກສາມາດບອກທິດທາງເລຂາຄະນິດນຳຄູໄດ້. | ໝັ່ນປັດກວດ, ເຊັດຖູໃຫ້ສະອາດທຸກມື້<br><br>ການບອກທິດທາງເລຂາຄະນິດ | ➢ ຂັ້ນດຳເນີນການສອນ<br>-ຄູຍົກຮູບພາບຄົນປັດກວດເຮືອນໃຫ້ເດັກສັງເກດເບິ່ງແລ້ວຖາມເດັກວ່ານີ້ແມ່ນຮູບພາບຫຍັງ ? ເຂົາເຮັດຫຍັງແດ່ ? ຖ້າຢາກໃຫ້ເຮືອນສະອາດພວກຫຼານຄວນເຮັດແນວໃດ ?<br>ເດັກຕອບ, ຍ້ອງຍໍຊົມເຊີຍ<br><br>- ຕິດ ຫຼື ຍົກຮູບເລຂາຄະນິດ ( ຮູບວົງມົນ) : ເບື້ອງຊ້າຍ ແລະ ເບື້ອງຂວາ<br>- ຄູຢືນຢູ່ລະກາງຂອງ ຮູບວົງມົນພ້ອມທັງວາແຂນທັງສອງອອກ<br>- ວາແຂນເບື້ອງຊ້າຍໄປໃສ່ຮູບວົງມົນເບື້ອງຊ້າຍແລ້ວຖາມເດັກວ່າມືສາວຄູຊີ້ໄປເບື້ອງໃດຂອງຮູບວົງມົນ ?( ເບື້ອງຊ້າຍ)<br>- ວາແຂນເບື້ອງຂວາໄປໃສ່ຮູບວົງມົນເບື້ອງຂວາແລ້ວຖາມເດັກວ່າມືສາວຄູຊີ້ໄປເບື້ອງ | 15 | ຮູບພາບຄົນອະນາໄມ<br><br>ຕົວເດັກ, ຮູບວົງມົນ | ສັງເກດການສົນທະນາຂອງເດັກແຕ່ລະຄົນ<br><br>- ສັງເກດການຕອບຄຳ ການປະກອບຄຳເຫັນຂອງເດັກ. |

| | | | | | |
|---|---|---|---|---|---|
| | | ໃດຂອງຮູບວົງມົນ ?<br>( ເບື້ອງຂວາ)<br>- ຄູໃຫ້ເດັກ 2 ຄົນອອກມາຢືນຢູ່ຂ້າງຄູຜູ້ທີ1 ຢືນຢູ່ເບື້ອງຂວາມືຂອງຄູ, ຜູ້ທີ 2 ຢືນຢູ່ເບື້ອງຊ້າຍມືຂອງຄູ, ແລ້ວຖາມເດັກທັງໝົດວ່າ ທ້າວ ກ ແລະ ທາງຂ ຢືນຢູ່ໃດຂອງຄູ ?<br>- ໃຫ້ເດັກອອກມາຊີ້ວ່າທ້າວກ ແລະ ທ້າວ ຂຢູ່ເບື້ອງຊ້າຍ ເບື້ອງຂວາຂອງຄູ<br>- ຄູຕິດຕາມແນະນຳຊ່ວຍເຫຼືອເດັກ | | | |
| | | ➢ ຂັ້ນສະຫຼຸບ<br>- ມື້ນີ້ສາວຄູພາພວກຫຼານຮຽນຫຍັງ ( ໃຫ້ເດັກຕອບ )<br>➢ ຂັ້ນວັດ ແລະ ປະເມີນຜົນ<br>-ໃຫ້ເດັກອອກມາຊີ້ວ່າທ້າວກ ແລະ ທ້າວ ຂ ຢູ່ເບື້ອງຊ້າຍ ເບື້ອງຂວາຂອງຄູ<br>**ສຶກສາອົບຮົມ :**<br>-ເວລາພວກຫຼານເມື່ອເຮືອນຕ້ອງໝັ່ນຮຽນໜັງສື ເພື່ອຈະໄດ້ຮຽນເກັ່ງ ແລະ ພວກຫຼານຕ້ອງເປັນເດັກຄຳຮູ້ຟັງຄວາມສາວຄູ ແລະ ພໍ່-ແມ່<br>- ໃຫ້ເດັກພັກຜ່ອນ. | 5 | | |

**ປະເມີນຜົນການການຮຽນ**

| ລ/ດ | ຫົວຂໍ້ສັງເກດ | ດີ/ຄົນ | ກາງ/ຄົນ | ປັບປຸງ/ຄົນ/ຊື່ |
|---|---|---|---|---|
| 1 | -ສັງເກດການສົນທະນາຂອງເດັກແຕ່ລະຄົນ ສັງເກດການຕອບຄຳ ການປະກອບຄຳເຫັນຂອງເດັກ. | | | |

**ໃຈຄວາມ.** ຕຳແໜ່ງໝາຍເຖິງການບອກທີ່ຕັ້ງຂອງສິ່ງຂອງຕ່າງໆທີ່ແນ່ນອນ ແລະ ຊັດເຈນເຊັ່ນ ຕ່ຳ-ສູງ, ເທິງ-ລຸ່ມ, ໜ້າ-ຫຼັງ, ໃນ-ນອກ, ຊ້າຍ-ຂວາ, ໃກ້-ໄກ, ບ່ອນນັ້ນ-ບ່ອນນີ້.

**ຄຳຖາມຄົ້ນຄ້ວາ**

5. ຈົ່ງອະທິບາຍຄວາມໝາຍຂອງຕຳແໜ່ງ
6. ກິດຈະກຳການຮຽນ-ການສອນ ແລະ ວິທີສອນກ່ຽວກັບຕຳແໜ່ງມີຫຍັງແດ່ ?

7. ການແຕ່ງບົດສອນ ແລະ ຜະລິດອຸປະກອນ ມີຄວາມສຳຄັນແນວໃດ ?

4. **ວຽກບ້ານ:** ໃຫ້ນັກຮຽນແຕ່ລະຄົນແຕ່ງບົດສອນໃນຊັ້ນອະນຸບານ ( ໃຫ້ແຕ່ງກ່ຽວກັບການນັບ ), ພ້ອມທັງຜະລິດສື່ການສອນທີ່ຕົນຈະສອນ.

**ໂຄງສ້າງລາຍວິຊາ**

**ຫຼັກສູດສ້າງຄູອະນຸບານ ພັກສົ້ນປີຮຽນ 4 ພາກຮຽນ**

**ຊື່ວິຊາ : ວິທີສອນຄະນິດສາດສຳລັບເດັກກ່ອນໄວຮຽນ**

**ລະຫັດວິຊາ 0101125**

| | |
|---|---|
| ພາກຮຽນ ແລະ ປີຮຽນ<br>Semester and Year | ລະບົບ 4 ພາກຮຽນ, ປີທີ 3 |
| ຈຳນວນຊົ່ວໂມງ<br>Time | 64 ຊົ່ວໂມງ |
| ຈຳນວນໜ່ວຍກິດ<br>Credit | 3(1-4-2) |
| ອະທິບາຍຄ່າໜ່ວຍກິດ<br>Credit | ວິຊານີ້ມີ 3 ໜ່ວຍກິດ ,ຮຽນ 5 ຊົ່ວໂມງຕໍ່ອາທິດ ,ໃນນັ້ນຮຽນ 40 ຊົ່ວໂມງເປັນພາກ |

| | |
|---|---|
| Explanation | ປະຕິບັດຕົວຈິງ, 24 ຊົ່ວໂມງແມ່ນວຽກມອບໝາຍທັງໝົດ ຕໍ່ 1ພາກຮຽນ |
| ຈຸດປະສົງ | ເພື່ອໃຫ້ຜູ້ຮຽນສາມາດ: |
| Objectives | **1.** ອະທິບາຍແນວຄວາມຄິດກ່ຽວກັບຄະນິດສາດສໍາລັບເດັກກ່ອນໄວຮຽນໄດ້<br>**2.** ຈັດກິດຈະກໍາການຮຽນ-ການສອນຄະນິດສາດແຕ່ລະສົ່ງອາຍຸໄດ້<br>**3.** ແຕ່ງບົດສອນ ແລະ ສອນຕົວຈິງຕາມສົ່ງອາຍຸໄດ້ຢ່າງປະດິດສ້າງ**.** |
| ເນື້ອໃນຫຍໍ້<br>Course Description | ການຈັດການຮຽນ-ການສອນຄະນິດສາດເພື່ອສ້າງປະສົບການໃຫ້ແກ່ເດັກ, ການສ້າງຄວາມສໍາຄັນເບື້ອງຕົ້ນກ່ຽວກັບຄະນິດສາດ, ປະສົບການມູນຖານທາງດ້ານຄະນິດສາດ, ຂັ້ນຕອນ, ວິທີຈັດກິດຈະກໍາສໍາລັບການຈັດປະສົບການດ້ານຄະນິດສາດ, ວິທີສອນຕ່ໍາແໜ່ງ ແລະ ການວັດແທກ ແລະ ການສອນຄະນິດສາດຕາມໜ່ວຍການສອນໃຫ້ແກ່ເດັກແຕ່ລະຊັ້ນຮຽນ. |
| ວິທີດໍາເນີນການສອນ<br>Methodology | ການສອນໄດ້ໃຊ້ວິທີສອນຫຼາຍຮູບແບບເຊັ່ນ: ການສົນທະນາ**,** ການສາທິດ**,** ການລະດົມສະໝອງ**,** ແບບນໍາໃຊ້ສື່, ການສັງເກດ, ການແຕ່ງບົດສອນ ແລະ ສອນຕົວຈິງ |
| ສື່ການຮຽນ-ການສອນ<br>Teaching Aids | - ປຶ້ມຄູ່ມືການຈັດກິດຈະກໍາວົງມົນ<br>- ສື່ເອເລັກໂຫນິກ<br>- ວັດສະດຸອຸປະກອນປະກອບການສອນຕາມຫົວຂໍ້ ແລະ ໜ່ວຍການສອນ. |
| ອາທິດທີ 1<br>Week 1 | **ບົດທີ 1**<br>**ແນວຄວາມຄິດກ່ຽວກັບຄະນິດສາດ**<br>8. ຄວາມໝາຍຂອງຄະນິດສາດສໍາລັບເດັກກ່ອນໄວຮຽນ<br>9. ຄວາມສໍາຄັນຂອງຄະນິດສາດສໍາລັບເດັກກ່ອນໄວຮຽນ<br>10. ຈຸດປະສົງຂອງການສອນຄະນິດສາດສໍາລັບເດັກກ່ອນໄວຮຽນ<br>11. ຫຼັກການສອນຄະນິດສາດສໍາລັບເດັກກ່ອນໄວຮຽນ |
| ອາທິດທີ 2<br>Week 2 | 1. ຂອບເຂດເນື້ອໃນຫຼັກສູດຄະນິດສາດສໍາລັບເດັກອະນຸບານ<br>1.1 ຫຼັກສູດການສຶກສາເດັກກ່ອນໄວຮຽນ<br>1.2 ພັດທະນາດ້ານຄະນິດສາດ<br>- ຂັ້ນອະນຸບານ1 |

- ຂັ້ນອະນຸບານ2

- ຂັ້ນອະນຸບານ3

**2. ອຸປະກອນຄະນິດສາດໃນການຫຼິ້ນເພື່ອຄວາມມ່ວນຊື່ນ**

1.1 ຄະນິດສາດຫຼິ້ນເພື່ອຄວາມມ່ວນຊື່ນ

1.2 ຄວາມໝາຍຂອງສື່ ແລະ ອຸປະກອນການສອນ

1.3 ຂັ້ນຕອນການດຳເນີນການຜະລິດສື່ສຳລັບເດັກ

ອາທິດທີ 3 ບົດທີ 2

Week 3 ການຄຳນວນເບື້ອງຕົ້ນ

1. ການສອນຈຳນວນເບື້ອງຕົ້ນ
2. ການນັບໄປໜ້າ-ກັບຫຼັງ
3. ການນັບຕົວເລກທີ່ຂາດຫາຍໄປ
4. ການສະແດງຈຳນວນດຽວກັນ

ອາທິດທີ 4 **ບົດທີ 2 (ຕໍ່)**

Week 4 ການຄຳນວນເບື້ອງຕົ້ນ

4. ຈຳນວນຫຼາຍກ່ວາໜຶ່ງຫືວໜ່ວຍ-ໜ້ອຍກ່ວາໜຶ່ງຫືວໜ່ວຍ

5. ເກມມາດຕະຖານ(ພື້ນຖານການບວກ-ລົບ)

6. ຈຳນວນໃນຮູບແບບປະສົມ

ອາທິດທີ 5 **ບົດທີ 3**

Week 5 **ວິທີສອນການປຽບທຽບ**

1. ຄວາມໝາຍຂອງການປຽບ
2. ການຈັດກິດຈະກຳການຮຽນ-ການສອນການປຽບທຽບ

2.1 ວິທີສອນການປຽບທຽບໃຫຍ່ກ່ວາ-ນ້ອຍກ່ວາ

2.2 ວິທີສອນການປຽບທຽບຫຼາຍກ່ວາ-ໜ້ອຍກ່ວາ

2.3 ວິທີສອນການປຽບທຽບສັ້ນ-ຍາວ, ສູງກ່ວາ-ຕ່ຳກ່ວາ

2.4 ວິທີສອນການປຽບທຽບໜັກກ່ວາ-ເບົາກ່ວາ

3. ການແຕ່ງບົດສອນ ແລະ ຜະລິດອຸປະກອນ

4.ການເຝິກສອນຕົວຈິງ

3.1 ເຝິກສອນຕົວຈິງໃນຊັ້ນລ້ຽງເດັກໃຫຍ່

3.2 ເຝິກສອນຕົວຈິງໃນຊັ້ນອະນຸບານ

ອາທິດທີ 6 **ບົດທີ 4**

Week 6 **ວິທີສອນການລຽງລຳດັບ**

1. ຄວາມໝາຍຂອງການລຽງລຳດັບ

2. ການຈັດກິດຈະກຳການຮຽນ-ການສອນການລຽງລຳດັບ

2.1 ວິທີສອນການລຽງລຳດັບແຕ່ຕ່ຳຫາສູງ ແລະ ສູງຫາຕ່ຳ

2.2 ວິທີສອນການລຽງລຳດັບສັ້ນຫາຍາວ ແລະ ຍາວຫາສັ້ນ

2.3 ວິທີສອນການລຽງລຳດັບນ້ອຍຫາໃຫຍ່ ແລະ ໃຫຍ່ຫານ້ອຍ

2.5 ວິທີສອນການລຽງລຳດັບຕາມຄວາມໝາຍຂອງຈຳນວນ

3. ການແຕ່ງບົດສອນ ແລະ ຜະລິດອຸປະກອນ

4. ການເຝິກສອນຕົວຈິງ

4.1 ເຝິກສອນຕົວຈິງໃນຊັ້ນລ້ຽງເດັກໃຫຍ່

4.2 ເຝິກສອນຕົວຈິງໃນຊັ້ນອະນຸບານ

ອາທິດທີ 7 ບົດທີ 5

Week 7 ວິທີສອນກ່ຽວກັບການຈຳແນກ

1. ຄວາມໝາຍຂອງການຈຳແນກ.

   1.1 ການຈັດກິດຈະກຳການຮຽນ-ການສອນການຈັດກຸ່ມ

   1.2 ການຈັດກິດຈະກຳການຮຽນ-ການສອນການລວມກຸ່ມ

   1.3 ການຈັດກິດຈະກຳການຮຽນ-ການສອນການແຍກກຸ່ມ

2. ການແຕ່ງບົດສອນ ແລະ ຜະລິດອຸປະກອນ

4. ການເຝິກສອນຕົວຈິງ

   4.1 ເຝິກສອນຕົວຈິງໃນຂັ້ນລ້ຽງເດັກໃຫ່ຍ

   4.2 ເຝິກສອນຕົວຈິງໃນຊັ້ນອະນຸບານ

ອາທິດທີ 8 ບົດທີ 6

Week 8 ວິທີສອນການນັບ

1. ວິທີສອນການນັບ

   1.1 ການຈັດກິດຈະກຳການຮຽນ-ການສອນການນັບປາກເປົ່າ

      a. ການຈັດກິດຈະກຳການຮຽນ-ການສອນການນັບລຽງລຳດັບຕາມ ຄວາມໝາຍຂອງຈຳນວນ

2. ການແຕ່ງບົດສອນ ແລະ ຜະລິດອຸປະກອນ

3. ການເຝິກສອນຕົວຈິງ

   3.1 ເຝິກສອນຕົວຈິງໃນຂັ້ນລ້ຽງເດັກໃຫ່ຍ

   3.2 ເຝິກສອນຕົວຈິງໃນຊັ້ນອະນຸບານ

ອາທິດທີ 9 **ບົດທີ 7**

Week 9 **ວິທີສອນກ່ຽວກັບຕຳແໜ່ງ**

1. ຄວາມໝາຍກ່ຽວກັບຕຳແໜ່ງ

2. ກິດຈະກຳການຮຽນ-ການສອນ ແລະ ວິທີສອນກ່ຽວກັບຕຳແໜ່ງ

2.1 ວິທີສອນກ່ຽວກັບຊ້າຍ-ຂວາ

2.2 ວິທີສອນກ່ຽວໜ້າ-ຫຼັງ

2.3 ວິທີສອນກ່ຽວເທິງ-ລຸ່ມ

2.4 ວິທີສອນກ່ຽວນອກ-ໃນ

2.5 ວິທີສອນກ່ຽວໃກ້-ໄກ

2.6 ວິທີສອນກ່ຽວຜຸ້ນ-ຜີ້

ອາທິດທີ 10

Week 10

ບົດທີ 7 (ຕໍ່)

ວິທີສອນກ່ຽວກັບຕຳແໜ່ງ

3. ການແຕ່ງບົດສອນ ແລະ ຜະລິດອຸປະກອນ

3.1 ການເຝິກສອນຕົວຈິງໃນຂັ້ນລ້ຽງເດັກໃຫ່ຍ

3.2 ເຝິກສອນຕົວຈິງໃນຊັ້ນອະນຸບານ

ການປະເມີນຜົນການຮຽນ

Evaluation

| | |
|---|---|
| ເຂົ້າຮ່ວມຮຽນ | 10 % |
| ກິດຈະກຳບຸກຄົນ | 25 % |
| ກິດຈະກຳກຸ່ມ | 15 % |
| ສອບເສັງກາງພາກ | 20% |
| ສອບເສັງທ້າຍພາກ | 30 % |

ລວມ = 100 %

ເອກະສານອ້າງອີງ

References


2. ກະຊວງສຶກສາທິການ ກົມສາມັນ ແລະ ອະນຸບານສຶກສາ ປີ **2008** *ວິທີສອນຄະນດສາດI*

ລະບົບ **11+2** ນະຄອນຫລວງວຽງຈັນ

**3.** ກະຊວງສຶກສາທິການ ກົມສາມັນ ແລະ ອະນຸບານສຶກສາ ປີ **2008** *ວິທີສອນຄະນິດສາດII* ລະບົບ **11+2** ນະຄອນຫລວງວຽງຈັນ

**4.** ກະຊວງສຶກສາທິການ ກົມສາມັນ ແລະ ອະນຸບານສຶກສາ ປີ **(2011)** *ປຶ້ມແຜນຈັດ*

*ປະສິບ*

*ການ ແລະ ປື້ມຄູ່ມືຄູ* ຊັ້ນອະນຸບານ **1, 2, 3** ນະຄອນຫລວງວຽງຈັນ

**5.** ກະຊວງສຶກສາທິການ ກົມສ້າງຄູ ປີ **(2000)** *ວິຊາຄະນິດສາດສ້າງຄູລ້ຽງເດັກ*

*ອະນຸບານ* ລະບົບ **11+1** ນະຄອນຫລວງວຽງຈັນ

3. ກະຊວງສຶກສາທິການ ແລະ ກິລາສະຖາບັນຄົ້ນຄ້ວາວິທະຍາສາດການສຶກສາ ປີ **(2012)** *ຫຼັກສູດຊັ້ນອະນຸບານສຶກສາ* ນະຄອນຫລວງວຽງຈັນ
4. *ຄະນິດສາດສຳລັບເດັກກ່ອນໄວຮຽນ* (ປະເທດໄທ)
5. ກະຊວງສຶກສາທິການ ກົມສາມັນ ແລະ ອະນຸບານສຶກສາ ປີ **2018** ປື້ມແບບຮຽນ ແລະ ຄູ່ມືຄູຄະນິດສາດ ປ**1** ນະຄອນຫລວງວຽງຈັນ.

ຜູ່ຮຽບຮຽງ ອາຈານ ຄຳໃບ ພະວິໄຊ ວິທະຍາໄລຄູ ດົງຄຳຊ້າງ ເບີໂທ 030 9191819,

Prepared by 02055715941 Email: khambaypvs18@gmail.com